| | |
|---|---|
| ໝວດວິຊາສະເພາະ | ສາຍຄູ ອະນຸບານ ລະບົບພັກຊິ້ນປີຮຽນອະນຸປະລິນຍາ ຕໍ່ເນື່ອງ 4 ພາກຮຽນ |

# ວິທີສອນສິລະປະຫັດຖະກຳ ແຕ້ມສຳລັບເດັກກ່ອນໄວຮຽນ




ສົກປີ 2022

# ວິທີສອນສິລະປະຫັດຖະກຳ ແຕ້ມສຳລັບເດັກກ່ອນໄວຮຽນ

| | | |
|---|---|---|
| ສາຍຄູ ອະນຸບານ ລະບົບພັກສົ້ນປີຮຽນ ອະນຸປະລິນຍາ ຕໍ່ເນື່ອງ 4 ພາກຮຽນ | ປີທີ 3 | ພາກຮຽນ 3 |


ຮຽບຮຽງໂດຍ:
ນາງ ອ່ອນສາ ວິລາວັນ

ກວດແກ້ໂດຍ:
ປທ ນາງ ຫວານໃຈ ບົວກາສີ
ຊອ ນາງ ຈັນສີມາ ຄັດທະວົງ
ນາງ ຄຳບານ ພິມມະຈັກ

**ສົກປີ 2022**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ສະພາວິທະຍາສາດ

ເລກທີ.215.... ສພ.ວສ

# ເອກະສານຮັບຮອງ
## ອະນຸມັດຜ່ານການຮັບຮອງຮຽບຮຽງປຶ້ມສາຍອະນຸບານ

- ອີງຕາມ: ຂໍ້ຕົກລົງວ່າດ້ວຍການຈັດຕັ້ງການເຄື່ອນໄຫວກິດຈະກຳສະພາວິທະຍາສາດຂອງວິທະຍາໄລຄູສາລະວັນປະຈຳປີ 2022.

ຈາກຜົນການກວດສອບ, ກວດກາທາງດ້ານເນື້ອໃນຫຼັກການຂອງບັນດາອະນຸກຳມະການເຫັນວ່າ ບົດຮຽບຮຽງປຶ້ມມີຄວາມຖືກຕ້ອງຕາມເນື້ອໃນຫຼັກສູດທີ່ໄດ້ກຳນົດ ແລະ ສະພາວິທະຍາສາດຈິ່ງໄດ້ຮັບຮອງເອົາປຶ້ມຫົວນີ້ເປັນສ່ວນໜຶ່ງໃນການສິດສອນ ແລະ ຖືກນຳໃຊ້ເຂົ້າໃນກິດຈະກຳການຮຽນ-ການສອນໃນວິທະຍາໄລຄູສາລະວັນ

| ຄະນະກຳມະການກວດສອບ | ລາຍເຊັນ |
|---|---|
| 1. ທ່ານ ປອ ສຸພັນ ເທບພະວົງສາ | |
| 2. ທ່ານ ອຈ ປທ. ແສນຮັກ ບຸນມີ | |
| 3. ທ່ານ ອຈ ນາງ ວັດສະໄໝ ສິດທິຈັກ | |

28 DEC 2022
ທີ່, ສາລະວັນ, ວັນທີ ..............................

ປະທານສະພາວິທະຍາສາດ

ອຈ. ປ. ສົມປອງ ແສນທາວິສຸກ
Sompong SENTHAVISOUK

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ວິທະຍາໄລຄູສາລະວັນ
ຫ້ອງການຄູອະນຸບານ-ປະຖົມ

ເລກທີ.095....ຂປ

# ເອກະສານຮັບຮອງການກວດແກ້ຮຽບຮຽງປຶ້ມ

| ລ/ດ | ຊື່ຫົວຂໍ້ | ຫ້ອງ | ຜູ້ຮຽບຮຽງປຶ້ມ | ຊື່ຜູ້ກວດແກ້ |
|---|---|---|---|---|
| 1 | ວິທີສອນສິລະປະຫັດຖະກຳ-ແຕ້ມ ສຳລັບເດັກກ່ອນໄວຮຽນ | ອະນຸບານ-ປະຖົມ | ນາງ ອ່ອນສາ ວິລາວັນ | ປທ ນາງ ຫວານໃຈ ປົວກາສີ<br>ຊອ ນາງ ຈັນສີມາ ດັດທະວົງ<br>ນາງ ຄຳບານ ພົມມະຈັກ |

| ຄະນະກຳມະການກວດແກ້ຮຽບຮຽງປຶ້ມ | ລາຍເຊັນ |
|---|---|
| ປທ ນາງ ຫວານໃຈ ປົວກາສີ | |
| ຊອ ນາງ ຈັນສີມາ ດັດທະວົງ | |
| ນາງ ຄຳບານ ພົມມະຈັກ | |

ທີ່, ສາລະວັນ, ວັນທີ 27 DEC 2022

**ຫົວໜ້າຫ້ອງການສາຍ**

ແສນຮັກ ບຸນມີ
Sanhack BOUNMY

# ຄຳນຳ

ປື້ມແບບຮຽນວິຊາວິທີສອນສິລະປະຫັດຖະກຳ-ແຕ້ມ ສະບັບນີ້ ໄດ້ຮຽບຮຽງຂຶ້ນ ເພື່ອໃຫ້ບັນດາຄູສອນໄດ້ນຳໄປໃຊ້ໃນການວາງແຜນການສອນ ການແຕ່ງບົດສອນໃຫ້ເຫດເໝາະກັບສະພາບຕົວຈິງຂອງການຈັດການຮຽນ-ການສອນໃນລະບົບ 4 ພາກຮຽນຕໍ່ເນື່ອງພັກສິ້ນປີຮຽນ, ປີທີ 3 ພາກຮຽນ 3 ສາຍຄູອະນຸບານເປັນປື້ມແບບຮຽນວິທີສອນສິລະປະຫັດຖະກຳແຕ້ມສຳລັບເດັກກ່ອນໄວຮຽນ ປະກອບດ້ວຍຄວາມຮູ້ເບື້ອງຕົ້ນກ່ຽວກັບການແຕ້ມ, ທິດສະດີສີ, ແຕ້ມວັດຖຸຕົວຈິງ, ການແຕ້ມຮູບຮັບໃຊ້ການສອນ, ຄວາມຮູ້ເບື້ອງຕົ້ນກ່ຽວກັບສິລະປະຫັດຖະກຳ, ການປັ້ນ, ການພັບແບບຕ່າງໆ ແລະ ການຜະລິດ, ການນຳໃຊ້ ແລະ ປົກປັກຮັກສາ. ປື້ມແຫຼ້ມນີ້ປະກອບມີພາກທິດສະດີ ແລະ ພາກປະຕິບັດຕົວຈິງ.

ການນຳໃຊ້ປື້ແຫຼ້ມນີ້ ຕ້ອງໄດ້ສຶກສາຄວາມເຂົ້າໃຈດ້ານເນື້ອໃນ ແລະ ສຶກສາໃນປື້ມ ຫຼື ເອກະສານທີ່ເອົາມາອ້າງອີງ.

ສຳລັບຜູ້ຮຽບຮຽງ ແລະ ຜູ້ກວດແກ້ປື້ມແຫຼ້ມນີ້ຫວັງວ່າ ປື້ມຈະເປັນເຄື່ອງມືອັນໜຶ່ງທີ່ຊ່ວຍໃຫ້ຄູນຳເອົາຄວາມຮູ້ ແລະ ວິທີການຕ່າງໆ ເຂົ້າໃນການກະກຽມຈັດການຮຽນ-ການສອນ ສິ່ງທີ່ສະເໜີມາໃນປື້ມຄູສອນ ຫຼື ທ່ານຜູ້ອ່ານສາມາດປັບປຸງ ແລະ ພັດທະນາດ້ານກິດຈະກຳໃຫ້ຫຼາກຫຼາຍ ແລະ ເໝາະສົມກັບສະພາບແວດລ້ອມໃຫ້ເກີດປະໂຫຍດແກ່ການພັດທະນາດ້ານການຮຽນ-ການສອນຕໍ່ໄປ. ສຳລັບເນື້ອຫາສາລະແມ່ນປະສະຈາກບໍ່ໄດ້ຄວາມຂາດຕົກບົກຜ່ອງພວກເຮົາຍິນດີຕອນຮັບທຸກຄຳຄິດຄຳເຫັນເພື່ອປັບປຸງປື້ມເຫຼັ້ມນີ້ໃຫ້ສົມບູນດີ.

# ສາລະບານ

ໜ້າ

**ບົດທີ1 ຄວາມຮູ້ເບື້ອງຕົ້ນກ່ຽວກັບການແຕ້ມ**

1. ຄວາມໝາຍການແຕ້ມ.....1
2. ຈຸດປະສົງຂອງການແຕ້ມ.....1
3. ຄວາມຮູ້ກ່ຽວກັບເສັ້ນພື້ນຖານ.....1

3.1 ເສັ້ນພື້ນຖານ......1

3.2 ຮູບພື້ນຖານ......2

**ບົດທີ 2 ທິດສະດີສີ**

1. ຄວາມສໍາຂອງແມ່ສີ.....6
2. ແມ່ສີ.....6
3. ວິທີປະສົມສີ.....6
4. ການຈາແນກສີ.....10

4.1 ສີຮ້ອນ.....10

4.2 ສີເຢັນ.....10

5. ເຕັກນິກການລະບາຍສີ......12
6. ການຜະລິດສີຈາກທໍາມະຊາດ.....14

✳ການຫຼົ້ນສີປະເພດຕ່າງໆ......17

**ບົດທີ 3 ແຕ້ມຕາມວັດຖຸຕົວຈິງ**

1. ຫຼັກການ ແລະ ວິທີການແຕ້ມ......27
2. ຫຼັກການ ແລະ ວິທີການແຕ້ມປະກອບການສອນໃນຊັ້ນອະນຸບານ 1,2,3.....27
3. ຫຼັກການ ແລະ ວິທີການແຕ້ມຮູບເໝືອນ.....29
4. ວິທີແຕ້ມດອກໄມ້ ແລະ ໃບໄມ້.....30
5. ການຂື້ນໂຄງຮ່າງ.....31
6. ການລະບາຍສີ ແລະ ແສງ-ເງົາ.....32
7. ສິ່ງທີ່ຄວນເອົາໃຈໃສ່.....33

**ບົດທີ 4 ການແຕ້ມຮູບເພື່ອຮັບໃຊ້ການສອນ**

1. ແຕ້ມຮູບຕາ່ງໆ......................................................................34
2. ແຕ້ມຮູບປະກອບບົດເລື່ອງ ......................................................................34
3. ການແຕ້ມຕົວອັກສອນລາວ......................................................................36
4. ແຕ້ມຮູບປະດັບປະດາ ແລະ ປະດິດຈາກວັດສະດຸທີ່ເສດເຫຼືອ ......................................................................37
4.1 ປະດັບປະດາຜະໜັງກຽດ......................................................................37
4.2 ປະດັບປະດາຮູບພື້ນຖານຕ່າງໆ ......................................................................37
4.3 ປະດັບປະດາວັດສະດຸທີ່ເສດເຫຼືອຕ່າງໆ......................................................................43

**ບົດທີ 5 ຄວາມຮູ້ເບື້ອງຕົ້ນກ່ຽວກັບສິລະປະຫັດຖະກຳ**

1. ຄວາມໝາຍ, ຄວາມສຳຄັນຂອງສິລະປະຫັດຖະກຳ......................................................................46
2. ຈຸດປະສົງຂອງສິລະປະຫັດຖະກຳ, ອຸປະກອນຮັບໃຊ້ໃນວິຊາຫັດຖະກຳ......................................................................46
3. ສາຍພົວພັນລະຫວ່າງວິຊາຫັດຖະກຳກັບວິຊາອື່ນໆ ແລະ ກິດຈະກຳສຳລັບເດັກ ......................................................................52

**ບົດທີ່ 6 ການປັ້ນ**

1. ຄວາມໝາຍຂອງການປັ້ນ ......................................................................53
2. ຈຸດປະສົງຂອງການປັ້ນ ......................................................................53
3. ຄຸນປະໂຫຍດຂອງການປັ້ນ ......................................................................53
4. ອຸປະກອນຂອງການປັ້ນ ......................................................................54
5. ການປັ້ນຮູບຕ່າງໆ ......................................................................55
6. ການຮ້ອຍ ......................................................................58

**ບົດທີ 7 ການພັບແບບຕ່າງໆ**

1. ຄວາມໝາຍຄວາມສຳຄັນຂອງການພັບ ......................................................................63
2. ວິທີພັບເຈ້ຍແບບຕ່າງໆ ......................................................................63
3. ການຕັດຕາມແບບຕ່າງ......................................................................77
4. ການຕິດຕາມແບບຕ່າງໆ......................................................................77
5. ການຈີກຕາມແບບ ......................................................................79

**ບົດທີ 11: ການຜະລິດ ແລະ ການນຳໃຊ້ເກມເຂົ້າໃນການສອນອະນຸບານ**

1. ຄວາມໝາຍຄວາມສຳຄັນຂອງເກມການສຶກສາ ...................................................................... 81
2. ຜະລິດເກມແບບຕ່າງໆ ...................................................................... 81
3. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ1......................................................................95
4. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ2 ......................................................................99
5. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ3 ...................................................................... 101
ເຝິກປະຕິບັດຕົວຈິງ...................................................................... 105

ແຕ່ງບົດສອນແຕ່ລະສ່ຳອາຍຸ ແລະ ສອນທົດລອງ........................................................................ 105
ເອກະສາອ້າງອີງ............................................................................................................... 111
ໂຄງຮ່າງວິຊາ ............................................................................................................ 112-115

# ບົດທີ 1

# ຄວາມຮູ້ເບື້ອງຕົ້ນກ່ຽວກັບການແຕ້ມ

ເວລາ 4 ຊົ່ວໂມງ
ຈຸດປະສົງ ໃຫ້ນັກຮຽນສາມາດ

- ບອກຄວາມໝາຍຂອງການແຕ້ມໄດ້.
- ບອກຈຸປະສົງຂອງການແຕ້ມໄດ້
- ອະທິບາຍຄວາມຮູ້ກ່ຽວກັບເສັ້ນພື້ນຖານໄດ້

## 1. ຄວາມໝາຍຂອງການແຕ້ມ

ການແຕ້ມເປັນພາກສ່ວນໜຶ່ງຂອງສິລະປະທີ່ສະແດງໃຫ້ເຫັນເປັນພາບໂດຍຜ່ານການສໍາຜັດດ້ວຍສາຍຕາ ຜົນງານຂອງການແຕ້ມທັງໝົດແມ່ນຜົນງານທີ່ເປັນຮູບປະທໍາ ດັ່ງນັ້ນຈຶ່ງສາມາດໃຫ້ຄວາມໝາຍຂອງການແຕ້ມວ່າ: ການແຕ້ມແມ່ນສິລະປະໃນການຂີດຂຽນໃຊ້ເສັ້ນ ແລະ ສີສັນຕ່າງໆ ປະກອບເຂົ້າກັນໃຫ້ເປັນຮູບພາບຕາມຄວາມຕ້ອງການຂອງຜູ້ແຕ້ມໂດຍອີງໃສ່ຮູບຮ່າງຕົວຈິງຂອງຄົນ, ສັດ ວັດຖຸສິ່ງຂອງທີ່ມີຢູ່ໃນທໍາມະຊາດສັງຄົມ ແລະ ອີງຕາມຮູບຮ່າງທີ່ຄິດໄດ້ຈາກຈິນຕະນາການເຊັ່ນ: ຮູບຜີສາງນາງຮ້າຍ, ຮູບເທວະດາ ແລະ ອື່ນໆ. ດັ່ງນັ້ນມະນຸດເຮົາຈຶ່ງໄດ້ໃຊ້ການແຕ້ມ ເພື່ອພັນລະນາ ແລະ ສ່ອງແສງເຖິງຊີວິດການເປັນຢູ່, ວັດທະນາທໍາສັງຄົມໃນຍຸກໃດໜຶ່ງ (ສະໄໝໃດໜຶ່ງ) ນອກນີ້ຍັງພັນລະນາໃຫ້ເຫັນເຖິງສະພາບແວດລ້ອມຂອງທໍາມະຊາດທີ່ປ່ຽນແປງໄປຕາມລະດູການ.

## 2. ຈຸດປະສົງຂອງການແຕ້ມ

ຈຸດປະສົງຫຼັກຂອງການສອນແຕ້ມໃຫ້ເດັກອະນຸບານເພື່ອ:

- ແນໃສ່ພັດທະນາສັງເກດຂອງເດັກ.
- ໃຫ້ເດັກໄດ້ເຝິກແອບໃຊ້ອຸປະກອນການແຕ້ມຊະນິດຕ່າງໆ.
- ເຝິກແອບການໃຊ້ເສັ້ນພື້ນຖານປະກອບເປັນຮູບພື້ນຖານຕ່າງໆ.
- ເຝິກແອບກ້າມຊີ້ນນ້ອຍໃຫ້ມີການຂະຫຍາຍຕົວ.
- ພັດທະນາແນວຄິດສ້າງສັນຂອງເດັກເຮັດໃຫ້ເດັກເກີດມີຈິດໃຈສະຫງອນມັກຄວາມງາມ.
- ເສີມສ້າງພັດທະນາການ 5 ດ້ານຂອງເດັກໃນຊັ້ນອະນຸບານ.

## 3. ຄວາມຮູ້ກ່ຽວກັບເສັ້ນພື້ນຖານ

### 3.1 ວິເຄາະເສັ້ນພື້ນຖານ

ເສັ້ນພື້ນຖານໄດ້ມາຈາກການຂີດເສັ້ນຈາກຈຸດໜຶ່ງໄປຫາອີກຈຸດໜຶ່ງ ຫຼື ຈາກການຈໍ້າເມັດຫຼາຍໆເມັດຕິດຕໍ່ກັນເປັນເສັ້ນເຊິ່ງລວມມີເສັ້ນຕ່າງໆລຸ່ມນີ້:

ເສັ້ນພື້ນຖານຊະນິດຕ່າງໆທີ່ໃຊ້ປະກອບເປັນຮູບມີຫຼາຍຊະນິດເຊັ່ນ: ເສັ້ນຊື່ນອນ, ເສັ້ນຊື່ຕັ້ງ, ເສັ້ນຊື່ເນີ້ງ ເສັ້ນໂຄ້ງ ຫຼື ເສັ້ນກົ່ງຂວໍາ-ຫງາຍ.

- ເສັ້ນນອນ



- ເສັ້ນຊື່ຕັ້ງ





- ເສັ້ນຊື່ເນີ້ງຊ້າຍ-ຂວາ



- ເສັ້ນກົ່ງຂວ່ຳ



- ເສັ້ນກົ່ງຫງາຍ

### 3.2 ວິເຄາະຮູບພື້ນຖານ

ຮູບພື້ນຖານໄດ້ມາຈາກການຂີດຕໍ່ກັນຂອງເສັ້ນພື້ນຖານໃຫ້ເປັນຮູບພື້ນຖານດັ່ງນີ້:



ຮູບຈະຕຸລັດ ຮູບສີ່ແຈສາກ ຮູບສີ່ແຈຂ້າງຂະໜານ

ຮູບສາມແຈ



ຮູບຄາງໝູ





ຮູບວົງມົນ

ຮູບຫຼາຍແຈ ແລະ ອື່ນໆ



ຮູບດອກຈັນ



- ໃຊ້ເສັ້ນຊື່ນອນ 2 ເສັ້ນ ແລະ ເສັ້ນຊື່ຕັ້ງ 2 ເສັ້ນປະກອບເຂົ້າກັນເຮົາຈະໄດ້ຮູບຈະຕຸລັດ ຫຼື ຈະໄດ້ຮູບສີ່ແຈສາກກໍ່ໄດ້.



ຮູບຈະຕຸລັດ ຮູບສີ່ແຈສາກ

- ໃຊ້ເສັ້ນຊື່ເນີ້ງ 2 ເສັ້ນ ແລະ ເສັ້ນຊື່ນອນ 1 ເສັ້ນ ປະກອບເຂົ້າກັນ ເຮົາຈະໄດ້ຮູບສາມແຈ.



ຮູບສາມແຈ

- ໃຊ້ເສັ້ນຊື່ເນີ້ງ 2 ເສັ້ນ ແລະ ເສັ້ນຊື່ນອນ 2 ເສັ້ນ ປະກອບເຂົ້າກັນ ເຮົາຈະໄດ້ຮູບຄາງຫມູ.



ຮູບຄາງໝູ

- ໃຊ້ເສັ້ນໂຄ້ງ ຫຼື ເສັ້ນກົ່ງ 2 ເສັ້ນ ປະກອບເຂົ້າກັນ ເຮົາຈະໄດ້ຮູບວົງມົນ ຫຼື ຮູບ ໜ່ວຍໄຂ່



ຮູບວົງມົນ



ຮູບໜ່ວຍໄຂ່

- ໃຊ້ເສັ້ນຊື່ນອນ, ເສັ້ນຊື່ເນີ້ງ, ເສັ້ນຊື່ຕັ້ງມາປະກອບເຂົ້າກັນ ເຮົາຈະໄດ້ຮູບຫຼາຍແຈແຕກຕ່າງກັນ.



ຮູບຫຼາຍແຈ

❖ **ການນຳໃຊ້ຮູບພື້ນຖານ**

ເຮົາສາມາດເອົາເສັ້ນພື້ນມາຕໍ່ກັນເປັນຮູບພື້ນຖານມາປະກອບເປັນວັດຖຸ, ຄົນ, ສັດ ແລະ ອື່ນໆ ຕາມຄວາມຕ້ອງການ **ຕົວຢ່າງ:**



ຮູບແກັດ



ຮູບເຮືອນ







ຮູບສັດ

**ກິດຈະກໍາ** ການນໍາໃຊ້ເສັ້ນພື້ນຖານຕໍ່ກັນເປັນຮູບພື້ນຖານປະກອບເປັນວັດຖຸ, ຄົນ, ສັດ ແລະ ອື່ນໆ ຕາມຄວາມຕ້ອງການ.

**ອຸປະກອນ**

- ສໍດໍາ, ບັນທັດ
- ຮູບເສັ້ນພື້ນຖານຫຼາຍຊະນິດ ໃນເຈ້ຍແຜ່ນດຽວກັນ.
- ຮູບສັດ ແລະ ວັດຖຸໃຊ້ສອຍທີ່ປະກອບດ້ວຍເສັ້ນພື້ນຖານ.

**ວິທີດໍາເນີນກິດຈະກໍາ**

- ແບ່ງນັກຮຽນຄູອອກເປັນກຸ່ມຕາມຄວາມເໝາະສົມ ຫຼື ຈະຮັກສາກຸ່ມເກົ່າຈາກກິດຈະກໍາກ່ອນກໍ່ໄດ້.
- ຢາຍຮູບເສັ້ນ, ຮູບສັດ, ຮູບວັດຖຸໃຊ້ສອຍ ທີ່ປະກອບດ້ວຍເສັ້ນພື້ນໃຫ້ແຕ່ລະກຸ່ມສັງເກດ, ສົນທະນາກັນຕາມຄໍາແນະນໍາຂອງຄູລຸ່ມນີ້:
- ຈົ່ງສັງເກດຮູບແລ້ວບອກຊື່ຂອງເສັ້ນຊະນິດຕ່າງໆ
- ຈົ່ງໃຊ້ເສັ້ນຊື່ເຫຼົ່ານີ້ ປະກອບກັນໃຫ້ເປັນ ຮູບສັດ, ວັດຖຸໃຊ້ສອຍທີ່ຕົນມັກ.
- ຫຼັງຈາກນັກຮຽນຄູປຶກສາຮ່ວມກັນໃນກຸ່ມແລ້ວ ໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຊື່ຂອງເສັ້ນຕ່າງໆ. ທີ່ພວກເຂົາຮູ້ຈາກການສັງເກດໃນຮູບທີ່ໃຫ້ກ່ອນນັ້ນພ້ອມທັງລາຍງານ ການໃຊ້ເສັ້ນພື້ນຖານປະກອບເປັນຮູບທີ່ພວກເຂົາແຕ້ມ.
- ຄູສັງລວມຄໍາຕອບຂອງນັກຮຽນພ້ອມທັງສະຫຼຸບກ່ຽວກັບເສັ້ນພື້ນຖານ ແລະ ການນໍາໃຊ້ເສັ້ນປະກອບເປັນຮູບຕ່າງໆ.

## ໃຈຄວາມ

ການຮຽນໃນບົດນີ້ ແມ່ນຮຽນຮູ້ເຖິງຄວາມໝາຍຂອງການແຕ້ມ, ເສັ້ນພື້ນຖານ, ການນໍາໃຊ້ເສັ້ນພື້ນຖານ ແລະພັດທະນາການຮຽນຮູ້ ທາງດ້ານສິລະປະການແຕ້ມຂອງເດັກອະນຸບານ, ເພື່ອໄປຈັດກິດຈະກໍາການຮຽນການສອນໃຫ້ແກ່ເດັກອະນຸບານ, ນອກຈາກນີ້ ຍັງໄດ້ອໍານວຍຄວາມສະດວກໃຫ້ແກ່ເດັກນັກຮຽນຄູຈະນໍາໄປວາງແຜນປະຕິບັດກິດຈະກໍາໃຫ້ສອດຄ່ອງກັບການພັດທະນາ 4 ດ້ານຂອງເດັກອະນຸບານໃນໄລຍະປະຈຸບັນ.

## ວຽກມອບໝາຍ

- ຄົ້ນຄ້ວາສົນທະນາເປັນກຸ່ມ ແລະ ລາຍງານຕາມຫົວຂໍ້ທີ່ຄູໃຫ້.
- ຈົ່ງແຕ້ມຮູບວັດຖຸ ຫຼື ຮູບສັດຕ່າງໆ ໂດຍນໍາອີງໃສ່ຮູບພື້ນຖານເປັນຫຼັກຜູ້ລະ 1 ຜົນງານ.

## ຄໍາຖາມ

1. ການແຕ້ມມີຄວາມໝາຍຄວາມສຳຄັນແນວໃດຕໍ່ກັບເດັກ?
2. ຈຸດປະສົງຂອງການສອນແຕ້ມໃຫ້ເດັກອະນຸບານມີແນວໃດ?
3. ຄວາມຮູ້ພື້ນຖານໄດ້ມາຈາກໃສ?

# ບົດທີ 2

# ທິດສະດີສີ

ເວລາ 4 ຊົ່ວໂມງ

ຈຸດປະສົງ ໃຫ້ນັກຮຽນສາມາດ

- ບອກຄວາມສຳຄັນຂອງແມ່ສີໄດ້.
- ຮູ້ແມ່ສີ, ວິທີປະສົມສີ ແລະ ການຈຳແນກສີໄດ້
- ອະທິບາຍເຕັກນິກການລະບາຍສີໄດ້
- ຜະລິດສີຈາກທຳມະຊາດ ແລະ ນຳໃຊ້ສີຈາກທຳມະຊາດໄດ້
- ການຫຼິ້ນສີແບບຕ່າງໆ

## 1. ຄວາມສຳຄັນຂອງແມ່ສີ

ບັນດາສີສັນຕ່າງໆ ທີ່ເຮົາສາມາດແນມເຫັນໃນທຳມະຊາດນັ້ນ ແມ່ນກຳເນີດມາຈາກແສງສະຫ່ວາງ ເປັນຕົ້ນແມ່ນແສງສະຫ່ວາງຈາກດວງອາທິດສາດສ່ອງລົງມາເຊື່ອມໂຍງກັບທຳມະຊາດເຮັດໃຫ້ສະພາບແວດລ້ອມອ້ອມຂ້າງພວກເຮົາມີສີສັນສວຍງາມ ເບິ່ງແລ້ວມີຊີວິດຊີວາ, ແຕ່ກົງກັນຂ້າມຍາມທີ່ບໍ່ມີແສງສະຫວ່າງຄືຍາມຄໍ່າຄືນບໍ່ມີສີສັນຄືກັບຍາມກາງເວັນ.

ສະນັ້ນ ມີຄວາມສຳຄັນທີ່ສຸດເຮັດໃຫ້ນັກແຕ້ມ ຫຼື ຜູ້ຕ້ອງການໃຊ້ສີມີຄວາມສະດວກສະບາຍໃນການປະສົມສີໄດ້ຫຼາຍສີ.

## 2. ແມ່ສີ

ບັນດາສີສັນຕ່າງໆ ທີ່ເຮົາແນມເຫັນຕາມທຳມະຊາດເຮົາເອີ້ນວ່າ: ສີທີ່ເກີດຈາກທຳມະຊາດ ແຕ່ໄດ້ການສຶກສາຄົ້ນຄ້ວາຂອງນັກວິທະຍາສາດເພິ່ນໄດ້ຮູ້ວ່າ: ບັນດາສີເຫຼົ່ານັ້ນແມ່ນໄດ້ມາຈາກການເຊື່ອມໂຍງ ຫຼື ປະສົມກັບບັນດາແມ່ສີເຊິ່ງລວມມີ ສີເຫຼືອງ, ສີແດງ ແລະ ສີຟ້າ ສີເຫຼົ່ານີ້ເອີ້ນວ່າ: ແມ່ສີ ຫຼື ສີຂັ້ນທີ 1 ເອີ້ນອີກຊື່ໜຶ່ງວ່າສີພື້ນຖານ.



ສີຂັ້ນ 1

## 3. ວິທີປະສົມສີ

ແມ່ນໃຊ້ບ່ວງກາແພຕັກເອົາສີທີ່ເຮົາຕອ້ງການຢາກປະສົມ,ໃນປະລິມານເທົ່າໆກັນ,ໃຊ້ຟອຍທາສີມາຄົນໃຫ້ເຂົ້າກັນເຮົາຈະໄດ້ສີທີ່ເຮົາປະສົມອອກມາ(ຖ້າຢາກປະສົມສີໃໝ່ຕ້ອງລ້າງບ່ວງຕັກສີໃຫ້ສະອາດກ່ອນ).

ຖ້າເຮົາຕ້ອງການສີຕ່າງໆ ນອກຈາກສີຂ້າງເທິງນີ້ເຮົາສາມາດປະສົມໄດ້ໃນປະລິມານເທົ້າກັນດັ່ງລຸ່ມນີ້:

**ການປະສົມສີຂັ້ນ1**



- ສີເຫຼືອງ + ສີແດງ = ສີສົ້ມ



- ສີເຫຼືອງ + ສີຟ້າ = ສີຂຽວ



- ສີແດງ + ສີຟ້າ = ສີມ່ວງ



ສີຂັ້ນສອງ

ການເອົາສີຂັ້ນ 2 ທັງ 3 ສີຂ້າງເທິງນັ້ນມາປະສົມກັບແມ່ສີເທື່ອລະຄູ່ຕາມອັດຕາສ່ວນເທົ່າກັນເຮົາຈະໄດ້ສີຂັ້ນ3 ເຊິ່ງມີ 6 ສີ ດ້ວຍກັນ, ສັງເກດໄດ້ຈາກການປະສົມສີຂ້າງລຸ່ມນີ້:



- ສີແດງ + ສີສົ້ມ = ສີແດງສົ້ມ



- ສີແດງ + ສີມ່ວງ = ສີແດງມ່ວງ



- ສີເຫຼືອງ + ສີສົ້ມ = ສີເຫຼືອງສົ້ມ



- ສີເຫຼືອງ + ສີຂຽວ = ສີເຫຼືອງຂຽວ



- ສີຟ້າ + ສີຂຽວ = ສີຟ້າຂຽວ



- ສີຟ້າ + ສີມ່ວງ = ສີຟ້າມ່ວງ



ສີຂັ້ນ 3

ຖ້າເອົາສີທັງ 3 ຂັ້ນມາຈັດລຽງເປັນວົງມົນໃຫ້ຖືກຕ້ອງເຮົາກໍ່ຈະໄດ້ວົງຈອນຂອງສີລວມມີ 12 ສີດ້ວຍກັນ

## ວົງຈອນຂອງສີ




ເມື່ອສັງເກດວົງຈອນຂອງສີຈະເຫັນວ່າ ບໍ່ມີສີຂາວ, ສີດຳ ແລະ ສີບົວ ຍ້ອນວ່າ ສີຂາວ ແລະ ສີດຳ ເປັນສີພິເສດທີ່ບໍ່ໄດ້ຈັດເຂົ້າໃນວົງຈອນຂອງສີເພາະມັນເປັນສີທີ່ແຍກຄ່າຂອງສີອື່ນຈາງລົງ ແລະ ເຂັ້ມຂຶ້ນເຊັ່ນ: ເອົາສີແດງປະສົມກັບສີຂາວຈະໄດ້ສີບົວ, ຍ້ອນສີແດງຈາງລົງ, ຖ້າເພີ່ມສີຂາວເຂົ້າໄປຕື່ມກໍ່ຈະເຮັດໃຫ້ສີແດງຈາງລົງເລື້ອຍໆ ຈົນເຖິງຈາງສຸດ.

ຕົວຢ່າງ



ສີຂາວ + ສີແດງ = ສີບົວ

ໃນການປະຕິບັດຕົວຈິງຂຶ້ນກັບອັດຕາສ່ວນ ຫຼື ປະລິມານຂອງສີທີ່ເຮົານໍາມາປະສົມສີເຊັ່ນ: ເຮົາສາມາດເອົາແມ່ສີປະສົມກັນເທື່ອລະຄູ່ໃຫ້ໄດ້ສີຂັ້ນ 3 ໂດຍໃຫ້ປະລິມານຂອງສີໃດສີໜຶ່ງຫຼາຍກ່ວາດັ່ງຕົວຢ່າງລຸ່ມນີ້:



ສີແດງ 2 ສ່ວນ + ສີເຫຼືອງ 1 ສ່ວນ = ສີແດງສົ້ມ



ສີເຫຼືອງ 2 ສ່ວນ + ສີຟ້າ 1 ສ່ວນ = ສີເຫຼືອງຂຽວ

**ກິດຈະກໍາ ທົດລອງປະສົມສີ**

**ອຸປະກອນ**

- ສີນໍ້າທີ່ເປັນແມ່ສີມີ ສີແດງ, ສີຟ້າ, ສີເຫຼືອງ.
- ຟອຍທາສີໝາຍເຖິງຟອຍແຕ້ມຮູບຊະນິດແປ ແລະ ກົມ.
- ຈານປະສົມສີ 12 ຫ້ອງ ຫຼື ອຸປະກອນອື່ນ ເພື່ອຮອງຮັບການປະສົມສີ.
- ນໍ້າປະສົມສີ ແລະ ນໍ້າລ້າງ.
- ຈອກ ຫຼື ກະປ໋ອງສໍາລັບໃສ່ນໍ້າ.
- ເຈ້ຍສໍາລັບທົດລອງທາສີ.
- ເຈ້ຍຮູບວົງຈອນຂອງສີທີ່ຫວ່າງເປົ່າ (ຍັງບໍ່ໄດ້ທາສີໃສ່ວົງຈອນສີ).

**ວິທີດໍາເນີນກິດຈະກໍາ**

ຄູສາທິດວິທີປະສົມສີໃຫ້ນັກຮຽນສັງເກດ ນໍາເອົາສີໃສ່ຈານປະສົມສີຫ້ອງລະສີ ເອົານໍ້າມາຢອດໃສ່ແມ່ສີແຕ່ລະສີ ແລ້ວຄົນເພື່ອໃຫ້ສີປະສົມກັບນໍ້າຈົນແຫຼວດີ, ໃນການໃຊ້ຟອຍທາສີຄົນສີແຕ່ລະສີນັ້ນ ຕ້ອງລະວັງຄື ລ້າງຟອຍໃຫ້ສະອາດ, ຖ້າໃຊ້ ຄົນສີໜຶ່ງແລ້ວ ລ້າງບໍ່ສະອາດ ແລະ ນໍາໄປຄົນໃສ່ສີອື່ນຈະເຮັດໃຫ້ແມ່ສີນັ້ນມີການປ່ຽນແປງຈາກສີເດີມເມື່ອປະສົມສີບໍ່ໄດ້ຕາມຈຸດປະສົງ.

ຫຼັງຈາກປະສົມແມ່ສີກັບນໍ້າໃຫ້ແຫຼວດີແລ້ວ ເອົາຟອຍທາສີໃດໜຶ່ງຈຸ່ມລົງສີແດງ, ນໍ້າສີແດງທີ່ຕິດຟອຍໄປໃສ່ອີກຫ້ອງໜຶ່ງຂອງຈານປະສົມສີ ແລະ ລ້າງຟອຍໃຫ້ສະອາດ, ໃຊ້ຟອຍທີ່ລ້າງແລ້ວໄປຈຸ່ມລົງສີເຫຼືອງ ແລ້ວນໍາມາປະສົມສີແດງທີ່ແບ່ງໄວ້ແລ້ວ ແລະ ຄົນສີໃຫ້ເຂົ້າກັນດີ, ຖ້າປະລິມານສີເທົ່າກັນ ກໍ່ຈະເຫັນຜົນເປັນສີສົ້ມ.



ສີເຫຼືອງ + ສີແດງ = ສີສົ້ມ

ໃຊ້ຟອຍທີ່ສະອາດຈຸ່ມລົງສີເຫຼືອງແລ້ວນໍາໄປໃສ່ຫ້ອງໜຶ່ງຂອງຈານປະສົມສີ ລ້າງຟອຍໃຫ້ສະອາດແລ້ວນໍາໄປຈຸ່ມລົງສີຟ້າ ແລະ ນໍ້າທີ່ຕິດຟອຍໄປປະສົມກັບສີເຫຼືອງທີ່ແບ່ງໄວ້ນັ້ນ.ໃຊ້ຟອຍນັ້ນຄົນສີທັງສອງໃຫ້ປະສົມກັນ ຈະເຫັນຜົນອອກມາເປັນສີຂຽວ ແຕ່ຕ້ອງສັງເກດເບິ່ງປະລິມານສີເຫຼືອງ ແລະ ສີຟ້າໃຫ້ເທົ່າໆກັນ ຈຶ່ງຈະອອກມາເປັນສີຂຽວແທ້.



ສີເຫຼືອງ + ສີຟ້າ = ສີຂຽວ

ລ້າງຟອຍໃຫ້ສະອາດແລ້ວນຳໄປຈຸ່ມລົງສີຟ້າ ຫຼັງຈາກນັ້ນນຳເອົາສີທີ່ຕິດຢູ່ໃນຟອຍໄປໄວ້ຫ້ອງໜຶ່ງຂອງຈານປະສົມສີ ແລະ ນຳເອົາສີແດງມາປະສົມໃສ່, ຄົນໃຫ້ເຂົ້າກັນ ໂດຍໃຫ້ປະລິມານແຕ່ລະສີເທົ່າໆ ກັນ ເຮົາກໍ່ຈະໄດ້ຜົນອອກມາເປັນສີມ່ວງ.



ສີຟ້າ + ສີແດງ = ສີມ່ວງ

ການປະຕິບັດຕາມວິທີປະສົມສີຂ້າງເທິງນັ້ນໂດຍໃຊ້ອັດຕາສ່ວນຂອງສີທີ່ຈະປະສົມມີປະລິມານເທົ່າໆ ກັນ 1 ຕໍ່

❖ **ວິທີປະສົມສີສາມາດປະຕິບັດໄດ້ດັ່ງນີ້:**

- ສີແດງ 1 ສ່ວນ ປະສົມກັບ ສີສົ້ມ 1 ສ່ວນ ຈະໄດ້ ສີແດງສົ້ມ
- ສີແດງ 1 ສ່ວນ ປະສົມກັບ ສີມ່ວງ 1 ສ່ວນ ຈະໄດ້ ສີແດງມ່ວງ
- ສີເຫຼືອງ 1 ສ່ວນ ປະສົມກັບ ສີສົ້ມ 1 ສ່ວນ ຈະໄດ້ ສີເຫຼືອງສົ້ມ
- ສີເຫຼືອງ 1 ສ່ວນ ປະສົມກັບ ສີຂຽວ 1 ສ່ວນ ຈະໄດ້ ສີເຫຼືອງຂຽວ
- ສີຟ້າ 1 ສ່ວນ ປະສົມກັບ ສີຂຽວ 1 ສ່ວນ ຈະໄດ້ ສີຟ້າຂຽວ
- ສີຟ້າ 1 ສ່ວນ ປະສົມກັບ ສີມ່ວງ 1 ສ່ວນ ຈະໄດ້ ສີຟ້າມ່ວງ

ສຳລັບສີທັງໝົດ 12 ສີ ນັບທັງສີທີ່ປະສົມໄດ້ໃໝ່ ແລະ ແມ່ສີຕ້ອງຮັກສາໄວ້ໃນແຕ່ລະຫ້ອງຂອງຈານປະສົມສີ ແລະ ລະວັງບໍ່ໃຫ້ປົນກັນ, ເມື່ອເຮົາໄດ້ສີທັງໝົດ 12 ສີແລ້ວ ໃຊ້ຟອຍທາສີທີ່ສະອາດຈຸ່ມລົງສີແດງແລ້ວນຳໄປທາໃສ່ວົງຈອນຂອງສີ ບ່ອນທີ່ມີຊື່ສີແດງ ແລະ ສີອື່ນໆ ກໍ່ປະຕິບັດຕາມວິທີນີ້ຄືກັນ ໂດຍເບິ່ງຕາມຊື່ຂອງສີໃຫ້ກົງກັບສີ ທີ່ຈະທາສີໃຫ້ຖືກຕ້ອງ, ຫຼັງຈາກທາສີໃສ່ວົງຈອນຂອງສີແລ້ວປະໃຫ້ມັນແຫ້ງຈຶ່ງນຳມາສົມທຽບກັບຮູບວົງຈອນຂອງສີສົມບູນທີ່ຢູ່ໃນປຶ້ມແບບຮຽນ ຫຼື ວົງຈອນສີສົມບູນທີ່ຜະລິດຂຶ້ນ

- ແບ່ງນັກຮຽນຄູອອກເປັນ 3-4 ກຸ່ມ, ໃຫ້ແຕ່ລະກຸ່ມ ທົດລອງປະສົມສີ ແລະ ລະບາຍສີໃສ່ວົງຈອນຂອງສີແລ້ວລາຍງານການປະຕິບັດຂອງກຸ່ມຕົນເອງ.
- ຄູສັງລວມຜົນຂອງການທົດລອງປະສົມສີຂອງແຕ່ລະກຸ່ມ.

## 4. ການຈຳແນກສີ

ສີສັນທີ່ເຮົາແນມເຫັນໃນທຳມະຊາດເປັນສີທີ່ຜ່ານການເຊື່ອມໂຍງ ຈາກແສງສະຫວ່າງຢ່າງລະອຽດອ່ອນ ເຮັດໃຫ້ມີຄວາມຫຸ້ຍຍາກຕໍ່ການຈຳແນກສີຕ່າງໆ, ເຖິງຢ່າງໃດກໍ່ຕາມຖ້າເຮົາສັງເກດເບິ່ງສະພາບແວດລ້ອມທີ່ມແສງຕາເວັນໂດດເດັ່ນ ແລະ ສະພາບແວດລ້ອມທີ່ມີເມກເພື່ອບັງແສງຕາເວັນ ເຮົາກໍ່ສາມາດຈຳແນກສີອອກໄດ້ 2 ວັນນະຄື: ວັນນະສີຮ້ອນ ແລະ ວັນນະສີເຢັນ.

ການຈຳແນກສີຕ່າງໆ ສີທີ່ມີໃນທຳມະຊາດ ມີຄວາມແຕກຕ່າງກັນໄປຕາມບັນຍາກາດຂອງແຕ່ລະມື້ເຊັ່ນວ່າ: ຍາມແດດກ້າ, ຍາມເຊົ້າ, ຍາມສວາຍ, ຍາມແລງ ແລະ ຍາມຄ້າຍຄ່ຳກໍ່ມີສີສັນບໍ່ຄືກັນ ຕ້ອງຈຳແນກໃຫ້ອອກວ່າແສງສີແຕ່ລະຍາມໃນໜຶ່ງມື້ມີຄວາມແຕກຕ່າງກັນ.

**ຕາຕະລາງຈຳແນກສີໃນວັນໜຶ່ງ**

| ຕອນ | ແສງ | ເງົາ |
|---|---|---|
| ເຊົ້າ | ສີເຫຼືອງສົ້ມ | ສີມ່ວງຈາງ |
| ສວາຍ | ສີເຫຼືອງ | ສີມ່ວງ |
| ແລງ | ສີແດງສົ້ມ | ສີຟ້າມ່ວງ |

### 4.1 ວິເຄາະວັນນະສີຮ້ອນ

ສີໃນວັນນະຮ້ອນ ສັງເກດເຫັນໄດ້ຈາກເຫຼັກທີ່ເຮົາເຜົາໄຟໃຫ້ແດງ, ກອງໄຟກຳລັງລຸກໄໝ້ຢູ່ ແສງສະຫວ່າງຈາກດວງຕາເວັນເຊັ່ນ: ຍາມແລງ, ຍາມຕາເວັນຂຶ້ນ.... ຖ້າເບິ່ງໃນວົງຈອນຂອງສີ, ບັນດາສີທີ່ຢູ່ໃນວັນນະຮ້ອນແມ່ນນັບແຕ່ສີເຫຼືອງລົງມາທາງເບື້ອງຊ້າຍມືຈົນມາຮອດສີແດງມ່ວງ.

### 4.2 ວິເຄາະວັນນະສີເຢັນ

ສີທີ່ຈັດເຂົ້າໃນວັນນະສີເຢັນ ແມ່ນນັບແຕ່ສີເຫຼືອງຂຽວ, ສີຂຽວລົງມາເບື້ອງຂວາມືຈົນຮອດສີມ່ວງ, ວັນນະສີເຢັນ ສັງເກດເຫັນໄດ້ຈາກສະພາບແວດລ້ອມຍາມຟ້າບົດ, ຟ້າຄຶ້ມຝົນ, ທົ່ງຫຍ້າບ່ອນຮົ່ມເຢັນເປັນສີທີ່ໃຫ້ຄວາມງຽບສະຫງົບ, ສະບາຍຕາເວລາເບິ່ງເພາະວ່າເປັນສີທີ່ບໍ່ບາດຕາ ມີລັກສະນະລຽບໆ ເບົາສະບາຍ.

ນອກຈາກຮູ້ຈຳແນກສີໃນວົງຈອນຂອງສີ ແລະ ໃນທຳມະຊາດແລ້ວ ຍັງຈຳເປັນຕ້ອງຮູ້ກ່ຽວກັບສີຕັດກັນ ແລະ ສີກົມກືນກັນ, ສີຕັດກັນເປັນສີທີ່ຢູ່ກົງກັນຂ້າມກັນໃນວົງຈອນຂອງສີເຊັ່ນ: ສີແດງກັບສີຂຽວ, ສີສົ້ມກັບສີຟ້າ ສີເຫຼືອງກັບສີມ່ວງ...... ການໃຊ້ສີຕັດກັນເຮັດໃຫ້ຮູບມີລັກສະນະບາດຕາຕື່ນເຕັ້ນ, ມີການເຄື່ອນໄຫວ, ສ່ວນສີກົມກືນກັນເປັນສີທີ່ຢູ່ກຸ່ມດຽວກັນເຊັ່ນ: ກຸ່ມສີຟ້າ, ມີສີຟ້າມ່ວງ, ສີຟ້າຂຽວ, ກຸ່ມສີແດງມີສີແດງສົ້ມ, ສີແດງມ່ວງ...ສີປະເພດນີ້ໃຫ້ຄວາມຮູ້ສຶກສະບາຍໃຈ, ເປັນຄື້ນສີທີ່ໃຫ້ອາລົມດີແກ່ຜູ້ເຫັນ.




ຮູບການຈຳແນກສີ

**ກິດຈະກຳ** ລະບາຍສີຕາມວັນນະສີຮ້ອນ ແລະ ວັນນະສີເຢັນ.

**ອຸປະກອນ**

- ສີນ້ຳ 12 ສີ ຕາມວົງຈອນຂອງສີ
- ຈານຮອງສີ ຫຼື ຈານປະສົມສີ

- ຟອຍທາສີຊະນິດກົມ
- ຮູບວັນນະສີຮ້ອນ, ສີເຢັນທີ່ຍັງບໍ່ທັນລະບາຍສີ.
- ນໍ້າລ້າງ, ນໍ້າປະສົມສີ, ແພເຊັດ, ເຈ້ຍທົດລອງທາສີ.

| | | | |
|---|---|---|---|
| ສີເຫຼືອງ | | ສີເຫຼືອງຂຽວ | |
| ສີເຫຼືອງສົ້ມ | | ສີຂຽວ | |
| ສີສົ້ມ | | ສີຟ້າຂຽວ | |
| ສີແດງສົ້ມ | | ສີຟ້າ | |
| ສີແດງ | | ສີຟ້າມ່ວງ | |
| ສີແດງມ່ວງ | | ສີມ່ວງ | |

ຮູບວັນນະຂອງສີ 2 ວັນນະ ທີ່ຍັງບໍ່ທັນໄດ້ລະບາຍສີ

**ວິທີດຳເນີນກິດຈະກຳ**

ຄູສາທິການລະບາຍສີຕາມວັນນະຂອງສີດັ່ງລຸ່ມນີ້:

- ເອົາຮູບວັນນະສີຮ້ອນ, ວັນນະສີເຢັນ ທີ່ຍັງບໍ່ທັນໄດ້ລະບາຍສີມາວາງໄວ້ໜ້າໂຕະແລ້ວ ໃຊ້ຟອຍທາສີຈຸ່ມລົງສີ ເຫຼືອງທີ່ຢູ່ໃນຈານປະສົມສີ, ນຳສີເຫຼືອງທີ່ຕິດຢູ່ຟອຍມາລະບາຍສີໃສ່ຫ້ອງທຳອິດ ທີ່ຢູ່ເບື້ອງເທິງຂອງວັນນະສີຮ້ອນ, ຫຼັງຈາກນັ້ນກໍ່ເອົາສີເຫຼືອງສົ້ມ, ສີສົ້ມ, ສີແດງສົ້ມ, ສີແດງ, ສີແດງມ່ວງ ມາລະບາຍໃສ່ແຕ່ລະຫ້ອງຕາມລຳດັບລົງມາ. ໃນການລະບາຍສີໃສ່ແຕ່ລະຫ້ອງຕ້ອງລະວັງບໍ່ໃຫ້ສີອອກນອກຂອບເຂດຂອງເສັ້ນ, ຫຼັງຈາກລະບາຍສີໃນວັນນະສີຮ້ອນໝົດແລ້ວ ຈຶ່ງມາລະບາຍສີໃສ່ໝວດວັນນະສີເຢັນ ໂດຍເລີ່ມລະບາຍສີເຫຼືອງຂຽວກ່ອນຮອງລົງມາລະບາຍ ສີຂຽວ, ສີຟ້າຂຽວ, ສີຟ້າ, ສີຟ້າມ່ວງເປັນລຳດັບ ເມື່ອສຳເລັດແລ້ວປະໄວ້ໃຫ້ແຫ້ງເຮົາກໍ່ຈະໄດ້ສີທີ່ເປັນວັນນະຂອງສີຮ້ອນ ແລະ ວັນນະສີເຢັນຕາມລຳດັບດັ່ງລຸ່ມນີ້



ຮູບວັນນະຂອງສີ 2 ວັນນະທີ່ລະບາຍສີແລ້ວ

- ຄູຢາຍອຸປະກອນໃຫ້ນັກຮຽນທົດລອງລະບາຍສີຕາມວັນນະຂອງສີ

- ຄູນຳເອົາຜົນງານຂອງແຕ່ລະກຸ່ມມາສົມທຽບພ້ອມທັງແນະນຳເພີ່ມເຕີມ

## 5. ເຕັກນິກການລະບາຍສີ

ໃນການແຕ້ມຮູບ ແລະ ຮູບທີ່ແຕ້ມອອກມານັ້ນ ສີສັນເປັນສິ່ງໜຶ່ງທີ່ດຶງດູດສາຍຕາຂອງເດັກ ແລະ ຜູ້ເບິ່ງ, ເດັກຈະມີຄວາມສົນໃຈ ຫຼື ເບື່ອໜ່າຍຕໍ່ອຸປະກອນການສອນທີ່ເປັນຮູບແຕ້ມສ່ວນໃຫ່ຍມີສາເຫດມາຈາກສີສັນຂອງຮູບນັ້ນ ເພາະວ່າເດັກຈະມັກສີທີ່ໂດດເດັ່ນ, ຈະແຈ້ງ, ລະອຽດດີ, ເບິ່ງແລ້ວເຂົ້າໃຈງ່າຍ ເຫຼົ່ານັ້ນເປັນສິ່ງສຳຄັນຕໍ່ຈິດຕະສາດຂອງເດັກກ່ຽວກັບສີ.

ການລະບາຍສີເຮົາຕ້ອງອີງໃສ່ຈິດຕະສາດຂອງເດັກເຊັ່ນ ເດັກມັກສີຈະແຈ້ງສົດໃສເຮົາກໍ່ຄັດເລືອກສີທີ່ຈະແຈ້ງລະບາຍສີໃສ່ຮູບໃຫ້ເໝາະສົມ. ສີທີ່ເໝາະສົມໃຊ້ໃນຊັ້ນອະນຸບານ ມີສໍສີໄມ້, ສີນ້ຳສີທຽນ…ສີແຕ່ລະຊະນິດມີເຕັກນິກການລະບາຍທີ່ແຕກຕ່າງກັນຄື:

- **ການລະບາຍສີໄມ້**

ຕ້ອງແຫຼມສໍສີໃຫ້ແຫຼມຢູ່ສະເໝີ, ເພາະວ່າຕ້ອງການເສັ້ນຂອງສີທີ່ລະອຽດປະກອບກັນ. ເວລາທາສີສແມ່ນໃຫ້ຂີດເສັ້ນສີຕິດຕໍ່ກັນຖີ່ໆ, ຖ້າຢາກໄດ້ເສັ້ນເຂັ້ມກໍລະບາຍສີລົ້ມຄືນດ້ວຍການເນັ້ນສໍສີໃຫ້ໜັກຂຶ້ນ, ຖ້າຢາກໃຫ້ສີຈາງກໍຂີດເສັ້ນສີຫ່າງອອກ ຫຼື ຫຼຸດຜ່ອນນ້ຳໜັກຂອງຄອງສໍສີລົງ, ຖ້າຢາກໃຫ້ສໍສີໄມ້ເຂັ້ມກ່ວາສີໄມ້ທຳມະດາໃຫ້ເອົາປາຍແຫຼມຂອງສໍສີຈຸ່ມນ້ຳໜ້ອຍໜຶ່ງ ແລ້ວຈຶ່ງລະບາຍຈະເຮັດໃຫ້ການລະບາຍສີເຂັ້ມດີກ່ວາປົກກະຕິ.



ຮູບລະບາຍສີດ້ວຍສໍສີໄມ້

- **ການລະບາຍສີດ້ວຍສີທຽນ**

ການໃຊ້ສີທຽນລະບາຍສີເໝືອນກັນກັບການລະບາຍສີສໍ ສີໄມ້ ໂດຍໃຊ້ເສັ້ນສີປະກອບກັນໃຫ້ມີສີສັນ ແຕ່ການໃຊ້ສີທຽນບໍ່ຕ້ອງການແຫຼມສີ (ບໍ່ໃຫ້ແຫຼມ) ພຽງແຕ່ທາໄປສີກໍຫຼັ້ນໄປເອງ ເວລາທາເນື້ອທີ່ກ້ວາງໃຫ້ເນັ້ງສີທຽນລົງຫຼາຍໆ, ເມື່ອທາຮອດບ່ອນແຄບຕ້ອງລະມັດລະວັງບໍ່ໃຫ້ສີອອກນອກເສັ້ນຮູບຮ່າງທີ່ແຕ້ມໄວ້.




ຮູບທີ່ລະບາຍສີດ້ວຍສີທຽນ

- **ການລະບາຍສີດ້ວຍສີນໍ້າ**

ການໃຊ້ສີນໍ້າເພື່ອລະບາຍລົງໃນຮູບເປັນເລື່ອງຫຍຸ້ງຍາກໃນການໃຊ້ໃນຊັ້ນອະນຸບານ, ແຕ່ກໍ່ເປັນສີທີ່ເດັກມັກຢາກຫຼິ້ນຢາກທົດລອງ, ດັ່ງນັ້ນຈຶ່ງຄວນນໍາມາໃຊ້ໃນຊັ້ນອະນຸບານ.

ວິທີລະບາຍສີນໍ້າ ທໍາອິດເອົາສີອອກມາໃສ່ຈານປະສົມສີແລ້ວເອົານໍ້າມາປະສົມກັບສີໜ້ອຍໜຶ່ງ, ໃຊ້ຟອຍຄົນໃຫ້ສີປະສົມກັບນໍ້າຈົນໃຫ້ສີແຫຼວລະອຽດດີ ຫຼັງຈາກນັ້ນ ຈຶ່ງນໍາໄປລະບາຍລົງໃນຮູບ. ການລະບາຍສີໃສ່ເນື້ອທີ່ກວ້າງຕ້ອງໃຊ້ຕ້ອງໃຊ້ຟອຍໃຫ່ຍ ແລະ ເນື້ອທີ່ແຄບໃຫ້ໃຊ້ຟອຍນ້ອຍ ເວລາທາໄປໃກ້ເສັ້ນລະວັງບໍ່ໃຫ້ສີອອກນອກຂອບເຂດຮູບຮ່າງທີ່ແຕ້ມດ້ວຍເສັ້ນສໍ ແລະ ບໍ່ຄວນທາຊໍ້າໄປຊໍ້າມາຫຼາຍເທື່ອເພາະຈະເຮັດໃຫ້ເຈ້ຍຟຸ່ຍ ແລະ ຂາດໄດ້.





ຮູບທີ່ລະບາຍສີດ້ວຍສີນໍ້າ

**ກິດຈະກຳ** ທົດລອງລະບາຍສີ

**ອຸປະກອນ**

- ຮູບທີຍັງບໍ່ທັນໄດ້ລະບາຍສີເຊັ່ນ: ຮູບເຄື່ອງໃຊ້, ຮູບໝາກໄມ້, ຮູບສັດ ແລະ ອື່ນໆຕາມຄວາມເໝາະສົມ.
- ສີໄມ້, ສີທຽນ, ສີນໍ້າ ( ໃຫ້ເລືອກໃຊ້ສີໃດສີໜຶ່ງ ).
- ຖ້າເລືອກໃຊ້ສີໄມ້ຕ້ອງມີໂຮງແຫຼມສໍ ຫຼື ມີດຄັດເຕີ ແລະ ນໍ້າສໍາລັບຈຸ່ມປາຍຂອງສໍສີ.
- ຖ້າໃຊ້ສີນໍ້າຕ້ອງມີຟອຍທາສີ, ນໍ້າລ້າງ, ນໍ້າປະສົມສີ, ຈານປະສົມສີ, ແພເຊັດ ແລະ ອື່ນໆ.
- ຖ້າໃຊ້ສີທຽນບໍ່ຕ້ອງມີອຸປະກອນເສີມກໍ່ໄດ້ເລີຍ ສະແດງວ່າບໍ່ຕ້ອງການແຫຼມ.

**ວິທີດຳເນີນກິດຈະກຳ**

ຄູສາທິດວິທີລະບາຍສີໃຫ້ນັກຮຽນຄູສັງເກດ ດັ່ງນີ້:

- ຄູນຳເອົາຮູບທີ່ຍັງບໍ່ທັນທາສີມາວາງໄວ້ໜ້າພຽງ ຫຼື ໜ້າໂຕະເອົາສີອອກມາເລືອກວ່າຈະລະບາຍສີໃດກ່ອນ, ສີໃດຕາມຫຼັງ, ຕ້ອງຄິດກ່ອນວ່າຄວາມຈິງເຮົາຄວນໃຊ້ສີໃດໃຫ້ເໝາະສົມເຊັ່ນ ລະບາຍສີໝາກໂປ່ມ ຕ້ອງໃຊ້ສີແດງ, ຖ້າຢາກໃຫ້ເປັນໝາກໂປ່ມສຸກ, ເມື່ອຕັດສິນໃຈໄດ້ແລ້ວກໍນັ່ງໃຫ້ທ່ຽງ ແລະ ເອົາສີມາລະບາຍບາງໆກ່ອນຈະເລີ່ມຈາກຈຸດໃດກ່ອນກໍ່ໄດ້, ຫຼັງຈາກນັ້ນຈຶ່ງຄ່ອຍທາເຂັ້ມຂຶ້ນໂດຍສົມທຽບໃສ່ຕົວຈິງບ່ອນໃດຖືກແສງບ່ອນນັ້ນຈະມີສີຈາງ ແລະ ບ່ອນໃດມີເງົາບ່ອນນັ້ນຈະມີສີເຂັ້ມ ແລະ ທາບ່ອນທີ່ຍັງບໍ່ທັນລະອຽດໃຫ້ສຳເລັດ ເທົ່ານີ້ເຮົາກໍຈະໄດ້ຮູບທີ່ມີສີສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນາມຄວາມຕ້ອງການ.
- ໃຫ້ແຕ່ລະກຸ່ມທົດລອງທາສີໃສ່ຮູບທີ່ກຽມໄວ້.
- ຄູຄັດຈ້ອນກຸ່ມທີ່ລະບາຍສີໄດ້ດີ ເພື່ອເປັນແບບຢ່າງໃຫ້ກຸ່ມອື່ນ.

## 6. ການຜະລິດສີຈາກທຳມະຊາດ

ການຜະລິດສີຈາກທຳມະຊາດແມ່ນຜະລິດຈາກ ໃບໄມ້, ໝາກໄມ້, ຫົວ ແລະ ເປືອກໄມ້ ເຊັ່ນ: ສີຂຽວ, ສີແດງສີເຫຼືອງ ແລະ ສີມ່ວງ...

## 1. ສີຂຽວທຳມະຊາດ

ສີຂຽວໄດ້ມາຈາກໃບເຕີຍ ແລະ ໃບໄມ້ຊະນິດອື່ນໆ ທີ່ເປັນສີຂຽວ.

**ອຸປະກອນ**

- ໃບເຕີຍ ຫຼື ໃບໄມ້ທີ່ເປັນສີຂຽວ
- ນ້ຳສະອາດ, ຊາມ ຫຼື ຖຸໃນນ້ຳ
- ໄມ້ຄ້ອນ ຫຼື ຄົກສາກສຳລັບທັບໄບເຕີຍ
- ໄມ້ແປ້ນຮອງ ຫຼື ຂຽງ
- ແພສຳລັບຕອງຟອຍທາສີ, ເຈ້ຍຂາວສຳລັບທົດລອງທາສີ
- ສານສົ້ມ (ຫີນສົ້ມ, ນ້ຳສົ້ມ, ໝາກນາວ, ໝາກເຟືອງ).

**ວິທີຜະລິດ**

- ເອົາໃບເຕີຍໄປລ້າງດ້ວຍນ້ຳໃຫ້ສະອາດ ແລ້ວເອົາມາວາງໃສ່ຂຽງ, ໃຊ້ໄມ້ຄ້ອນທັບໃບເຕີຍໃຫ້ມຸ່ນ ຫຼື ຕຳໃຫ້ມຸ່ນນຳໃບເຕີຍມຸ່ນມາປະສົມນ້ຳໃນຊາມ ຖ້າຢາກໃຫ້ສີຂຽວເຂັ້ມບໍ່ຄວນປະສົມນ້ຳຫຼາຍ, ຫຼັງຈາກປະສົມນ້ຳແລ້ວໃຊ້ມືຍ່ອງ ແລະ ບີບເອົານ້ຳສີຂຽວຈາກໃບເຕີຍອອກຈົນໝົດເຮົາຈະເຫັນນ້ຳສີຂຽວປົນກັບໃບເຕີຍມຸ່ນຢູ່.
- ເອົານ້ຳສີຂຽວໄປຕອງໃສ່ແພບາງທີ່ກຽມໄວ້ເພື່ອຕອງເອົາແຕ່ນ້ຳສີຂຽວສະອາດ, ເທົ່ານີ້ເຮົາກໍ່ຈະໄດ້ສີຂຽວສົດຈາກທຳມະຊາດ.
- ເພື່ອຄວາມແນ່ໃຈຢາກຮູ້ວ່າ ແມ່ນສີຂຽວທີ່ໃຊ້ໄດ້ ຫຼື ບໍ່ ຕ້ອງໄດ້ພິສູດໂດຍການໃຊ້ຟອຍທາສີຈຸ່ມລົງນ້ຳສີຂຽວແລ້ວມາລະບາຍໃສ່ເຈ້ຍລອງເບິ່ງຈະຮູ້ວ່າໃຊ້ໄດ້ ຫຼື ບໍ່ ຖ້າຢາກຮັກສາສີຂຽວນີ້ໄວ້ໃຊ້ ດົນໃຫ້ປະສົມສານສົ້ມແລ້ວເກັບມ້ຽນໄວ້.



ສີນ້ຳໃບເຕີຍ

## 2. ສີແດງທຳມະຊາດ

ສີແດງທຳມະຊາດສາມາດຜະລິດຈາກ ໝາກຊາຕີ, ເປືອກສຽດ, ເປືອກໄມ້ດູ່ ແລະ ອື່ນໆ.

**ອຸປະກອນ**

- ໝາກຊາຕີ, ຄົກ, ສາກ, ແພສຳລັບຕອງ, ສານສົ້ມ ຫຼື ໃບໄມ້ທີ່ມີລົດສົ້ມ.

**ວິທີຜະລິດ**

ແກະເອົາແກ່ນໝາກຊາຕີອອກຈາກເປືອກ, ນຳມາຕຳໃຫ້ແຫຼກ, ຈາກນັ້ນປະສົມກັບນໍ້າເລັກໜ້ອຍໃຊ້ຜ້າບາງໆມາຕອງ ແລະ ປັ້ນກໍ່ຈະໄດ້ນຳສີແດງອອກກຳຈະໄດ້ສີແດງອອກສົ້ມຈາກໝາກຊາຕີ, ຖ້າເປັນໝາກຊາຕີສຸກ ເອົາແຊ່ນໍ້າໄວ້ໄລຍະໜຶ່ງໃຊ້ຜ້າຕອງ ແລະ ປັ້ນກໍ່ຈະໄດ້ນຳສີແດງ.



ສີນໍ້າຈາກໝາກໄມ້

3. **ສີເຫຼືອງທຳມະຊາດ**

ສີເຫຼືອງໄດ້ຈາກຂີ້ໝີ້ນທີ່ມີຕາມບ້ານ ຫຼື ທອງຖິ່ນ ແລະ ຜົງກະຣີ່ທີ່ໃຊ້ປະສົມອາຫານ.

**ອຸປະກອນ**

- ຫົວຂີ້ໝີ້ນ, ແພສຳລັບຕອງ, ວັດຖຸສຳລັບບັນຈຸສີ, ໄມ້ສຳລັບທັບ, ໄມ້ຮອງເວລາທັບ, ສານສົ້ມສຳລັບປະສົມສີເພື່ອຮັກສາໄວ້ດົນ.

**ວິທີຜະລິດ**

- ເອົາຫົວຂີ້ໝີ້ນໄປລ້າງໃຫ້ສະອາດ
- ເອົາຂີ້ໝີ້ນມາໃສ່ຜ້າແລ້ວຫໍ່ຜ້າເຂົ້າກັນເຮັດເປັນພົກໄວ້
- ໃຊ້ໄມ້ຄ້ອນທັບຫົວຂີ້ໝີ້ນທີ່ຢູ່ໃນພົກຜ້າໃຫ້ມຸ່ນ. ການທັບຕ້ອງລະວັງບໍ່ໃຫ້ທັບແຮງເກີນໄປເພາະນໍ້າສີຂອງຂີ້ໝີ້ນພົ້ງອອກ.
- ຫຼັງຈາກທັບໃຫ້ມຸ່ນແລ້ວກໍ່ບິດ ແລະ ປັ້ນເອົານໍ້າສີເຫຼືອງຈາກຂີ້ໝີ້ນໃສ່ວັດຖຸທີ່ຮອງຮັບນໍ້າສີຂີ້ໝີ້ນ, ຖ້າຢາກໃຊ້ກໍ່ສາມາດໃຊ້ໄດ້ທັນທີ ແຕ່ຖ້າຈະຮັກສາໄວ້ດົນກໍ່ຕ້ອງປະສົມສານສົ້ມເຂົ້າໄປ ແລະ ເກັບຮັກສາໄວ້.



ສີນ້ຳຂີ້ໝິ້ນ

4. **ສີມ່ວງທຳມະຊາດ**
   - ສີມ່ວງທຳມະຊາດໄດ້ຈາກໝາກຜັກປັງສຸກ

**ອຸປະກອນ**

- ໝາກຜັກປັງສຸກ
- ແພສຳລັບຕອງ
- ວັດຖຸສຳລັບບັນຈຸສີ

**ວິທີຜະລິດ**

- ເອົາໝາກຜັກປັງສຸກມາລ້າງໃຫ້ສະອາດ
- ເອົາໝາກຜັກປັງສຸກມາໃສ່ແພແລ້ວຫໍ່ແພເຂົ້າກັນ
- ບິດແພເຂົ້າເພື່ອບີບເອົານ້ຳສີມ່ວງຈາກໝາກຜັກປັງໃສ່ອຸປະກອນຮອງຮັບສີກໍ່ຈະໄດ້ສີມ່ວງທຳມະຊາດທີ່ສາມາດໃຊ້ໄດ້ທັນທີ.





ສີນ້ຳດອກອັນຊຸ້ນ

**7. ການຫຼິ້ນສີແບບຕ່າງໆ**

1. ການພິມສີ
2. ການຈໍ້າສີ
3. ການຂູດສີ
4. ການເປົ່າສີ
5. ການພັບສີ
6. ການຢອດສີ

**1. ພິມສີ**

ການພິມສີມີຫຼາຍຮູບແບບເຊັ່ນ: ພິມດ້ວຍໃບໄມ້, ກ້ານກ້ວຍ, ເຄືອບົວ, ນິ້ວມື ແລະ ຝາມື ນອກ ນີ້ຍັງມີຫຼາຍຢ່າງທີ່ສາມາດນຳມາເປັນແມ່ພິມໄດ້ຕາມຄວາມມັກຂອງຜູ້ເຮັດ.

**ກິດຈະກຳ** ພິມສີດ້ວຍໃບໄມ້, ກ້ານກ້ວຍ, ກ້ານບົວ ຫຼື ເຄືອບົວ, ນິ້ວມື.

**ອຸປະກອນ**

- ສີນ້ຳ ຫຼື ວ່າໃຊ້ສີທີ່ຜະລິດຈາກທຳມະຊາດແທນກໍ່ໄດ້
- ເຈ້ຍຂາວສຳລັບພິມ, ເຈ້ຍອະນາໄມ ຫຼື ໃຊ້ແພເຊັດແທນ.
- ນ້ຳລ້າງມື ແລະ ອຸປະກອນ, ຟອຍທາສີ ( ຟອຍແຕ້ມ ), ຈານປະສົມສີ.
- ໃບໄມ້, ກ້ານກ້ວຍ, ກ້ານບົວ ຫຼື ເຄືອບົວ ສຳລັບເປັນແມ່ພິມ.

**ວິທີດຳເນີນກິດຈະກຳ** ຄູສາທິດວິທີພິມແບບຕ່າງໆລຸ່ມນີ້:

- **ການພິມສີດ້ວຍໃບໄມ້**
  - ເອົາສີລົງໃສ່ຈານປະສົມສີ ແລະ ເອົານ້ຳມາປະສົມໃສ່ກັບແຕ່ລະສີຄົນໃຫ້ແຫຼວດີ.
  - ໃຊ້ຟອຍທາສີຈຸ່ມນ້ຳສີແລ້ວມາທາໃສ່ໃບໄມ້ເບື້ອງມີດູກ ( ເບື້ອງມີເສັ້ນໄຍ ) ບໍ່ຄວນທາຫຼາຍເກີນໄປເພາະຈະ ເຮັດໃຫ້ພາບພິມບໍ່ງາມ.
  - ເອົາໃບໄມ້ທີ່ມີສີຕິດຢູ່ມາວາງໃສ່ເຈ້ຍຂາວທີ່ກຽມໄວ້ ( ເອົາເບື້ອງມີສີຂວ້ຳລົງໃສ່ເຈ້ຍຂາວ ) ໃຊ້ເຈ້ຍໜັງສືພິມ ຫຼື ເຈ້ຍທຳມະດາທີ່ສະອາດວາງລົງທັບໃບໄມ້ແລ້ວໃຊ້ມືລູບ ແລະ ເນັ້ນລົງໃຫ້ສີທີ່ຢູ່ໃບໄມ້ຕິດໃສ່ເຈ້ຍ.
  - ລອກໃບໄມ້ອອກເຮົາຈະເຫັນມີຮູບໃບໄມ້ຕິດຢູ່ເຈ້ຍຂາວ.
  - ນຳໃຊ້ວິທີພິມແບບນີ້ໂດຍພິມຫຼາຍຄັ້ງປະກອບກັນໃຫ້ເປັນຮູບຕ່າງໆຕາມຈິນຕະນາການຂອງຕົນເອງ, ອາດຈະແຕ້ມເຕີມເພື່ອໃຫ້ງາມຂຶ້ນຕື່ມ.





ຮູບທີ1 ຮູບການພິມສີດ້ວຍໃບໄມ້

- **ການພິມສີດ້ວຍກ້ານກ້ວຍ ຫຼື ກ້ານບົວ**
  - ຕັດກ້ານກ້ວຍໃຫ້ສະຫຼຽງໜ້າຕັດເປັນຮູບວົງຍາວ.
  - ເອົາກ້ານກ້ວຍເບື້ອງທີ່ຕັດໄປຈຸ່ມສີແລ້ວເອົາມາພິມລົງໃນໜ້າເຈ້ຍຂາວໃຫ້ເປັນຮູບຕ່າງໆ ເຊັ່ນ: ຮູບດອກໄມ້ໃບໄມ້ ແລະ ອື່ນຕາມຈິນຕະນາການ.



ຮູບການພິມສີດ້ວຍກ້ານກ້ວຍ

- ຄູແບ່ງນັກຮຽນອອກເປັນ 3 ກຸ່ມ ເພື່ອປະຕິບັດ 3 ກິດຈະກຳຂ້າງເທິງນັ້ນ, ຄູຕິດຕາມການປະຕິບັດກິດຈະກຳຂອງນັກຮຽນ.
- ຄູໃຫ້ນັກຮຽນຄູນຳຜົນງານຂອງກຸ່ມຕົນເອງ ຂຶ້ນມາເລົ່າເປັນເລື່ອງລາວໃຫ້ກຸ່ມອື່ນຟັງ.
- ຄູສະຫຼຸບສັງລວມການປະຕິບັດກິດຈະກຳຂອງແຕ່ລະກຸ່ມ.

**2. ການຈໍ້າສີ**

ການຈໍ້າສີເປັນເຕັກນິກການຫຼິ້ນສີຊະນິດໜຶ່ງທີ່ນຳໃຊ້ເສດວັດສະດຸ, ເຄື່ອງໃຊ້ ແລະ ສິ່ງທີ່ຢູ່ໃກ້ຕົວເຮົາມາໃຊ້ເປັນແມ່ແບບ ເພື່ອສ້າງໃຫ້ພາບສີຕ່າງໆ ຕາມຈິນຕະນາການ (ຕາມຄວາມຄິດ) ການຈໍ້າສີກໍ່ມີຫຼາຍຮູບແບບເຊັ່ນ ການຈໍ້າສີດ້ວຍເຈ້ຍ, ການຈໍ້າສີດ້ວຍຟອຍແຕ້ມຮູບ ແລະ ອື່ນໆ.

**ກິດຈະກຳ** ຈໍ້າສີດ້ວຍເຈ້ຍຍໍ່, ຟອຍແຕ້ມຮູບ.

**ອຸປະກອນ**

- ສີນໍ້າ ຫຼື ສີທຳມະຊາດທີ່ຜະລິດເອງ.
- ຟອຍທາສີ ( ຟອຍທາສີ ).
- ເຈ້ຍເສດ, ເຈ້ຍແຕ້ມ ຫຼື ເຈ້ຍຂາວທຳມະດາກໍໄດ້.

**ວິທີດຳເນີນກິດຈະກຳ**

- **ຈໍ້າສີດ້ວຍເຈ້ຍຍໍ່**

ຄູສາທິດວິທີຈໍ້າສີດ້ວຍເຈ້ຍຍໍ່ ແລະ ຟອຍແຕ້ມ ດັ່ງລຸ່ມນີ້:

- ເອົາເຈ້ຍແຕ້ມມາວາງໄວ້ໜ້າໂຕະ ຫຼື ພື້ນພຽງ.
- ເອົາເຈ້ຍເສດມາຍໍ່ ແລະ ກຳ ລໍ້ໃຫ້ເປັນກ້ອນແລ້ວໃຊ້ຟອຍແຕ້ມຈຸ່ມສີ ແລະ ທາໃສ່ເຈ້ຍກ້ອນນັ້ນ ຫຼື ຈະເອົາເຈ້ຍກ້ອນນັ້ນໄປຈຸ່ມໃສ່ສີແລ້ວຈໍ້າໃສ່ເຈ້ຍແຕ້ມທີ່ກຽມໄວ້ນັ້ນ.
- ໃຊ້ຟອຍແຕ້ມທາສີໃສ່ກ້ອນເຈ້ຍຍໍ່ ສອງ ຫາ ສາມສີ ຕາມຄວາມເໝາະສົມແລ້ວຈໍ້າໃສ່ເຈ້ຍແຕ້ມຕາມຈິນຕະນາການຂອງຕົນເອງທີ່ຢາກໃຫ້ເປັນຮູບຕ່າງໆ ແຕ່ຄວນປ່ຽນກ້ອນເຈ້ຍຍໍ່ ຫຼັງໃຊ້ຈໍ້າ 3-4 ຄັ້ງ ແລະ ກ້ອນເຈ້ຍຍໍ່ກໍ່ຄວນມີຫຼາຍຂະໜາດ.



ຮູບທີ 5 ການຈໍ້າສີດ້ວຍເຈ້ຍຍໍ່

- **ຈໍ້າສີດ້ວຍຟອຍແຕ້ມ**
    - ເອົາເຈ້ຍແຕ້ມມາວາງໄວ້ໜ້າໂຕະ ຫຼື ພື້ນພຽງ.
    - ໃຊ້ຟອຍແຕ້ມ ຫຼື ຟອຍທາສີຈຸ່ມສີຂຽວພໍປະມານແລ້ວຈໍ້າສີໜ້າເຈ້ຍແຕ້ມທີ່ວາງໄວ້ນັ້ນໃຫ້ເປັນຮູບຮ່າງໃບຂອງໃບໄມ້.
    - ເອົາຟອຍຈຸ່ມສີເຫຼືອງ ແລະ ຈໍ້າໃສ່ຕໍ່ຈາກ ສີຂຽວ, ເອົາສີແດງມາຈໍ້າແຕ່ງເຕີມໃຫ້ເປັນຮູບ ຕົ້ນໄມ້ທີ່ສົມບູນຕາມຈິນຕະນາການ.
    - ນອກນີ້ເຮົາຍັງສາມາດຈໍ້າສີ ສະຫຼັບປະສົມປະສານກັນໃສ່ເຈ້ຍໃຫ້ເປັນຮູບຕ່າງໆຕາມຄວາມຄິດຂອງຕົນ ເຊັ່ນ: ຮູບທຳມະຊາດ, ຕົ້ນໄມ້, ໃບຫຍ້າ, ໝາກໄມ້ ແລະ ອື່ນໆ.



ຮູບທີ6 ການຈໍ້າສີດ້ວຍຟອຍຈໍ້າ

- ຄູໃຫ້ນັກຮຽນປະຕິບັດການການຈໍ້າສີຕາມກຸ່ມເກົ່າ.
- ຄູຕິດຕາມການປະຕິບັດການຈໍ້າສີຂອງນັກຮຽນຄູ.
- ໃຫ້ນັກຮຽນຄູນຳຜົນງານຂອງຕົນເອງໄປເລົ່າໃຫ້ເປັນເລື່ອງສັ້ນໆໃຫ້ໝູ່ຟັງ.

**3. ການຂູດສີ**

ການຂູດສີແມ່ນສິລະປະການສ້າງພັບດ້ວຍການໃຊ້ບັນດາເມັດສີປະກອບກັບບັນດາເສັ້ນສີສະທ້ອນຈາກສີພື້ນປະກອບກັນໃຫ້ກາຍເປັນຮູບພາບທີ່ມີຄວາມງາມໂດດເດັ່ນສະເພາະໂຕ, ການຂູດສີມີ2 ລັກສະນະຄື: ການຂູດສີເພື່ອສ້າງພາບດ້ວຍເມັດສີ ການຂູດສີເພື່ອສ້າງພາບດ້ວຍເສັ້ນສີພື້ນ, ລັກສະນະທີໜຶ່ງ ສາມາດເຮັດດ້ວຍສີນໍ້າ ແລະ ລັກສະນະທີສອງສາມາດເຮັດດ້ວຍສີທຽນ.

**ກິດຈະກຳ** ຂູດສີດ້ວຍສີນໍ້າ ແລະ ສີທຽນ.

**ອຸປະກອນ**

- ສີນໍ້າ ຫຼື ສີທີ່ຜະລິດຈາກທຳມະຊາດ, ສີທຽນ.
- ເຈ້ຍແຕ້ມ ຫຼື ເຈ້ຍທຳມະດາ, ເຈ້ຍເຟືອງ.
- ຟອຍຖູແຂ້ວທີ່ໃຊ້ແລ້ວ ຫຼື ອາດຈະໃຊ້ຟອຍຖູແຂ້ວໃໝ່ກໍ່ໄດ້ ຕາມເງື່ອນໄຂທີ່ເໝາະສົມຂອງທ້ອງຖິ່ນ, ຟອຍແຕ້ມ.
- ໄມ້ທີ່ຕັດປາຍໃຫ້ແຫຼມສຳລັບໄວ້ຂູດສີທຽນ, ຕາໜ່າງຂູດສີນໍ້າ.
- ໃບໄມ້ ແລະ ອື່ນໆທີ່ຈະນຳມາເປັນແມ່ແບບ.

- ຄູສາທິດວິທີຂູດສີດ້ວຍສີນໍ້າ ແລະ ວິທີຂູດສີດ້ວຍສີທຽນດັ່ງນີ້:

- **ຂູດສີດ້ວຍສີນໍ້າ**
  - ເອົາເຈ້ຍແຕ້ມມາວາງລົງໃສ່ໜ້າໂຕະ ຫຼື ໜ້າພຽງ ແລະ ເອົາໃບໄມ້ມາວາງໃສ່ເທິງໜ້າເຈ້ຍນັ້ນອາດຈະໃຊ້ໃບໄມ້ 2-3 ໃບ ກໍ່ໄດ້.
  - ເອົາຕາໜ່າງທີ່ມີຂອບມາວາງກວມເທິງໜ້າເຈ້ຍ, ໃຊ້ຟອຍຖູແຂ້ວທີ່ກຽມມາຈຸ່ມນໍ້າສີ (ບໍ່ຄວນຈຸ່ມຫຼາຍເກີນໄປ) ແລ້ວມາຂູດໃສ່ຕາໜ່າງໃຫ້ລະອອງສີຕົກລົງໄປຕິດໃສ່ເຈ້ຍ ແລະໃບໄມ້ທີ່ຢູ່ເບື້ອງລຸ່ມ.
  - ເອົາຕາໜ່າງອອກ ແລະ ລອກໃບໄມ້ອອກຈະເຫັນເປັນຮູບໃບໄມ້ຕາມແບບທີ່ເຮົາວາງໄວ້.
  - ອີກແບບໜຶ່ງເຮົາຕ້ອງການຢາກເຮັດເປັນຮູບພາບຕາເວັນຍາມແລງ ເຮົາຕັດເຈ້ຍເຟືອງໃຫ້ເປັນຮູບວົງມົນແລ້ວເອົາມາຕິດໃສ່ເບື້ອງເທິງຂອງເຈ້ຍແຕ້ມ ແລ້ວຂູດສີເຫຼືອງອ່ອນ ຂູຕາມດ້ວຍສີສົ້ມໃສ່ວົງນອກເປັນບໍລິເວນກວ້າງອອກໄປ.
  - ລອກເຈ້ຍເຟືອງທີ່ເປັນຮູບວົງມົນອອກຈະເຫັນເປັນຮູບຕາເວັນຍາມແລງ.
  - ໃຊ້ຟອຍແຕ້ມຈຸ່ມສີມ່ວງຟ້າ ຫຼື ສີເຂັ້ມໆ ແລ້ວເອົາໄປຂີດໃສ່ເຈ້ຍແຕ້ມໃຫ້ເປັນຮູບຕົ້ນໄມ້ແລ້ວຂູດສີມ່ວງແດງໃສ່ບໍລິເວນກ້ອງຕົ້ນໄມ້ ເມື່ອສຳເລັດແລ້ວເຮົາກໍຈະໄດ້ຮູບພາບທຳມະຊາດຍາມແລງ.



ຮູບທີ 8 ຂູດສີນໍ້າ

- **ຂູດສີທຽນ**

ເອົາເຈ້ຍແຕ້ມ ຫຼື ເຈ້ຍ A4 ມາວາງໃສ່ໜ້າໂຕະ ຫຼື ພື້ນທີ່ພຽງເທົ່າໃດຍິ່ງດີແລ້ວເລືອກເອົາສີທຽນທີ່ເປັນສີຈະແຈ້ງ, ສົດໃສເຊັ່ນ: ສີເຫຼືອງ, ສີຂຽວ, ສີມ່ວງ, ສີສົ້ມ… ເມື່ອເລືອກໄດ້ແລ້ວເອົາສີເຫຼົ່ານັ້ນມາທາຕິດຕໍ່ກັນໃຫ້ທົ່ວໜ້າເຈ້ຍ, ທາແຕ່ເທິງລົງລຸ່ມດັ່ງທີ່ເຫັນໃນຮູບຂ້າງລຸ່ມນີ້:

 

ຮູບທີ 9 ສີທຽນທີ່ຍັງບໍ່ທັນໄດ້ຂູດ ຮູບທີ 10 ການຂູດສີທຽນທີ່ສຳເລັດ

- ຫຼັງຈາກລະບາຍສີສົດໃສໃສ່ໃຫ້ທົ່ວໜ້າເຈ້ຍແລ້ວ ໃຊ້ສີດຳທາປົກທັບໃສ່ເທິງໜ້າເຈ້ຍທີ່ມີສີເຫຼົ່ານັ້ນ, ທາສີດຳປິດໃຫ້ທົ່ວຈົນເຫັນວ່າ ໜ້າເຈ້ຍເປັນສີດຳໝົດແລ້ວໃຊ້ໄມ້ຂູດໃຫ້ເປັນຮູບຕ່າງໆເຊັ່ນ: ຮູບພາບທິວທັດ, ຮູບໝາກໄມ້, ຮູບດອກໄມ້ ແລະ ອື່ນໆ ຕາມຈິນຕະນາການ.
- ຄູໃຫ້ນັກຮຽນປະຕິບັດການຂູດສີແບບຕ່າງໆ ຕາມກຸ່ມເກົ່າ.
- ໃຫ້ແຕ່ລະກຸ່ມນຳຜົນງານມາລາຍງານ.
- ຄູສະຫຼຸບຄືນກ່ຽວກັບການຂູດສີຂອງແຕ່ລະກຸ່ມ.

**ຕົວຢ່າງ** ຂູດສີທຽນເປັນຮູບລວດລາຍດອກໄມ້



ຮູບທີ 11 ການຂູດສີດ້ວຍສີທຽນ

## 4. ການເປົ່າສີ

ກິດຈະກຳເປົ່າສີເປັນກິດຈະກຳຫຼິ້ນສີທີ່ເດັກນ້ອຍຕິດອົກຕິດໃຈຢາກຈະທົດລອງເປົ່າດ້ວຍຕົນເອງເພາະເປັນກິດຈະກຳທີ່ງ່າຍໆ ແຕ່ຕື່ນເຕັ້ນດີ

ການເປົ່າສີແມ່ນການໃຊ້ຄວາມແຮງຂອງລົມດັນໃຫ້ສີແລ່ນ ແລະ ແຕກກະຈາຍໄປຕາມໜ້າເຈ້ຍ ເຊິ່ງເຮົາບໍ່ສາມາດກຳນົດໃຫ້ສີແລ່ນໄປຕາມໃຈເຮົາທຸກຢ່າງ, ເຮົາພຽງແຕ່ກະຕວງທິດທາງຂອງສີ ແລະ ເປົ່າໃຫ້ສີແຕກອອກໄປໃຫ້ເປັນຮູບເບິ່ງແລ້ວມີສີລະປະໃນໂຕຂອງມັນເອງ.

**ກິດຈະກຳ** ເປົ່າສີໃຫ້ເປັນຮູບຕ່າງໆ.

**ອຸປະກອນ**

- ສີນ້ຳ ຫຼື ສີທຳມະຊາດ
- ທໍ່ດູດຖ້າບໍ່ມີທໍ່ດູດອາດຈະໃຊ້ຕົ່ງເຟືອງ ແລະ ທໍ່ໄມ້ປ່ອງຊະນິດນ້ອຍແທນ.
- ເຈ້ຍແຕ້ມ ຫຼື ອ່າໃຊ້ເຈ້ຍ A4 **( ສຳຄັນໜ້າເຈ້ຍຕ້ອງລຽບ ).**
- ຟອຍແຕ້ມ **(** ຟອຍທາສີ **).**

**ວິທີດຳເນີນກິດຈະກຳ**

- ຄູສາທິດວິທີເປົ່າສີແບບຕ່າງໆໃຫ້ນັກຮຽນເບິ່ງດັ່ງລຸ່ມນີ້:
- ວາງເຈ້ຍແຕ້ມລົງໜ້າໂຕະ, ໃຊ້ຟອຍແຕ້ມຈຸ່ມນ້ຳສີດຳມາແຕ້ມເຕົ້າປູກຕົ້ນໄມ້ໃສ່ເບື້ອງລຸ່ມຂອງໜ້າເຈ້ຍແຕ້ມ.
- ເອົາຟອຍແຕ້ມໄປຈຸ່ມສີຟ້າມ່ວງ, ຈຸ່ມຫຼາຍໆແລ້ວນຳມາຢອດໃສ່ປາກຮູບເຕົ້າປູກຕົ້ນໄມ້, ດອກໄມ້ແລ້ວໃຊ້ທໍ່ເປົ່າຄ່ອຍໆໃຫ້ສີແລ່ນຂຶ້ນໄປເປັນຮູບຕົ້ນດອກໄມ້ເມື່ອສີແລ່ນຂຶ້ນໄປຮອດເທິງແລ້ວຈຶ່ງເປົ່າອ່າວແຮງໃຫ້ສີແຕກອອກເປັນງ່ານ້ອຍຂອງຕົ້ນດອກໄມ້.
- ເອົາສີບົວ, ສີສົ້ມ, ສີແດງ ມາຢອດຢາຍໃສ່ຕາມງ່ານ້ອຍຂອງຕົ້ນໄມ້ແລ້ວເອົາເຈ້ຍອີກໃບໜຶ່ງມາປົກໃສ່ຮູບນັ້ນ ແລະ ໃຊ້ມືລູບເບົາໆ, ລອກເຈ້ຍອອກກໍຈະເຫັນຮູບຕົ້ນດອກໄມ້ທີ່ມີດອກ ແລະ ໃບຫຼາຍສີ.



ຮູບທີ 12 ກ່ອນເປົ່າສີ ຮູບທີ 13 ການເປົ່າສີທີ່ສຳເລັດ

- ນອກຈາກເປົ່າໃຫ້ເປັນຮູບຕົ້ນດອກໄມ້ ແລ້ວຍັງສາມາດເປົ່າໃຫ້ເປັນຮູບສັດ, ຫຍ້າ ແລະ ຮູບອື່ນໆ ຕາມຈິນຕະນາການດັ່ງຮູບຂ້າງລຸ່ມ





ຮູບທີ11 ເປົ່າສີໃຫ້ເປັນຮູບສັດ ຮູບທີ12 ເປົ່າສີຕາມຈິນຕະນາການ

- ຄູໃຫ້ນັກຮຽນແຕ່ລະກຸ່ມເປົ່າສີ ຕາມຄວາມມັກຂອງກຸ່ມຕົນເອງ.
- ຄູຕິດຕາມການປະຕິບັດການເປົ່າສີຂອງແຕ່ລະກຸ່ມ ພ້ອມທັງໃຫ້ຄຳແນະນຳ.
- ຄູໃຫ້ແຕ່ລະກຸ່ມລາຍງານການເປົ່າສີຂອງກຸ່ມຕົນເອງ.
- ຄູສະຫຼຸບຄືນກ່ຽວກັບການເປົ່າສີຂອງແຕ່ລະກຸ່ມ.

**5. ການພັບສີ**

ການພັບສີແມ່ນສິລະປະຂອງການໃຊ້ສີຢູ່ເທິງໜ້າເຈ້ຍ ທີ່ມີສອງຂ້າງເທົ່າກັນ ແລະ ຄືກັນ ຮູບແບບການພັບສີແມ່ນພັບເຄິ່ງກາງ (ພັບເຄິ່ງ) ຂອງເຈ້ຍເຂົ້າກັນ ແລະ ເປີດອອກແລ້ວເອົາສີຢອດຫຼາຍໆສີລົງໃສ່ຂ້າງໃດຂ້າງໜຶ່ງ, ຫຼັງຈາກນັ້ນ ພັບເຈ້ຍເຂົ້າກັນ ແລະ ໃຊ້ມືລູບໄປທາງໃດທາງໜຶ່ງພຽງຄັ້ງດຽວ ສີຈະປະສົມກັນໄດ້ສີຕ່າງໆ ຫ້າມລູບກັບໄປກັບມາຫຼາຍຄັ້ງ ເພາະຈະເຮັດໃຫ້ສີປະສົມກັນ ຫຼາຍ ກາຍເປັນສີເນົ່າ.

**ກິດຈະກຳ** ທົດລອງພັບສີດ້ວຍສີນ້ຳ.

**ອຸປະກອນ**

- ສີນ້ຳ ຫຼື ວ່າໃຊ້ສີທີ່ຜະລິດຈາກທຳມະຊາດແທນ.
- ຟອຍແຕ້ມຮູບ ( ຟອຍທາສີ ).
- ເຈ້ຍແຕ້ມ ຫຼື ເຈ້ຍຂາວທຳມະດາ.
- ເຈ້ຍອະນາໄມໃຊ້ທຳຄວາມສະອາດຫຼັງປະຕິບັດກິດຈະກຳແລ້ວ.

**ວິທີດຳເນີນກິດຈະກຳ**

- ຄູໃຫ້ນັກຮຽນເອົາເຈ້ຍຂາວມາ ແລະ ພັບເຄິ່ງເຈ້ຍຂາວເຂົ້າກັນ.
- ເປີດເຈ້ຍອອກແລ້ວໃຊ້ຟອຍທາສີຈຸ່ມສີມ່ວງດ້ວຍປະລິມານອ່າວຫຼາຍມາທາໃສ່ເບື້ອງໜຶ່ງຂອງເຈ້ຍເອົາສີຂຽວໄປທາຕິດແປະໃສ່ໃກ້ໆ ສີມ່ວງ, ສີແດງ, ສີຟ້າ ແລະ ສີເຫຼືອງ ມາລະບາຍ ໃສ່ໃກ້ກັນເຮັດໃຫ້ຄ້າຍຄືຮູບແມງກະເບື້ອຂ້າງດຽວ, ໃຫ້ແຕ້ມສີໃສ່ພຽງຂ້າງດຽວເທົ່ານັ້ນ, ອີກຂ້າງໜຶ່ງຫ້າມທາສີໃສ່ເດັດຂາດ.
- ພັບເຈ້ຍດ້ານບໍ່ມີສີເຂົ້າກັບດ້ານມີສີແລ້ວໃຊ້ມືລູບໃຫ້ສີມາຕິດເຈ້ຍຂ້າງທີ່ທາກໍ່ພັບໄປນັ້ນພຽງຄັ້ງດຽວ.

- ເປີດເຈ້ຍອອກຈະເຫັນຮູບສີສອງເບື້ອງເປັນຮູບແມງກະເບື້ອຄືກັນ.



ຮູບທີ 13-14 ຮູບການພັບສີນໍ້າ

- ຄູສະຫຼຸບຄືນການປະຕິບັດ ການພັບສີຂອງນັກຮຽນ.

**6. ການຢອດສີ**

ການຢອດສີເປັນກິດຈະກຳຫຼິ້ນງ່າຍໆ ແລະ ບໍ່ເປິເປື້ອນຫຼາຍ, ສີລະປະຂອງການຢອດສີຢູ່ທີ່ເມັດສີທີ່ຟົ້ງກະຈາຍຈາກກັນມາເປັນພາບເດັ່ນທີ່ບັນທຶກການເຄື່ອນທີ່ ຢ່າງແຮງຂອງສີໄວ້ໃຫ້ເຫັນ.

**ກິດຈະກຳ** ທົດລອງຢອດສີດ້ວຍຫຼາຍສີສັນ.

**ອຸປະກອນ**

- ສີນໍ້າ ຫຼື ສີທີ່ຜະລິດຈາກທຳມະຊາດ.
- ເຈ້ຍແຕ້ມ ຫຼື ເຈ້ຍຂາວທຳມະດາ.
- ທໍ່ດູດຖ້າບໍ່ມີອາດຈະໃຊ້ບິກທີ່ບໍ່ມີໄສ້, ຕໍເຟືອງ ແລະ ໄມ້ປ່ອງຂະນິດນ້ອຍເຊັ່ນ ໄມ້ເຮ້ຍນ້ອຍ...

**ວິທີດຳເນີນກິດຈະກຳ**

ຄູສາທິດວິທີຢອດສີດັ່ງນີ້:

- ຄູນຳເອົາເຈ້ຍມາວາງໄວ້ເທິງໜ້າໂຕະ ແລ້ວເອົາທໍ່ດູດຈຸ່ມລົງນໍ້າສີ, ໃຊ້ມືບີບສົ້ນເບື້ອງເທິງຂອງທໍ່ດູດ ເພື່ອບໍ່ໃຫ້ສີຍ້ອຍອອກ ເອົາສີທີ່ຢູ່ໃນທໍ່ດູດມາເຄິ່ງໜ້າເຈ້ຍທີ່ກຽມໄວ້ ແລ້ວເອົາມືອອກຈາກສົ້ນທໍ່ດູດທີ່ກຳລັງບີບຢູ່ ເພື່ອໃຫ້ສີຕົກລົງໃສ່ໜ້າເຈ້ຍ ແລະ ຟົ້ງແຕກຂະດີ, ອອກຈາກກັນເວລາຈະຢອດສີລົງໃຫ້ຍົກທໍ່ດູດຂຶ້ນ ອ່າວສູງພໍປະມານ.
- ການປະຕິບັດລັກສະນະນີ້ ເພື່ອຢາກໃຫ້ຮູບພາບມີຫຼາກຫຼາຍສີສັນທີ່ສວຍງາມນັ້ນ ຕ້ອງໄດ້ໃຊ້ຫຼາຍສີມາຢອດໃກ້.



ຮູບທີ 15 ການຢອດສີ

ກິດຈະກຳ

- ໃຫ້ນັກຮຽນຄູປະຕິບັດການຢອດສີ.
- ຄູຕິດຕາມການຢອດສີຂອງນັກຮຽນ.
- ຄູໃຫ້ນັກຮຽນລາຍງານ.
- ຄູສັງລວມຄືນກິດຈະກຳໝົດບົດນີ້.

## ໃຈຄວາມ

ເນື້ອໃນສຳຄັນຂອງບົດນີ້ ນັກຮຽນຄູສາມາດຮຽນເອົາຄວາມຮູ້ກ່ຽວກັບທິດສະດີສີ, ຄວາມສຳຄັນຂອງແມ່ສີ ວິທີປະສົມສີ, ການຈຳແນກສີທີ່ມີໃນວົງຈອນຂອງສີ, ເຕັກນິກການລະບາຍສີ, ການຜະລິດສີຈາກທຳມະຊາດ ແລະ ການຫຼິ້ນສີແບບຕ່າງໆ. ນອກຈາກນັ້ນ ສິ່ງສຳຄັນອີກຢ່າງໜຶ່ງ ແມ່ນດານນຳໃຊ້ວັດຖຸດິບຈາກທຳມະຊາດ, ເຂົ້າໃນການຜະລິດສີ ເພື່ອນຳໃຊ້ເຂົ້າໃນການແຕ້ມຮູບ ຫຼື ເຮັດກິດຈະກຳຕ່າງໆ ເຮັດໃຫ້ນັກຮຽນມີປະສົບການ ເພື່ອນຳເອົາໄປໃຊ້ເຂົ້າໃນການຈັດກິດຈະກຳການຮຽນ-ການສອນ.

## ວຽກມອບໝາຍ

- ໃຫ້ນັກຮຽນຄູປະສົມສີ ແລະ ເຝິກລະບາຍສີໃສ່ວົງຈອນຂອງສີໃຫ້ຄົບຖ້ວນ ແລະ ຖືກຕ້ອງ?
- ເຝິກການຫຼິ້ນສີແບບຕ່າງໆ?

## ວຽກບ້ານ

ໃຫ້ຜະລິດສີທຳມະຊາດ ອາດຈະເຮັດເປັນກຸ່ມ ຫຼື ບຸກຄົນຕາມຄວາມເໝາະສົມພ້ອມທັງບັນທຶກຂັ້ນຕອນການຜະລິດສີນັ້ນມາລາຍງານ.

# ບົດທີ 3

# ແຕ້ມຕາມວັດຖຸຕົວຈິງ

ເວລາ 8 ຊົ່ວໂມງ

ຈຸດປະສົງ ໃຫ້ນັກຮຽນສາມາດ:

- ບອກຫຼັກການ ແລະ ວິທີການແຕ້ມໄດ້.

- ບອກຫຼັກການ ແລະ ວິທີການແຕ້ມປະກອບການສອນໃນຊັ້ນອະນຸບານ1, 2, 3 ໄດ້
- ຫຼັກການ ແລະ ວິທີການແຕ້ມຮູບເໝືອນໄດ້
- ວິທີແຕ້ມຮູບດອກໄມ້ ແລະ ໃບໄມ້ໄດ້.
- ການຂຶ້ນໂຄງຮ່າງ ແລະ ລະບາຍສີ-ແສງເງົາໄດ້.
- ເຂົ້າໃຈສິ່ງທີ່ຄວນເອົາໃຈໃສ່ໄດ້.

## 1. ຫຼັກການ ແລະ ວິທີການແຕ້ມ

### ❖ ຫຼັກການແຕ້ມ

ການແຕ້ມຮູບ ຜູ້ແຕ້ມຈະຕ້ອງເຂົ້າໃຈໂຄງສ້າງຂອງສິ່ງທີ່ຈະແຕ້ມເສຍກ່ອນ, ໂຄງສ້າງນີ້ໝາຍເຖິງບໍລິມາດຂະໜາດ, ຮູບຊົງ, ແສງເງົາ, ຊັດສ່ວນ, ທິດທາງທີ່ຕັ້ງຂອງສິ່ງທີ່ຈະແຕ້ມ ແລະ ສິ່ງທີ່ມີຄວາມສຳພັນກັນກັບຮູບພາບນັ້ນໆ ເມື່ອເຂົ້າໃຈຊັດສ່ວນແລ້ວຈຶ່ງສ້າງພາບລົງໄປໃນໄລຍະທຳອິດບໍ່ຄວນແຕ້ມລະອຽດ ພາກສ່ວນໃດພາກສ່ວນໜຶ່ງ, ຖ້າຫາກຜິດພາດເລື່ອງຮູບຮ່າງກໍ່ຈະສາມາດແກ້ໄຂໃນໄລຍະນີ້ໄດ້, ຫຼັງຈາກນັ້ນຈຶ່ງຄ່ອຍໆແຕ້ມລະອຽດຕາມລຳດັບຈົນສົມບູນ.

ຫຼັກການແຕ້ມຮູບຕ້ອງແຕ້ມແຕ່ສິ່ງທີ່ຢູ່ໄກຫາສິ່ງທີ່ຢູ່ໃກ້, ແຕ້ມຮູບຮ່າງລວມແລ້ວຈຶ່ງແຕ້ມຮູບຮ່າງສະເພາະຫຼັງຈາກນັ້ນຈຶ່ງແຕ້ມລະອຽດເປັນອັນດັບສຸດທ້າຍ.

### ❖ ວິທີການແຕ້ມ

ກ່ອນຈະແຕ້ມຄວນຊອກຫາວັດຖຸແບບ, ສະຖານທີ່ທີ່ສວຍງາມ ແລະ ເໝາະສົມ ເພື່ອວາງວັດຖຸແບບນັ້ນໃຫ້ຢູ່ບ່ອນເກົ່າ ໂດຍບໍ່ເຄື່ອນຍ້າຍ ຫຼື ແຕະຕ້ອງວັດຖຸແບບທີ່ກຳລັງແຕ້ມ, ກ່ອນຈະແຕ້ມຄວນນັ່ງສັງເກດວັດຖຸແບບນັ້ນໃຫ້ຄັກແນ່ເສຍກ່ອນວ່າ ໂຄງຮ່າງຮູບນອກຂອງຮູບແບບນັ້ນ ມີລັກສະນະແບບໃດ ແມ່ນຮູບແບບໂຄງຮ່າງທີ່ເປັນຮູບຫຼ່ຽມພາຍຫຼັງຮູ້ຈັກແບບໂຄງຮ່າງແລ້ວກໍ່ເລີ່ມແຕ້ມໂດຍອາໄສຂີດເປັນຮູບຫຼ່ຽມກ່ອນ ຈາກນັ້ນກໍ່ຂີດເສັ້ນກົ່ງໄປຕາມຮູບແຕ້ມຂອງວັດຖຸນັ້ນ.

ໃນເວລາແຕ້ມເປັນຮູບຫຼ່ຽມ ຄວນເອົາໃຈໃສ່ກ່ຽວກັບການຈັດວາງຮູບພາບໃສ່ເຈ້ຍໃຫ້ເໝາະສົມ, ການຈັດວາງຮູບພາບນັ້ນ ຕ້ອງຄິດໄລ່ໃຫ້ສ່ວນເຫິງຂອງເຈ້ຍ ມີຊ່ອງຫວ່າງທີ່ເໝາະສົມ ແລະ ສະເໝີກັນ. ຈາກນັ້ນກໍ່ເລີ່ມແຕ້ມແຕ່ລະບາດກ້າວ ແລະຂັ້ນຕອນໃຫ້ລະອຽດ.

## 2. ຫຼັກການ ແລະ ວິທີການແຕ້ມປະກອບການສອນໃນຊັ້ນອະນຸບານ1, 2, 3

### 2.1 ຫຼັກການ ແລະ ວິທີສອນສິລະປະແຕ້ມສຳລັບອະນຸບານ 1 ( 3 -4 ປີ )

- ເດັກໄວນີ້ ພັດທະນາການປາກເວົ້າ ແລະ ການຄົ້ນຄິດກຳລັງຂະຫຍາຍ, ເມື່ອຄູສອນແຕ້ມອາດຈະໃຊ້ການຫຼິ້ນ ແລະ ການສົນທະນາເຂົ້ານຳເຊັ່ນ ໃຊ້ມືແຕ້ມຮູບຢູ່ເທິງກາງຫາວ ຈາກນັ້ນ ໃຫ້ເດັກແຕ້ມຢູ່ເທິງໜ້າໂຕະ ຫຼື ພື້ນພຽງ ສຸດທ້າຍກໍ່ແຕ້ມໃສ່ໜ້າເຈ້ຍໃນເວລາແຕ້ມຄວນໃຫ້ເດັກໄດ້ສົນທະນາກັບໝູ່ ແລະ ຄູ.
- ໝູນໃຊ້ຮູບແຕ້ມຂອງຄູເປັນເຄື່ອງປະຈັກຕາເພື່ອໃຫ້ເດັກເຫັນໄດ້ຮູບຮ່າງ, ສີສັນ ແລະ ຂັ້ນຕອນການແຕ້ມ.
- ໝູນໃຊ້ຄຳທວາຍ, ກາບກອນ ທີ່ພົວພັນກັບການແຕ້ມມາເລົ່າໃຫ້ເດັກຟັງ, ເພື່ອດຶງດູດຄວາມສົນໃຈຂອງເດັກ
- ຄູໃຫ້ການແນະນຳ ຊ່ວຍເຫຼືອ ເປັນລາຍບຸກຄົນແຕ່ບໍ່ໝາຍຄວາມວ່າ ໃຫ້ຄູແຕ້ມໃຫ້ເດັກ ພຽງແຕ່ເປັນການສົນທະນາເພື່ອເປີດຄວາມຄິດຂອງເດັກ.

## 2.2 ຫຼັກການ ແລະ ວິທີສອນສິລະປະແຕ້ມສຳລັບອະນຸບານ 2 ( 4-5 ປີ )

- ວິທີສອນແຕ້ມໃຫ້ເດັກອະນຸບານກາງຄ້າຍຄືກັບການສອນແຕ້ມໃຫ້ເດັກອະນຸບານນ້ອຍ, ເດັກໄວນີ້ຄູອາດນຳໃຊ້ວັດຖຸຕົວຈິງທີ່ມີຮູບຮ່າງ, ສີສັນທີ່ບໍ່ສັບສົນມາເປັນເຄື່ອງປະຈັກຕາໃຫ້ເດັກໄດ້ສັງເກດເຊັ່ນ: ໝາກກ້ຽງ, ໝາກມ່ວງ...
- ນອກຈາກໃຊ້ວັດຖຸຕົວຈິງ ອາດຈະໃຊ້ຮູບແຕ້ມຂອງຄູເປັນແບບຢ່າງເພື່ອເປີດແນວຄິດໃຫ້ແກ່ເດັກ ເມື່ອເວລາເດັກແຕ້ມຕ້ອງອີງແບບຢ່າງໄປເກັບມ້ຽນ ( ບໍ່ໃຫ້ເດັກກ່າຍແບບຂອງຄູ ) ທັງນີ້ ກໍ່ເພື່ອໃຫ້ເດັກມີຄວາມຄິດເປັນຂອງຕົນເອງ.
- ໝູນໃຊ້ກາບກອນ, ນິທານ, ບົດເພງ ທີ່ມີເນື້ອໃນກ່ຽວຂ້ອງກັບການແຕ້ມເຂົ້າໃນການສອນຈະຊ່ວຍໃຫ້ເດັກສຳນຶກເຫັນຮູບພາບວັດຖຸ ແລະ ເຫດການຕ່າງໆ ໃນເລື່ອງ ( ເລົ່າກ່ອນດຳເນີນການແຕ້ມ ).
- ຄູອາດຈະເຮັດບ່ອນວາງສະແດງຮູບພາບ, ເພື່ອໃຫ້ເດັກນຳຮູບພາບຂອງຕົນມາແຂວນໄວ້ ແລະ ໃຫ້ເດັກໄດ້ເຫັນຮູບພາບຂອງຫຼາຍຄົນ.

## 2.3 ຫຼັກການ ແລະ ວິທີສອນສິລະປະແຕ້ມສຳລັບອະນຸບານ 3 ( 5-6 ປີ )

ການສອນແຕ້ມ ສຳລັບເດັກໄວນີ້ຄູຄວນເອົາໃຈໃສ່ພັດທະນາຄວາມຄິດສ້າງສັນໃຫ້ຫຼາຍຂຶ້ນແຕ່ການໃຊ້ວິທີຕ່າງໆ ຍັງຄ້າຍຄືກັບອະນຸບານກາງຕ່າງແຕ່ວ່າການສອນຢູ່ຊັ້ນອະນຸບານໃຫ່ຍແມ່ນເພີ່ມຄວາມຍາກຂຶ້ນ.

- ໝູນໃຊ້ການຫຼິ້ນເຂົ້ານຳເຊັ່ນ ຕົ້ນຊື່ວໂມງຮຽນ ຄູຖືຈົດໝາຍທີ່ຂຽນມາຈາກຫຼານນ້ອຍ ໂຮງຮຽນອື່ນຂໍໃຫ້ພວກຫຼານແຕ້ມຮູບພາຫານະທີ່ໃຊ້ໃນບ້ານພວກຫຼານ.
- ໝູນໃຊ້ວັດຖຸຕົວຈິງ ແລະ ຮູບພາບທີ່ບໍ່ສັບສົນປານໃດມາເປັນແບບຢ່າງ ຫຼື ເຄື່ອງປະຈັກຕາ.
- ຖ້າວັດຖຸທີ່ເດັກແຕ້ມມີຮູບຮ່າງສີສັນ ແຕກຕ່າງຈາກຮູບຮ່າງທີ່ເດັກເຄີຍແຕ້ມ, ຜ່ານມາຄູຕ້ອງສາທິດການແຕ້ມໃຫ້ເດັກເບິ່ງ.
- ນຳໃຊ້ບົດວັນນະຄະດີເຂົ້າໃນການສອນອາດຈະເປັນບົດເລື່ອງ, ກາບກອນ, ເພງ...ທີ່ມີເນື້ອໃນສັ້ນໆເດັກຟັງແລ້ວສາມາດສຳນຶກເຫັນພາບຕົວລະຄອນໂລດ.
- ໃກ້ຊິດຕິດແທດກັບເດັກໃນເວລາເດັກກຳລັງແຕ້ມ ເພື່ອໃຫ້ຄຳແນະນຳຊ່ວຍເຫຼືອໄປພ້ອມ.
- ເມື່ອເດັກແຕ້ມແລ້ວຄູຄວນໃຫ້ເດັກໄດ້ເລົ່າເຖິງຮູບພາບນັ້ນເປັນເລື່ອງລາວຕາມຄວາມຄິດຂອງເຂົາເຈົ້າເພື່ອເປັນການພັດທະນາແນວຄິດສ້າງສັນ ແລະ ພັດທະນາພາສາຂອງເດັກ.
- ເດັກອະນຸບານກາງ ແລະ ອະນຸບານໃຫ່ຍ ນີ້ຄູສາມາດນຳພາຫຼິ້ນສີນ້ຳເປັນຕົ້ນແມ່ນກິດຈະກຳຫຼິ້ນສີເຊັ່ນ ເປົ່າສີ ພິມສີ, ຂູດສີ ແລະ ອື່ນໆ.

**ກິດຈະກຳ**

- ແບ່ງຫົວຂໍ້ໃຫ້ນັກຮຽນ
- ລົງເກັບກຳຂໍ້ມູນການສອນແຕ້ມໃນໂຮງຮຽນອະນຸບານສາທິດ.

**ອຸປະກອນ**

- ເຈ້ຍບັນທຶກຂໍ້ມູນເຊັ່ນ: ບິກຂຽນ, ບິກເຟີດ, ເຈ້ຍແຜ່ນໃຫ່ຍ.
- ເຈ້ຍຄຳຖາມໃຫ້ຄົບຕາມຈຳນວນກຸ່ມ.

**ວິທີດຳເນີນກິດຈະກຳ**

- ແບ່ງນັກຮຽນອອກເປັນ 3 ກຸ່ມ.
- ຄູມອບວຽກໃຫ້ແຕ່ລະກຸ່ມດັ່ງນີ້:

ກຸ່ມທີ 1 ລົງເກັບກຳ, ສັງເກດ ແລະ ບັນທຶກ ການສອນ-ການຮຽນ ແຕ້ມໃນຊັ້ນອະນຸບານນ້ອຍອາຍຸ(3-4ປີ)

ກຸ່ມທີ 2 ລົງເກັບກຳ, ສັງເກດ ແລະ ບັນທຶກ ການສອນ-ການຮຽນ ແຕ້ມໃນຊັ້ນອະນຸບານກາງອາຍຸ(4-5ປີ)

ກຸ່ມທີ 3 ລົງເກັບກຳ, ບັນທຶກ ການສອນ-ການຮຽນ, ການສອນແຕ້ມສຳລັບອະນຸບານໃຫ່ຍອາຍຸ (5-6ປີ).

- ຄູແນະນຳໃຫ້ນັກຮຽນແຕ່ລະກຸ່ມແບ່ງປັນວຽກກັນພາຍຫຼັງກັບມາແຕ່ໂຮງຮຽນອະນຸບານສາທິດແລ້ວ ແຕ່ລະກຸ່ມສະຫຼຸບຜົນຂອງການລົງເກັບກຳຂໍ້ມູນ ເພື່ອກຽມລາຍງານກຸ່ມໃຫ່ຍໃນຫ້ອງແຕ່ລະກຸ່ມປະກອບຄຳຄິດເຫັນໃຫ້ກັນ ແລະ ກັນ.
- ຄູປະຈຳວິຊານຳພາສະຫຼຸບຄືນ ວິທີແຕ້ມສຳລັບເດັກແຕ່ 3- 6 ປີ.

## 3. ຫຼັກການ ແລະ ວິທີການແຕ້ມຮູບເໝືອນ

**ຕົວຢ່າງ** ຮູບຄົນເໝືອນ

1. ສັງເກດລັກສະນະທາ່ທາງ ແລະ ເລືອກມູມເບິ່ງ, ເປັນບ່ອນທີ່ເບິ່ງເຫັນ ສ່ວນທີ່ເປັນແສງ-ແລເງົາຊັດເຈນ. ການແຕ້ມຮູບຄົນບໍ່ຄວນຈະໃກ້ແບບຄືກັນກັບການແຕ້ມຮູບຄົນເຄິ່ງຄີງ ເພາະບໍ່ຕ້ອງການລາຍລະອຽດອະໄວຍະວະຕ່າງໆ ເທິງໃບໜ້າ. ຄວນຈະຢູ່ຮ່າງໄກຈາກຫຸ່ນປະມານ 3 ແມັດ ເປັນຢ່າງໜ້ອຍ ເພື່ອຈະເຫັນພາບສ່ວນລວມ ແລະ ແສງເງົາທີ່ຕົກກະທົບເທິງຕົວຫຸ່ນໄດ້ຊັດເຈນ.
2. ການແຕ້ມຮູບຄົນຕ້ອງສ້າງໂຄງຮ່າງສ່ວນລວມກ່ອນ ເພື່ອຈະໄດ້ພາບໃຫ້ເໝາະສົມກັບໜ້າເຈ້ຍ ແລະ ໃຫ້ຮູບໄດ້ຊັດສ່ວນເໝາະສົມກັບຮ່າງສ່ວນໃດສ່ວນໜຶ່ງກ່ອນ, ເມື່ອແຕ້ມສຳເລັດເຮົາຈະເຫັນບາງສ່ວນສັ້ນ-ຍາວຕ່າງກັນ ບໍໄດ້ຊັດສວ່ນ ຫຼື ອາດຈະໃກ້ ແຕ່ບໍ່ເໝາະສົມກັບໜ້າເຈ້ຍ ເຊັ່ນ: ຕ່ຳ ຫຼື ສູງເກີນໄປ.
3. ການແຕ້ມຮູບເໝືອນຜູ້ເບິ່ງອາດຈະເບິ່ງແຕກຕ່າງກັນເປັນ 2 ປະເພດ
   - ເບິ່ງງາມ ຫຼື ບໍ່ງາມເທົ່ານັ້ນ
   - ຈະເບິ່ງເຖິງຄວາມຖືກຕ້ອງຂອງຊັດສ່ວນ.

ດັ່ງນັ້ນຜູ້ແຕ້ມຄວນເນັ້ນຄວາມຖືກຕ້ອງຂອງຊັດສ່ວນຕ່າງໆໃຫ້ລະອຽດເຊັ່ນ: ມື, ຕີນ ຄວນແຕ້ມໃຫ້ຖືກຕ້ອງໃນບາງກໍລະນີອາດຈະລະອຽດ ແລະ ບາງກໍລະກໍລະນີອາດຈະແຕ້ມເປັນພຽງເສັ້ນເບົາໆກໍ່ພໍຫາກເປັນສ່ວນທີ່ຢູ່ໄກອອກໄປ ຕົວຢ່າງ 1: ບາດກ້າວງ່າຍໆ 1-2-3 ໃນທ່ານັ່ງ ໂຄງຮ່າງສະເກດຮູບໃນທ່າຢືນ



1 2 3 1 2 3

ຮູບທີ 1 ທ່ານັ່ງ ຮູບທີ 2 ທ່າຢືນ

ຕົວຢ່າງ 2: ໂຄງຮ່າງການແຕ້ມໃບໜ້າ



ຮູບທີ 3 ໃບໜ້າ

## 4. ວິທີແຕ້ມດອກໄມ້ ແລະ ໃບໄມ້

- ພາຍຫຼັງທີ່ເຮົາສັງເກດເບິ່ງຈຸດພິເສດ, ຮູບຮ່າງລັກສະນະຂອງດອກໄມ້, ໃບໄມ້ແຕ່ລະຊະນິດທີ່ເຮົາຈະແຕ້ມແລ້ວ ຕ້ອງຈັດວາງຮູບພາບທີ່ຈະແຕ້ມເຂົ້າໃນແຜ່ນເຈ້ຍໃຫ້ສົມສ່ວນບໍ່ໃຫ້ນ້ອຍ ຫຼື ໃຫ່ຍໂພດ ເຊິ່ງເອີ້ນວ່າການຈັດພາບ ແລ້ວຈຶ່ງແຕ້ມໄປແຕ່ລະບາດກ້າວ.
- ຫຼັງຈາກທີ່ເຮົາໄດ້ໂຄງຮ່າງແລ້ວເຮົາຈິ່ງແບ່ງເສັ້ນກີບຂອງດອກໄມ້ທີ່ເຮົາແຕ້ມ ຫຼື ແບ່ງເສັ້ນໄຍຂອງໃບໄມ້ນັ້ນ.
- ຫຼັງຈາກທີ່ໄດ້ຮູບຮ່າງລະອຽດແລ້ວເຮົາຈິ່ງໃສ່ສີ ແສງເງົາ ຄວາມດຳຈາງຕາມທີ່ເຮົາແນມເຫັນ ເພື່ອໃຫ້ຮູບພາບທີ່ເຮົາແຕ້ມນັ້ນມີຊີວິດຊີວາຂຶ້ນ.

❖ **ຜົນປະໂຫຍດຂອງດອກໄມ້, ໃບໄມ້**

ດອກໄມ້ ແລະ ໃບໄມ້ເປັນດອກທີ່ມີສີສັນສວຍງາມ, ໃຫ້ຄວາມສົດໃສ, ມີກິ່ນຫອມທີ່ເປັນເອກະລັກ ແລະ ສ້າງຄວາມສົດຊື່ນໃຫ້ແກ່ຜູ້ພົບເຫັນ, ດອກໄມ້ແຕ່ລະຊະນິດແຕ່ລະສີຍັງແຝງໄປດ້ວຍຄວາມໝາຍອັນເລິກຊຶ້ງ. ສະນັ້ນ ໃນການຄັດເລືອກດອກໄມ້ໃຫ້ເໝາະສົມກັບເວລາໂອກາດ, ເພື່ອບອກຄວາມໃນໃຈໃຫ້ກັບຄົນທີ່ຮັກ ແລະ ຫ່ວງໃຍ ຄວາມປາດທະໜາດີໃຫ້ແກ່ຄົນພິເສດໃນຊີວິດ. ນອກຈາກນີ້ດອກໄມ້, ໃບໄມ້ຕ່າງໆ ມີບົດບາດສຳຄັນ ແລະ ມີຜົນປະໂຫຍດຢ່າງຫຼວງຫຼາຍໃນການປະດັບປະດາລວດລາຍຕ່າງໆ ໃຫ້ມີຄວາມສວຍງາມຂຶ້ນ. ຕົວຢ່າງ ເຄື່ອງໃຊ້ຂອງສອຍໃນຊີວິດປະຈຳວັນເປັນຕົ້ນ ຖ້ວຍ, ບ່ວງ, ໝໍ້, ໄຫ, ເຄື່ອງນຸ່ງຂອງຖື ແຜ່ນແພ ແລະ ອື່ນໆ. ຖ້າຫາກວ່າ ເພິ່ນເອົາຮູບດອກໄມ້, ໃບໄມ້ຕ່າງໆ ໄປປະດັບປະດາຢູ່ຕາມວັດວາອາຮາມ ເພິ່ນກໍ່ປະດິດໃຫ້ເປັນລວດລາຍໃຫ້ມີຄວາມສວຍງາມຂຶ້ນ.

❖ **ວິທີຄັດເລືອກດອກໄມ້ ເພື່ອແຕ້ມ**

1. ວິທີຄັດເລືອກ
   - ຕ້ອງຄັດເລືອກເອົາດອກ ຫຼື ໃບທີ່ມີຮູບຮ່າງສວຍງາມ
   - ຄັດເລືອກເອົາດອກໄມ້ ຫຼື ໃບທີ່ເຮົາສາມາດແຕ້ມງ່າຍ, ມີລັກສະນະລວດລາຍ ແລະ ສີສັນສວຍງາມ.

2. ວິທີສັງເກດ

- ກ່ອນເຮົາຈະແຕ້ມຮູບດອກໄມ້, ໃບໄມ້ອັນໃດໜຶ່ງ ເຮົາຄວນສັງເກດໃຫ້ລະອຽດວ່າ ມີຮູບຮ່າງລັກສະນະແນວໃດ?
- ການປະກອບສ້າງຂອງກີບດອກ, ໃບໄມ້ ແລະ ກ້ານຂອງດອກ, ໃບມີລັກສະນະອນວໃດ?
- ຄວນສັງເກດເບິ່ງສີສັນຂອງດອກ ແລະ ໃບມີຈຸດພິເສດແນວໃດ?
- ກ່ຽວກັບການປ່ຽນແປງທິກທາງຂອງດອກ ແລະ ໃບຕາມທີ່ເຮົາແນມເຫັນນັ້ນ ມີລັກສະນະແນວໃດ. ຕົວຢ່າງ ລວງຊື່, ລວງຂວາງ ແລະ ລວງທ່ຽງ.

3. ການແຕ້ມ

- ຕ້ອງແຕ້ມໃຫ້ຊັດເຈນຖືກກັບຮູບຮ່າງ, ລັກສະນະ ແລະ ຈຸດພິເສດຕົວຈິງຂອງດອກໄມ້, ໃບໄມ້.
- ຄວນເອົາໃຈໃສ່ເສັ້ນແຕ້ມໃຫ້ມີລັກສະນະອ່ອນນວນ, ບໍ່ແຂງກະດ້າງ ແລະ ໃຫ້ຖືກກັບລັກສະນະຂອງດອກໄມ້ ແລະ ໃບໄມ້ແຕ່ລະຊະນິດ.

1. ການຈັດວາງຮູບເຂົ້າຫຼາຍຫຼ່ຽມ

2. ຈັດເຂົ້າລວງຂອງເສັ້ນກິ່ງ





3. ແຕ້ມລະອຽດແຕ່ລະພາກສ່ວນ



## 5. ການຂຶ້ນໂຄງຮ່າງ

ແມ່ນການກຳນົດຂອບເຂດຂອງຮູບທີ່ຈະແຕ້ມລົງໃສ່ໜ້າເຈ້ຍໃຫ້ມີຄວາມເໝາະສົມດຸນດ່ຽງກັນທັງສີ່ດ້ານຂອງເຈ້ຍ ໂດຍບໍ່ໃຫ້ຮູບຂ້ອນໄປເບື້ອງໃດເບື້ອງໜຶ່ງຫຼາຍເກີນໄປ, ການຈັດພາບກໍ່ໃຫ້ມີຂະໜາດພໍດີ, ບໍ່ຄວນໃຫ່ຍໂພດ ແລະ ບໍ່ນ້ອຍໂພດ, ພາບຕ້ອງຢູ່ທາງກາງຂອງເຈ້ຍແຕ້ມ.

ເມື່ອກຳນົດຂອບເຂດທີ່ຈະແຕ້ມແລ້ວ ເລີ່ມໃຊ້ເສັ້ນສໍສ້າງຮູບຮ່າງລວມລົງໃນໜ້າເຈ້ຍ ໂດຍຜ່ານການສັງເກດໄປພ້ອມໃນເວລາແຕ້ມໂຄງຮ່າງ, ຈາກນັ້ນຈິ່ງແຕ້ມສ່ວນຕ່າງໆ ທີ່ເປັນຮູບຮ່າງທາງໃນໃສ່ໃຫ້ຄົບຖ້ວນ ແລະ ສົມທຽບກັບຕົວຈິງ ເວລານັ້ນເຮົາຈະຮູ້ວ່າຮູບຮ່າງທີ່ເຮົາແຕ້ມຄື ຫຼື ບໍ່, ຖ້າຄືກໍ່ລະບາຍສີ, ແສງເງົາ ຖ້າບໍ່ຄືກໍ່ປັບປ່ຽນ.

ເມື່ອໄດ້ຂອບເຂດການກຳນົດຂອງການຈັດພາບແລ້ວຈິ່ງເລີ່ມຕົ້ນການແຕ້ມໂຄງຮ່າງໃຫ້ມີຄວາມໃກ້ຄຽງກັນແບບ ແລະ ຖືກສັດສ່ວນຕາມແບບທີ່ແນມເຫັນ.

## 6. ການລະບາຍສີ ແສງ - ເງົາ

ໃນການໃສ່ສີແສງ-ເງົາ ກ່ອນອື່ນຄວນສັງເກດເບິ່ງແສງ-ເງົາທີ່ຢູ່ໃນແບບແຕ້ມໃຫ້ລະອຽດ ແລະ ກຳນົດຂອບເຂດແສງ-ເງົາໃສ່ໃນຮູບແຕ້ມໃຫ້ຖືກມາດຕາສ່ວນກັບຂອງຈິງທີ່ແນມເຫັນ.

ໃນການປະຕິບັດການໃສ່ເງົາຄວນລົງເງົາດ້ວຍເສັ້ນສໍເບົາໆ ແລະ ບາງຈົນທົ່ວຮູບ. ຈາກນັ້ນຈິ່ງເນັ້ນບ່ອນທີ່ເປັນເງົາເຂັ້ມຂຶ້ນຕາມລຳດັບຈົນເຖິງເງົາທີ່ຕິດພື້ນ ຫຼື ເອີ້ນວ່າ ເງົາຕົກທອດ. ຫຼັງຈາກໃສ່ເງົາແລ້ວເກັບລະອຽດດ້ວຍການລຶບບາງເສັ້ນທີ່ບໍ່ຕ້ອງການ ແລະ ເນັ້ນບາງບ່ອນທີ່ຕ້ອງການໃຫ້ເງົາເຂັ້ມຂຶ້ນ ເພື່ອເຮັດໃຫ້ຮູບພາບມີຄວາມລະອຽດຂຶ້ນຕື່ມ.

ການລະບາຍສີຕ້ອງໃຫ້ລະບາຍສີຖືກຕາມສີຕົວຈິງຂອງດອກໄມ້, ໃບໄມ້ ແລະ ໝາກໄມ້.



ຕົວຢ່າງ**:** ສີຮູບພາບທຳມະຊາດ



ຮູບທຳມະຊາດແລເງົາດ້ວຍສໍດຳ




ຮູບທຳມະຊາດທີ່ລະບາຍສີແລ້ວ

ຖ້າເປັນໄປໄດ້ຄວນໃຫ້ແບບຖືກແສງຕາເວັນ ຄວບຄຸມເນື້ອທີ່ທັງໝົດ ຈຶ່ງໃຫ້ຄວາມນິມນວນ,ໃນເລື່ອງແສງ-ເງົາແກ່ແບບທີ່ດີທີ່ສຸດໂດຍເຮົາອາດວາງແບບໄກ້ທາງແສງເຂົ້າ, ປະຕູ, ປ້ອງຢ້ຽມ ເປັນຕົ້ນຕອນສວຍ ຫາ ຕອນບ່າຍກໍ່ໃຫ້ເກີດມີເງົາໃນຕົວ ແລະ ເງົາຕົກທອດແກ່ວັດຖຸ.

## 7. ສິ່ງທີ່ຄວນເອົາໃຈໃສ່

- ການເລືອກດອກໄມ້ ແລະ ໃບໄມ້ແມ່ນເລືອກຮູບຮ່າງ, ລັກສະນະສີສັນຂອງດອກໄມ້ ແລະ ໃບໄມ້.
- ເອົາໃຈໃສ່ເຖິງໂຄງສ້າງຮູບຮ່າງຂອງຮູບແຕ້ມ ແລະ ວິທີແຕ້ມ.
- ການລະບາຍສີ ແມ່ນຄຳນຶງເຖິງສີຂອງດອກໄມ້ ແລະ ໃບໄມ້ຕົວຈິງທີ່ມີໃນທຳມະຊາດ ຫຼື ອີງໃສ່ວັດຖຸຕົວຈິງ.

## ໃຈຄວາມ

ການຮຽນໃນບົດນີ້ ແມ່ນພາກທິດສະດີນັກຮຽນຄູຈະໄດ້ຮຽນຮູ້ເຖິງ ຫຼັກການ ແລະ ວິທີການແຕ້ມ ຫຼັກການ ແລະ ວິທີການແຕ້ມປະກອບການສອນໃນຊັ້ນອະນຸບານ 1, 2, 3, ຫຼັກການ ແລະ ວິທີການແຕ້ມຮູບເໝືອນ, ວິທີການແຕ້ມຮູບດອກໄມ້ ແລະ ໃບໄມ້, ການຂຶ້ນໂຄງຮ່າງ, ການລະບາຍສີ ແສງ - ເງົາ ແລະ ສິ່ງທີ່ຄວນເອົາໃຈໃສ່ ເພື່ອຈັດເຂົ້າໃນການຮຽນ-ການສອນ ນອກຈາກນັ້ນຍັງໄດ້ອຳນວຍຄວາມສະດວກໃຫ້ແກ່ນັກຮຽນຄູຈະນຳໄປປະຕິບັດໃນຂັ້ນຕໍ່ໄປ.

## ວຽກມອບໝາຍ

- ໃຫ້ນັກຮຽນຄູແຕ້ມຮູບເໝືອນຜູ້ລະ 1 ຜົນງານ.
- ໃຫ້ນັກຮຽນຄູແຕ້ມຮູບດອກໄມ້ ແລະ ໄມ້ ຜູ້ລະ 1 ຜົນງານ.

## ຄຳຖາມ

1. ຈົ່ງອະທິບາຍຫຼັກການ ແລະ ວິທີແຕ້ມໃນຊັ້ນອະນຸບານ 1, 2,3 ?
2. ບອກຫຼັກການ ແລະ ວິທີແຕ້ມຮູບເໝືອນແມ່ນແນວໃດ?
3. ວິທີແຕ້ມຮູບດອກໄມ້ໄດ້ປະຕິບັດແນວໃດ?
4. ຈົ່ງອະທິບາຍການຂຶ້ນໂຄງຮ່າງ ແລະ ການໃສ່ສີ-ແສງເງົາ ?

# ບົດທີ 4

# ການແຕ້ມຮູບເພື່ອຮັບໃຊ້ການສອນ

ເວລາ 8 ຊົ່ວໂມງ
ຈຸດປະສົງ ໃຫ້ນັກຮຽນສາມາດ:

- ແຕ້ມຮູບຕ່າງໆໄດ້
- ແຕ້ມຮູບປະກອບເລື່ອງໄດ້
- ແຕ້ມຕົວອັກສອນລາວໄດ້
- ແຕ້ມປະດັບປະດາ ແລະ ປະດິດຈາກວັດສະດຸເສດເຫຼືອໄດ້

## 1. ແຕ້ມຮູບຕ່າງໆ

- ການແຕ້ມຮູບຕາມແບບ
- ການແຕ້ມຮູບຕາມຈິນຕະນາການ
- ແຕ້ມຕາມໃຈ
- ການແຕ້ມຕາມບົດເລື່ອງ
- ການແຕ້ມປະດັບປະດາ
- ການແຕ້ມຕາມໜ່ວຍການສອນ

## 2. ແຕ້ມຮູບປະກອບບົດເລື່ອງ

ບົດເລື່ອງ ແລະ ບົດນິທານຕ່າງໆ ຖ້າພວກເຮົາໄດ້ອ່ານແລ້ວຈະເຮັດໃຫ້ຜູ້ອ່ານ ແລະ ຜູ້ຟັງມະໂນພາບຈິນຕະນາການໄປຕາມເລື່ອງນັ້ນ. ຖ້າບົດເລື່ອງໜຶ່ງມີຮູບພາບປະກອບຈະເຮັດໃຫ້ບົດເລື່ອງນັ້ນຕື່ນເຕັ້ນ ແລະ ໜ້າສົນໃຈຍິ່ງຂຶ້ນ. ດັ່ງນັ້ນການແຕ້ມຮູບພາບປະກອບບົດເລື່ອງຈຶ່ງສາມາດຊ່ວຍໃນການຈັດກິດຈະກຳໃນຊັ້ນອະນຸບານໄດ້ຫຼາຍກິດຈະກຳ,ເຮັດໃຫ້ເດັກມີສ່ວນຮ່ວມໃນການເວົ້າຈາສົນທະນາ ແລະ ເປັນການສຸກຍຄ້ການຂະຫຍາຍພາສາຂອງເດັກພອ້ມກັນນັ້ນຍັງເປັນການສອນເດັກດວ້ຍການສອດແຊກສາລະຄວາມຮູ້ອື່ນໆ ເຂົ້າໃນບົດເລື່ອງໂດຍມີພາບປະກອບ.

- ອຸປະກອນ: ສໍດຳ, ຢາງລຶບ, ສີ, ສໍສີ, ເຟີດຂີດເສັ້ນ, ບັນທັດ
- ເຈັ້ຍA4, ກາວ, ເຈ້ຍແຂງ, ແຜນໃສ, ຖົງຢາງ, ສະກອ໋ດ

**+ ວິທີດຳເນີນ**

- ອ່ານບົດເລື່ອງໃຫ້ເຂົ້າໃຈດີແລ້ວແບ່ງບົດເລື່ອງອອກເປັນຕອນ.
- ຂຽນບົດເລື່ອງແຕ່ລະຕອນໃສ່ເບື້ອງລຸ່ມ ຫຼື ເບື້ອງເທິງຂອງໜ້າເຈ້ຍປະມານຂອງໜ້າເຈ້ຍ ແລະ 3ສ່ວນທີ່ເຫຼືອແມ່ນຈຶ່ງໄວ້ແຕ້ມຮູບປະກອບໃສ່.

- ແຕ້ມໂຄງຮ່າງຂອງຕົວລະຄອນ ແລະ ພາບປະກອບດ້ວຍຄອງສໍດໍາເບົາໆ ໃສ່ແຕ່ລະຕອນຂອງບົດເລື່ອງໃນການແຕ້ມຮູບຮ່າງອາດຈະແຕ້ມແບບກາຕູນ ຫຼື ເໝືອນຈິງກໍ່ໄດ້ ອີງຕາມການນໍາໃຊ້ຕົວຈິງວ່າໃຊ້ກັບເດັກນ້ອຍ ຫຼື ຜູ້ໃຫ່ຍ ຖ້າໃຊ້ກັບເດັກນ້ອຍສ່ວນຫຼາຍແມ່ນແຕ້ມແບບກາຕູນເພາະມີຄວາມຕື່ນເຕັ້ນດີ.
- ລະບາຍສີ, ແສງ-ເງົາເຮັດໃຫ້ຮູບພາບມີສີສັນເດັ່ນຂຶ້ນ ແລະ ເກັບລະອຽດເໜັ້ນເສັ້ນຂອງຮູບຕົວລະຄອນຕື່ມ.

ຕົວຢ່າງ**:** ຮູບເລື່ອງໄກ່ນ້ອຍບໍ່ຟັງຄວາມແມ່



ຮູບບໍ່ທັນໄດ້ລະບາຍສີ



ຮູບລະບາຍສີແລ້ວ

ຕົວຢ່າງ 2 ຮູບເລື່ອງຜັກກາດໃຫ່ຍ



ຮູບທີ 1




ຮູບທີ 2



ຮູບທີ 3




ຮູບທີ 4

## 3. ການແຕ້ມຕົວອັກສອນລາວ

ໃນການແຕ້ມຕົວໜັງສື ເພື່ອໃຫ້ເປັນລະບບຽບ ແລະ ເປັນການເຝິກການຂຽນ ການແຕ້ມຄວນປະຕິບັດດັ່ງນີ້:

- ວັດແທກຂະໜາດຕົວໜັງສືໃສ່ວັດຖຸທີ່ຈະແຕ້ມ ແລະ ໝາຍຈຸດຄວາມສູງ-ຕໍ່າ ແລ້ວຂີດເສັ້ນຂະໜາດຜ່ານຈຸດນັ້ນໃຫ້ສະເໝີກັນ.
- ວັດແທກຄວາມໜາ-ບາງຂອງຕົວໜັງສື ແລະ ວັດແທກຄວາມຫ່າງລະຫວ່າງຕົວໜັງສືແຕ່ລະຕົວໃຫ້ສະເໝີກັນໂດຍຂີດເສັ້ນເປັນຮູບ 4 ຫຼ່ຽມໄວ້
- ແຕ້ມໂຄງຮ່າງຂອງແຕ່ລະຕົວຕາມທີ່ຕ້ອງການ
- ລະບາຍສີໃຫ້ຢູ່ໃນຂອບເຂດຂອງຕົວໜັງສື
- ທຳຄວາມສະອາດ ລຶບຄອງສໍ ແລະ ເສັ້ນທີ່ບໍ່ຕ້ອງການໃຫ້ໝົດ.

ປະເພດຂອງຕົວໜັງສື: ແບບກົມ, ແບບແປ, ແບບ 4 ຫຼ່ຽມ, ແບບປະດິດ






## 4. ການແຕ້ມຮູບປະດັບປະດາ ແລະປະດິດຈາກວັດຖຸທີ່ເສດເຫຼືອ

### 4.1 ປະດັບປະດາຜະນັງກຽດ

ການປະດັບປະດາພະນັງກຽດເປັນການປຸກລະດົມນໍ້າໃຈແຂ່ງຂັນການປະຕິບັດລະບຽບວິໄນ ເປັນການຕີລາຄາ ແລະ ຍ້ອງຍໍຊົມເຊີຍຜົນງານ ຂອງເດັກອະນຸບານທີ່ສາມາດປະຕິບັດຢູ່ໃນຫ້ອງຮຽນໄດ້ຕາມຂໍ້ແຂ່ງຂັນທີ່ຖືວາງອອກ,ຈາກນັ້ນຍັງສ້າງໃຫ້ເດັກມີລະບຽບວິໄນຕື່ມອີກ.




**ຮູບພະນັງກຽດ**

## 4.2 ປະດັບປະດາຮູບພື້ນຖານຕ່າງໆ

ໝາຍເຖິງການແຕ້ມປະດັບປະດາຮູບພາບຕ່າງໆໃຫ້ມີຄວາມສວຍງາມ ທາງດ້ານງານສິລະປະສີມື ແລະ ມີຫົວຄິດປະດິດສ້າງ. ໃນການແຕ້ມປະດັບປະດາໃນໂຮງຮຽນ, ຫຼື ສະຖານທີ່ຕ່າງໆ ຄູຄວນເຝິກໃຫ້ນັກຮຽນອອກແບບເຝິກປະດັບປະດາໃນການແຕ້ມຮູບດອກໄມ້, ລວດລາຍຕ່າງໆ ທີ່ງ່າຍດາຍ ໃສ່ຮູບເລຂາຄະນິດ ເຊັ່ນ: ແຕ້ມປະດັບປະດາຮູບສີ່ຫຼ່ຽມ, ສາມຫຼ່ຽມ ແລະ ວົງມົນ...

ນອກຈາກນີ້ການປະດັບປະດາຕົວໜັງສືກໍ່ມີສ່ວນຊ່ວຍໃຫ້ນັກຮຽນມີແນວຄິດສ້າງສ້າງສັນປະດິດຄິດແຕ້ມໃຫ້ເປັນລວດລາຍ ເພື່ອຮັບໃຊ້ເຂົ້າໃນການຮຽນ, ຮັບໃຊ້ໃນການຂຽນຄຳຂວັນ ຫຼື ຕົກແຕ່ງຫ້ອງຮຽນ.

### 1. ປະດັບປະດາຮຸບຈະຕຸລັດ

ຮູບສີ່ຫຼ່ຽມມົນທົນແມ່ນຮູບທີ່ມີຂ້າງແຕ່ລະຂ້າງສະເໝີກັນເຊິ່ງເຮົາເອີ້ນວ່າ ຮູບຈະຕຸລັດ ໃນເມື່ອເວລາເຮົາແຕ້ມ ຫຼື ເບິ່ງແຕ່ຮູບພາບສີ່ຫຼ່ຽມມົນທົນນີ້ກໍ່ຈະມີລັກສະນະທີ່ແປນເປົ່າ ຫຼື ເປັນຮູບຫຼ່ຽມທຳມະດາ, ແຕ່ຖ້າວ່າພວກເຮົາມາສັງເກດເບິ່ງທາງດ້ານສິລະປະລວດລາຍແລ້ວໃນຮູບພາບສີ່ຫຼ່ຽມ ຫຼື ຮູບຈະຕຸລັດ ແລະ ຮູບອື່ນໆນັ້ນ ເພິ່ນໄດ້ນຳເອົາບັນດາຮູບຕ່າງໆມາປະກອບເປັນລວດລາຍທີ່ແຕກຕ່າງກັນໄປຕາມຄວາມຕ້ອງການຂອງຜູ້ແຕ້ມ.

❖ **ວິທີແຕ້ມ ແລະ ປະກອບລວດລາຍ**

- ຕ້ອງວັດແທກຂະໜາດຂອງຂ້າງຮູບສີ່ຫຼ່ຽມ ຫຼື ຮູບຈະຕຸລັດ ໃຫ້ສະເໝີກັນທັງສີ່ດ້ານ.
- ຊອກຫາຮູບພາບທີ່ເຮົາຕ້ອງການມາປະກອບໃສ່ໃຫ້ສົມດູນກັນກັບຮູບສີ່ຫຼ່ຽມມົນທົນທີ່ແຕ້ມໄວ້ ແຕ່ດໍ່ຄວນຈົ່ງຂອບໄວ້ໜ້ອຍໜຶ່ງເພື່ອຄວາມສວຍງາມ.
- ບໍ່ຄວນຈົ່ງຫວ່າງຫຼາຍເກີນໄປ ແລະ ບໍ່ໃຫ້ຮູບທີ່ເຮົາມາວາງໄວ້ນັ້ນໃຫ່ຍ ແລະ ນ້ອຍເກີນໄປຈະເຮັດໃຫ້ການປະດັບປະດາບໍ່ງາມ.

**ຕົວຢ່າງ 1 ປະດັບປະດາຮູບຈະຕຸລັດ**



## 2. ປະດັບປະດາຮຸບສີ່ແຈສາກ ແລະ ປະດັບປະດາຮູບອົງມົນ

❖ **ປະດັບປະດາຮຸບສີ່ແຈສາກ**

ຕົວຢ່າງ



1



2





3 4



5

3. **ປະດັບປະດາຮູບວົງມົນ**

ການປະດັບປະດາແມ່ນສິລະປະລວດລາຍຂອງເສັ້ນຢູ່ໃນເສັ້ນຂອບເຂດຮູບວົງມົນ ແລະ ກໍສະແດງເຖິງຄວາມໝາຍອັນໃດໜຶ່ງຕາມຄວາມປະສົງຜູ້ແຕ້ມ.

**ຕົວຢ່າງ** ຢູ່ຕາມບັນດາເຄື່ອງໃຊ້ສອຍໃນຊີວິດປະຈຳວັນຈະເປັນ ຖ້ວຍ, ຊາມ, ແອ່ງ, ໝໍ້, ໄຫ, ໂອ ຫຼື ອື່ນໆ ອີກທີ່ເພີ່ນປະດັບປະດາໃຫ້ມີຄວາມສວຍງາມ

ນອກຈາກເຄື່ອງໃຊ້ໃນຊີວິດປະຈຳວັນແລ້ວ ເພີ່ນຍັງນຳໃຊ້ ຫຼື ປະດັບປະດາຢູ່ຕາມສະຖານທີ່ສັກກາລະບູຊາ ເຊັ່ນ: ວັດວາອາຮາມ ແລະ ສະຖານທີ່ ທີ່ສວຍງາມຕ່າງໆ, ຕົວຢ່າງ: ຫໍຮັບແຂກ, ຫ້ອງປະຊຸມ, ຮ້ານອາຫານ.

ຮູບພາບເອກທີ່ເປັນພາບເດັ່ນຢູ່ໃຈກາງຂອງວົງມົນມີພາບສຳຮອງປົ້ນອ້ອມພາບເອກ ແລະ ພາບອື່ນເປັນພາບປະກອບ, ສ່ວນຮູບພາບຂອງວົງມົນແມ່ນຮັກສາໄວ້ຄືເກົ່າ, ການປະດັບປະດາຮູບວົງມົນບາງຮູບແບບກໍສາມາດໃຊ້ລວດລາຍລາວເຂົ້າຊ່ວຍ ເຊັ່ນ: ລາຍດອກຕາເວັນ, ລາຍຮູບສັດ ແລະ ລາຍຮູບອື່ນໆ ຫຼື ຈະໃຊ້ແບບສີສັນອື່ນໆ ຕາມຄວາມຕ້ອງການຂອງຜູ້ປະດິດຄິດແຕ້ມຂຶ້ນ.

**+ ວິທີແຕ້ມ**

ເພື່ອຊອກຫາຂະໜາດ ຂອງຮູບວົງມົນ ແລະ ການແບ່ງສ່ວນຂອງລວດລາຍ, ສິ່ງທີ່ປະດັບປະດານັ້ນ ຄວນປະຕິບັດດັ່ງນີ້:

- ຄວນຂີດ ຫຼື ແຕ້ມຮູບສີ່ຫຼ່ຽມມົນທົນ (ຈະຕຸລັດ) ໃຫ້ແຕ່ລະຂ້າງສະເໝີກັນ. (ຮູບທີ1)
- ຂີດເສັ້ນຜ່າໃຈກາງຮູບສີ່ຫຼ່ຽມມົນທົນ ແລະ ຕັດກັນຢູ່ຈຸດເຄິ່ງກາງ ຫຼື ຂີດເສັ້ນໄຂ່ວຕີນກາ (ຮູບທີ 2)



ຮູບທີ 1



ຮູບທີ 2

- ໃຊ້ອຸປະກອນຂີດເສັ້ນວົງມົນ ໃນຂອບເຂດຂອງຮູບສີ່ຫຼ່ຽມມົນທົນໂດຍຖືເອົາຈຸດໃຈກາງອັນດຽວກັນ
- ແບ່ງເສັ້ນຮູບວົງມົນນ້ອຍ ຊ້ອນຢູ່ໃນຕື່ມອີກ ຫຼື ສ້າງຮູບວົງມົນນ້ອຍຢູ່ດ້ານໃນ ເພື່ອໃຫ້ເປັນພາບເອກຂອງການແຕ້ມປະດັບປະດາຮູບວົງມົນ.



ຮູບທີ3

- ເລີ່ມໃຊ້ອຸປະກອນແຕ້ມຮູບຮ່າງ ລວດລາຍ, ໄປຕາມຄວາມຕ້ອງການ.
- ລຶບເສັ້ນຮູບສີ່ຫຼ່ຽມມົນທົນ ແລະ ເສັ້ນທີ່ຢູ່ເບື້ອງນອກຂອງຮູບວົງມົນອອກໃຫ້ໝົດ
- ລຶບເສັ້ນຊື່ໃນຮູບວົງມົນນ້ອຍອອກແລ້ວສ້າງໃຫ້ເປັນຮູບຮ່າງດອກໄມ້ ຫຼື ຮູບຮ່າງສັດໃສ່ໃນຮູບວົງມົນນ້ອຍ.



ຮູບທີ 4

- ແຕ້ມຮູບສັດ, ຮູບດອກໄມ້ ຫຼື ແມງໄມ້ກໍ່ໄດ້ໃສ່ສີ່ຈຸດ ອ້ອມວົງມົນນ້ອຍ.

- ແຕ້ມຮູບຮ່າງດອກໄມ້ ແລະ ອື່ນໆ ໃສ່ສີ່ຈຸດສະຫຼັບກັບພາບສຳຮອງ.
- ລຶບເສັ້ນຊີ່ຕ່າງໆ ທີ່ຢູ່ໃນວົງມົນໃຫ່ຍອອກໃຫ້ໝົດແລ້ວເຮົາຈະໄດ້ຮູບຮ່າງການຈັດວາງພາບທີ່ສົມບູນ.
- ລະບາຍສີພື້ນໃສ່ຊ່ອງຫວ່າງດ້ວຍສີສົດໃສຕາມຄວາມມັກ.
- ລະບາຍສີຮູບຮ່າງຕ່າງໆ ທີ່ສ້າງໄວ້ໃຫ້ເໝາະສົມ
- ລົ້ມເສັ້ນຄືນດ້ວຍສີເຂັ້ມ ແລະ ໃຫ້ມີຄວາມຄົມຂອງເສັ້ນ.



ຮູບທີ 5

## 4. ປະດັບປະດາຮູບສາມແຈ

ການແຕ້ມປະດັບປະດາຂອບ ຫຼື ຮູບ ສາມແຈເປັນສິລະປະການຕົບແຕ່ງຊັບຊ້ອນຮູບພາບໃສ່ໃຫ້ມີລວດລາຍອັນສວຍງາມ, ການແຕ້ມປະດັບປະດາຮູບນີ້ບໍ່ຕ້ອງການຮູບປະກອບຫຼາຍປານໃດ ແຕ່ຕ້ອງການ ສະຫຼັບພາບ ແລະ ການລົ້ມພາບໃຫ້ຄືກັນແບບນັ້ນໄປຕະຫຼອດເຊິ່ງເພິ່ນມັກໃຊ້ຮູບຂອບເຂົ້າໃນ ການປະດັບປະດາຂອບໃບປະກາດໃບຍ້ອງຍໍ, ຂອບຝາພະໜັງ, ປະດັບປະດາຕາມວັດວາອາລາມ ແລະ ສະຖານທີ່ອື່ນໆ.

**+ ຄວາມໝາຍສຳຄັນຂອງການປະດັບປະດາ ຮູບສາມຫຼ່ຽມ**

ການປະດັບປະດາ ຮູບສາມຫຼ່ຽມແມ່ນສິລະປະລວດລາຍອັນໜຶ່ງທີ່ສາມາດນຳໄປປະດັບປະດາເອ້ຍ້ອງຕາມສະຖານທີ່ຕ່າງໆ ທີ່ມີຮູບຮ່າງລັກສະນະຂອງຮູບສາມແຈ ຫຼື ປະດັບປະດາຢູ່ຕາມແຈຂອງຮູບສີ່ຫຼ່ຽມ.

ສິລະປະລວດລາຍຂອງຮູບສາມຫຼ່ຽມແລ້ວ, ສ່ວນຫຼວງຫຼາຍເພິ່ນຈະເອົາໄປປະດັບປະດາຢູ່ຕາມແປສົມ ຫຼື ສີໜ້າສົມວັດ, ຫໍແຈກ ຫຼື ສະຖານທີ່ສະທາລະນະອື່ນໆ ທີ່ສຳຄັນ. ຮູບແບບສິລະປະລວດລາຍກໍ່ຈະມີຫຼາຍຮູບແບບທີ່ມີລັກສະນະແຕກຕ່າງກັນໄປ, ແຕ່ມີລັກສະນະສິລະປະວັດທະນາທຳອັນສວຍງາມ, ເຊິ່ງຜູ້ແຕ່ງແຕ້ມນັ້ນ ໄດ້ນຳໃຊ້ທຸກສິ່ງຢ່າງທີ່ມີໃນທຳມະຊາດມາປະກອບເຂົ້າກັນ ເພື່ອສ້າງໃຫ້ເປັນລວດລາຍທີ່ມີລັກສະນະຊາດ.

**+ ວິທີແຕ້ມ ແລະ ລວດລາຍ**

- ຂີດເສັ້ນໃຫ້ເປັນຮູບສາມຫຼ່ຽມ (ສາມແຈ) ແຕ່ລະຂ້າງວັດແທກສະເໝີກັນ.
- ຂີດໂຄງຮ່າງຕ່າງໆ ຂອງລວດລາຍ ຫຼື ຮູບຮ່າງອື່ນໆ ຕາມຄວາມຕ້ອງການທີ່ຈະແຕ້ມໃຫ້ຢູ່ໃນຂອບເຂດຂອງຮູບສາມຫຼ່ຽມ.
- ແຕ້ມລະອຽດໄປຕາມຮູບແບບທີ່ຂຶ້ນໂຄງຮ່າງແບບ.

ຕົວຢ່າງ ປະດັບປະດາລາຍກະຈັງຕາອ້ອຍ



ຮູບທີ 1 ຮູບທີ 2 ຮູບທີ 3 ຮູບທີ 4

## 5. ປະດັບປະດາຮູບດອກຈັນ

ການແຕ້ມປະດັບປະດາຮູບດອກຈັນເປັນສິລະປະການຕົບແຕ່ງຊັບຊ້ອນຮູບພາບໃສ່ໃຫ້ມີລວດລາຍອັນສ່ວຍງາມ, ການແຕ້ມປະດັບປະດາຮູບໃຫ້ມີຄວາມສວຍງາມເຊິ່ງເພິ່ນມັກໃຊ້ຮູບຂອບເຂົ້າໃນການປະດັບປະດາໃບປະກາດ, ໃບຍ້ອງຍໍ, ຂອບພະໜັງ, ປະດັບປະດາຕາມວັດວາອາລາມ ແລະ ບ່ອນອື່ນໆ



ຮູບທີ 1



ຮູບທີ 2



ຮູບທີ 3



ຮູບທີ 4

## 6. ປະດັບປະດາຮູບສີ່ຫຼ່ຽມຍາວ (ຂອບຮູບ)

ການປະດັບປະດາຮູບສີ່ຫຼ່ຽມຍາວແມ່ນສິລະການຕົກແຕ່ງທີ່ມີຄວາມສວຍສົດງົດງາມ ເພື່ອສະແດງເຖິງເອກະລັກຂອງຊາດ ຫຼື ຄວາມສວຍງາມໃນຊີວິດປະຈຳວັນຂອງສັງຄົມ.

ດັ່ງນັ້ນ ການປະດັບປະດາ ຮູບສີ່ຫຼ່ຽມຍາວສາມາດເວົ້າໄດ້ວ່າ ແມ່ນສິລະປະຕົບແຕ່ງຮັບໃຊ້ສັງຄົມທົ່ວໄປ.

**ຕົວຢ່າງ:** ຂອບຂອງໃບຍ້ອງຍໍຊົມເຊີຍ, ໃບປະກາດສະນີຍະບັດ, ຂອບຮູບ, ພະນັງກຽດ ຢູ່ຕາມສະຖານທີ່ສັກກາລະບູຊາ ແລະ ອື່ນໆ.

**+ ວິທີແຕ້ມ ແລະ ປະດັບປະດາ**

- ວັດແທກຄວາມກ້ວາງ ຄວາມຍາວ ຕາມຄວາມເໝາະສົມ, ຫຼັງຈາກນັ້ນແບ່ງເປັນສ່ວນສະເໝີກັນ.
- ແບບແຜນ (ໂຄງຮ່າງລວມ) ຂອງລວດລາຍ ຮູບພາບຕ່າງໆ ໃຫ້ເໝາະສົມກັບເສັ້ນຂອງຂອບທີ່ວັດແທກໄວ້.
- ເກັບເສັ້ນ (ຂີດເສັ້ນ) ລວດລາຍ ຫຼື ຮູບພາບໃຫ້ລະອຽດ.
- ໃສ່ສີສັນ ໃຫ້ມີຄວາມເດັ່ນຊັດ ແລະ ແຈ້ງຂຶ້ນ.

**ຕົວຢ່າງ**

- ຂັ້ນຕອນການແຕ້ມກີບດອກຕໍ່ເນື່ອງ ແລະ ການຊ້ອນກີບນອກ.



- ຂັ້ນຕອນການແຕ້ຊ້ອນກາບໃບ ແລະ ການບາກລາຍໃນແຕ່ລະກີບ



## ❖ ສິ່ງທີ່ຄວນເອົາໃຈໃສ່:

- ເວລາແຕ້ມໃຫ້ເອົາໃຈໃສ່ແຈມູມແຕ້ມ
- ການສ້າງໂຄງຮ່າງ
- ການກຳນົດພາບ
- ການລະບາຍສີ

## 4.3 ປະດັບປະດາວັດຖຸທີ່ເສດເຫຼືອຕ່າງໆ

ການປະດັບປະດາສິ່ງຕ່າງໆ ແມ່ນໄດ້ມາຈາກວັດຖຸທີ່ເສດເຫຼືອ ແລະ ສິ່ງທີ່ມີໃນທຳມະຊາດ, ເອົາມາເສີມເຕີມແຕ່ງ, ເອ້ຍ້ອງໃຫ້ມັນສວຍງາມຂຶ້ນຕາມຄວາມຕ້ອງການ.

**ຕົວຢ່າງ:**



ຮູບປະດັບປະດາດ້ວຍກວດນ້ຳ



ຮູບປະດັບປະດາດ້ວຍການປູກດອກໄມ້ໃສ່ກະໂປະໝາກພ້າວ





ຮູບໂຕໝູ ເຮັດດ້ວຍກວດນໍ້າດື່ມ

ຮູບແມງມູມເຮັດດ້ວຍຈອກຢາງ ແລະ ທໍ່ດູດ





ຮູບໂຕປາ ເຮັດດ້ວຍຈານຢາງ

ຮູບໃບວີເຮັດດ້ວຍຈານຢາງ

## ໃຈຄວາມ

ການຮຽນໃນບົດນີ້ ແມ່ນພາກທິດສະດີນັກຮຽນຄູຈະໄດ້ຮຽນຮູ້ເຖິງວິທີການແຕ້ມຮູບຕ່າງໆ, ແຕ້ມຮູບປະກອບເລື່ອງ, ການແຕ້ມຕົວອັກສອນລາວ ແລະ ແຕ້ມປະດັບປະດາ ແລະ ປະດິດຈາກວັດສະດຸເສດເຫຼືອ ເພື່ອຈັດເຂົ້າໃນການຮຽນ-ການສອນ. ນອກຈາກນັ້ນຍັງໄດ້ອໍານວຍຄວາມສະດວກໃຫ້ແກ່ເດັກນັກຮຽນຄູຈະນໍາໄປປະຕິບັດໃນໂຮງຮຽນອະນຸບານ.

## ວຽກມອບໝາຍ

- ໃຫ້ນັກຮຽນຄູແຕ້ມຮູບປະກອບເລື່ອງ ຜູ້ລະ 1 ເລື່ອງ
- ໃຫ້ນັກຮຽນຄູແຕ້ມປະດັບປະດາ ແລະ ປະດິດຈາກເສດວັດສະດຸເສດເຫຼືອ

## ຄໍາຖາມ

1. ການແຕ້ມຮູບປະກອບເລື່ອງແມ່ນແນວໃດ ?
2. ການແຕ້ມຕົວອັກສອນລາວໄດ້ປະຕິບັດແນວໃດ ?

3. ການປະດັບປະດາໝາຍເຖິງຫຍັງ

# ບົດທີ 5

# ຄວາມຮູ້ເບື້ອງຕົ້ນກ່ຽວກັບສິລະປະຫັດຖະກຳ

ເວລາ 4 ຊົ່ວໂມງ

ຈຸດປະສົງ ໃຫ້ນັກຮຽນສາມາດ:

- ອະທິບາຍຄວາມໝາຍ, ຄວາມສຳຄັນຂອງສິລະປະຫັດຖະກຳໄດ້
- ບອກຈຸດປະສົງຂອງສິລະປະຫັດຖະກຳອຸປະກອນຮັບໃຊ້ໃນວິຊາຫັດຖະກຳໄດ້
- ອະທິບາຍສາຍພົວພັນລະຫວ່າງວິຊາຫັດຖະກຳກັບວິຊາອື່ນໆ ແລະ ກິດຈະກຳສຳລັບເດັກໄດ້

## 1. ຄວາມໝາຍ, ຄວາມສຳຄັນຂອງສິລະປະຫັດຖະກຳ

❖ **ຄວາມໝາຍຂອງສິລະປະຫັດຖະກຳ**

ສິລະປະຫັດຖະກຳ ໝາຍເຖິງ ການສະແດງຜົນງານດ້ານສີໄມ້ລາຍມືຂອງຜູ້ປະດິດໃຫ້ເປັນຮູບຮ່າງຕາມຄວາມຕ້ອງການໂດຍອີງໃສ່ວັດຖຸຕົວຈິງທີ່ມີໃນທ້ອງຖິ່ນ ເພື່ອປະດິດຮັບໃຊ້ໃນສັງຄົມ ແລະ ຮັບໃຊ້ໃນຊີວິດປະຈຳວັນ.

❖ **ຄວາມສຳຄັນສຳຂອງສິລະປະຫັດຖະກຳ**

ແມ່ນມີຄວາມສຳຄັນສຳລັບເດັກ ເພື່ອເປັນການເຝິກແອບມືອັນອ່ອນນ້ອຍທີ່ບໍ່ເຄີຍໄດ້ສຳພັດຈັກເທື່ອ, ເພື່ອເປັນການເຝິກແອບກ້າມຊີ້ນນ້ອຍໃຫ້ມີຄວາມຊຳນິຊຳນານຂຶ້ນເທື່ອລະກ້າວ.

ສະນັ້ນ ຄູຄວນສົ່ງເສີມໃຫ້ເດັກມີຫົວຄິດປະດິດສ້າງ ທາງດ້ານສິລະປະຫັດຖະກຳຢ່າງກວ້າງຂວາງໄປເທື່ອລະໜ້ອຍ, ຈາກພື້ນຖານທີ່ງ່າຍໄປຫາຍາກ ແລະ ກ້າວຂຶ້ນສູ່ຂັ້ນສັບສົນ.

## 2. ຈຸດປະສົງຂອງສິລະປະຫັດຖະກຳ, ອຸປະກອນຮັບໃຊ້ໃນວິຊາຫັດຖະກຳ

❖ **ຈຸດປະສົງຂອງສິລະປະຫັດຖະກຳ**

- ແນໃສ່ພັດທະນາສັງເກດຂອງເດັກ.
- ໃຫ້ເດັກໄດ້ເຝິກແອບໃຊ້ອຸປະກອນການໃຊ້ໃນຫັດຖະກຳຊະນິດຕ່າງໆ.
- ເຝິກແອບກ້າມຊີ້ນມືໃຫ້ມີການຂະຫຍາຍຕົວ.
- ພັດທະນາແນວຄິດສ້າງສັນຂອງເດັກເຮັດໃຫ້ເດັກເກີດມີຈິດໃຈສະຫງວນມັກຄວາມງາມ.
- ເສີມສ້າງພັດທະນາການ 5 ດ້ານຂອງເດັກໃນຊັ້ນອະນຸບານ.

❖ **ປະເພດອຸປະກອນຮັບໃຊ້ໃນວິຊາ ຫັດຖະກຳ**

1. **ປະເພດດິນ:** ດິນດາກ, ດິນໜຽວ, ດິນຊາຍ, ດິນດຳ, ຂີ້ຫີນ, ດິນວິທະຍາສາດ ແລະ ດິປະເພດອື່ນໆ...


ດິນດາກ


ດິນໜຽວ


ດິນຊາຍ


ດິນດຳ


ກ້ອນຫີນນ້ອຍ


ປຸກດອກໄມ້ດ້ວຍດິນວິທະຍາສາດ


ດິນນ້ຳມັນມັນ

2. **ປະເພດເຈ້ຍ**

ເຈ້ຍສີ, ເຈ້ຍແຂງ, ເຈ້ຍຂາວ, ເຈ້ຍໜັງສືພິມ, ເຈ້ຍມຸ່ນ, ເຈ້ຍເສດ ແລະ ອື່ນໆ

 

3. **ປະເພດໃບໄມ້:** ໃບຕອງ, ໃບເຕີຍ, ໃບຟ້າວ, ໃບລານ, ໃບຂາມ ແລະ ໃບໄມ້ປະເພດອື່ນໆ…



ໃບຕອງ



ໃບເຕີຍ



ໃບຟ້າວ





ໃບລານ



ໃບຂາມ



ໃບໄມ້ປະເພດອື່ນໆ

## 4. ປະເພດແປ້ງ

ແປ້ງເຂົ້າຈ້າວ, ແປ້ງເຂົ້າໜຽວ, ແປ້ງສາລີ, ແປ້ງສິງກະໂປ ແລະ ອື່ນໆ...





ແປ້ງເຂົ້າຈ້າວ ແປ້ງເຂົ້າໜຽວ





ແປ້ງສາລີ ແປ້ງສີງກະໂປ

**5. ປະເພດແກ່ນ**

ແກ່ນສາລີ, ແກ່ນໝາກຖົ່ວ, ແກ່ນໝາກກະຖິນ, ແກ່ນໝາກໂມ, ເມັດເຂົ້າ, ເມັດໝາກງາ,ແກ່ນໝາກຂາມ ແລະ ອື່ນໆ.



ຮູບທີ 1 ແກ່ນສາລີ



ຮູບທີ 2 ແກ່ນໝາກຖົ່ວ



ຮູບທີ 3 ແກ່ນໝາກກະຖິນ



ຮູບທີ 4 ແກ່ນໝາກໂມ



ຮູບທີ 5 ເມັດເຂົ້າ



ຮູບທີ 6 ເມັດໝາກງາ



ຮູບທີ 7 ແກ່ນໝາກຂາມ

ນອກຈາກຮູບຂ້າງເທິງນັ້ນ ຍັງມີຮູບອຸປະກອນຊະນິດອື່ນໆ ອີກເຊັ່ນ: ມີດຕັດ, ສະກັອດ-ກາວ, ສໍສີ ແລະ ສີນ້ຳ...



ຮູບທີ 8 ມີດຕັດ




ຮູບທີ 9 ອຸປະກອນຮັບໃຊ້




ຮູບທີ 10 ປ່ອງນ້ຳສີ

## 6. ປະເພດໄມ້

ໄມ້ໄຜ່, ໄມ້ພາງ, ໄມ້ເຮ້ຍ, ໄມ້ຊອດ, ໄມ້ກົມ ແລະ ໄມ້ອື່ນໆ...







## 7. ອຸປະກອນປະກອບໃນການຜະລິດ

ກາວລາເຕັກ, ເຫຼັກຕາປູ, ຄ້ອນຕີ, ເຫຼັກລວດ, ເຊືອກຟາງ, ເຊືອກປໍ, ພ້າ, ເລື່ອຍ ແລະ ອື່ນໆ...




ຮູບທີ 1 ກາວລາເຕັກ



ຮູບທີ 2 ເຫຼັກຕາປູ



ຮູບທີ 3 ຄ້ອນຕີ



ຮູບທີ 4 ເຫຼັກລວດ



ຮູບທີ 5 ເຊືອກຟາງ



ຮູບທີ 6 ເຊືອກປໍ





ຮູບທີ 7 ເຊືອກຢາງ ຮູບທີ 8 ເລື່ອຍ

**ກິດຈະກຳ**

- ອະທິບາຍຄວາມໝາຍຄວາມສຳຄັນຂອງສີລະປະຫັດຖະກຳ
- ບອກຈຸດປະສົງ ແລະ ບອກຊື່ອຸປະກອນຮັບໃຊ້ໃນ ວິຊາ ຫັດຖະກຳ

**ວິທີດຳເນີນກິດຈະກຳ**

**ກິດຈະກຳທີ 1** ຄູລະດົມສະໝອງນັກຮຽນໝົດຫ້ອງດ້ວຍການຕັ້ງ ຄຳຖາມດັ່ງລຸ່ມນີ້:

1. ວິຊາຫັດຖະກຳຄວາມໝາຍຄວາມສຳຄັນແນວໃດ?

- ໃຫ້ນັກຮຽນອາສາສະໝັກຕອບ
- ຄູສະຫຼຸບເນື້ອໃນຂອງບົດຮຽນຄືນ

**ກິດຈະກຳທີ 2** ຄູແບ່ງນັກຮຽນອອກເປັນກຸ່ມ ແຕ່ລະກຸ່ມໃຫ້ອ່ານເນື້ອໃນຂອງບົດຮຽນ ຂໍ້ທີ ສອງ ຫຼັງຈາກອ່ານແລ້ວໃຫ້ບອກຊື່ອຸປະກອນປະເພດຕ່າງໆ ທີ່ມີໃນທ້ອງຖິ່ນນອກຈາກມີຢູ່ໃນປຶ້ມ.

- ໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ.
- ຄູບັນທຶກໃສ່ກະດານແລ້ວສະຫຼຸບເນື້ອໃນຂອງບົດຮຽນຄືນ.

## 3. ສາຍພົວພັນລະຫວ່າງວິຊາຫັດຖະກຳກັບວິຊາອື່ນໆ ແລະ ກິດຈະກຳສຳລັບເດັກ

ວິຊາຫັດຖະກຳມີຄວາມສຳຄັນ ແລະ ມີສາຍພົວພັນກັບຫຼາຍວິຊາເຊັ່ນ ວິຊາ ແຕ້ມ, ວິຊາ ຄະນິດສາດ ວິຊາ ພາສາວັນນະຄະດີເດັກ, ວິຊາ ຊອກຮູ້ສະພາບແວດລ້ອມ, ວິຊາ ດົນຕີຟ້ອນ, ວິຊາ ຈິດຕະສາດ, ວິຊາ ສຶກສາສາດ ວິຊາ ກາຍະກຳ ແຕ່ລະວິຊາຈະໄດ້ນຳເອົາຜົນຂອງການປະດິດໄປນຳໃຊ້ເຂົ້າໃນການຈັດການຮຽນ-ການສອນຢູ່ໃນຊັ້ນອະນຸບານ, ເພື່ອເຮັດໃຫ້ເດັກມີການພັດທະນາການຮຽນທັງ 4 ດ້ານ.

**ກິດຈະກຳ** ອະທິບາຍສາຍພົວພັນ ລະຫວ່າງ ວິຊາຫັດຖະກຳກັບວິຊາ ຕ່າງໆ

**ວິທີດຳເນີນກິດຈະກຳ**

ແບ່ງນັກຮຽນອອກເປັນກຸ່ມແຕ່ລະກຸ່ມຄົ້ນຄ້ວາດັ່ງນີ້:

- ໃຫ້ອະທິບາຍສາຍພົວພັນ ລະຫວ່າງ ວິຊາຫັດຖະກຳກັບວິຊາ ແຕ້ມ ແລະ ວິຊາ ຄະນິດສາດ
- ໃຫ້ອະທິບາຍສາຍພົວພັນ ລະຫວ່າງ ວິຊາ ພາສາວັນນະຄະດີເດັກ ແລະ ວິຊາ ຊອກຮູ້ສະພາບແວດລ້ອມ.
- ໃຫ້ອະທິບາຍສາຍພົວພັນ ລະຫວ່າງ ວິຊາ ດົນຕີຟ້ອນ ແລະ ວິຊາ ຈິດຕະສາດ.
- ໃຫ້ອະທິບາຍສາຍພົວພັນ ລະຫວ່າງ ວິຊາ ສຶກສາສາດ ແລະ ວິຊາ ກາຍະກຳ.
- ໃຫ້ນັກຮຽນ ແຕ່ລະກຸ່ມຄົ້ນຄ້ວາຕາມ ຄຳຖາມ.
- ໃຫ້ຕາງໜ້າແຕ່ລະກຸ່ມຂຶ້ນລາຍງານ.
- ຄູບັນທຶກໃສ່ກະດານ ແລະ ສະຫຼຸບເນື້ອໃນທີ່ຍັງບໍ່ທັນຄົບຖ້ວນ.

## ໃຈຄວາມ

ວິຊາ ຫັດຖະກຳແມ່ນວິຊາໜຶ່ງທີ່ມີຄວາມໝາຍຄວາມສຳຄັນຕໍ່ກັບການພັດທະນາເດັກ ເພື່ອເປັການເຝິກແອບທາງດ້ານກ້າມຊີ້ນນ້ອຍ ແລະ ກ້າມຊີ້ນໃຫ່ຍ ເຊິ່ງມັນສະແດງອອກໃນເວລາຈັດກິດຈະກຳການສອນຢູ່ໃນຊັ້ນອະນຸບານ ແລະ ມີສາຍກ່ຽວພັນກັບວິຊາອື່ນ, ເຊິ່ງເຮັດໃຫ້ມີຄວາມເບີກບານມ່ວນຊື່ນ ແລະ ຫ້າວຫັນຕໍ່ການຮຽນ.

**ວຽກມອບໝາຍ**

ມອບໃຫ້ນັກຮຽນປະຕິບັດກິດຈະກຳໃນຫ້ອງຮຽນ

**ຄຳຖາມ**

1. ວິຊາຫັດຖະກຳຄວາມໝາຍຄວາມສຳຄັນແນວໃດຕໍ່ກັບເດັກ?
2. ວິຊາຫັດຖະກຳມີຈຸດປະສົງເພື່ອຫັຍງຕໍ່ກັບເດັກ?
3. ອຸປະກອນທີ່ນຳມາໃຊ້ເຂົ້າໃນວິຊາຫັດຖະກຳມີປະເພດໃດແດ່?
4. ວິຊາຫັດຖະກຳມີສາຍພົວພັນກັບວິຊາໃດແດ່? ໃຫ້ອະທິບາຍສາຍພົວພັນແຕ່ລະວິຊາໃຫ້ລະອຽດ?

# ບົດທີ 6

# ການປັ້ນ

ເວລາ 4 ຊົ່ວໂມງ

ຈຸດປະສົງ ໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຂອງການປັ້ນໄດ້
- ບອກຈຸດປະສົງຂອງການປັ້ນໄດ້
- ອະທິບາຍຄຸນປະໂຫຍດຂອງການປັ້ນໄດ້

- ອະທິບາຍອຸປະກອນຂອງການປັ້ນໄດ້
- ປັ້ນຮູບຕ່າງໆ ເພື່ອນໍາໃຊ້ເຂົ້າໃນຊີວິດປະຈໍາວັນໄດ້

## 1. ຄວາມໝາຍຂອງການປັ້ນ

ການປັ້ນແມ່ນສິລະປະປະເພດໜຶ່ງທີ່ນອນໃນກິດຈະກໍາສ້າງສັນໂດຍໃຊ້ດິນຈາກທໍາມະຊາດ, ດິນວິທະຍາສາດມາປັ້ນໃຫ້ເປັນຮູບຮ່າງຕ່າງໆ ຕາມຄວາມຕ້ອງການຂອງຜູ້ປັ້ນໂດຍອີງໃສ່ວັດຖຸສິ່ງຂອງຕ່າງໆ ເຊັ່ນ: ຄົນ ສັດ ໝາກໄມ້, ວັດຖຸໃຊ້ສອຍ ແລະ ອື່ນໆ.

ການປັ້ນແມ່ນການເຝິກແອບກາ້ມຊີ້ນມື ໂດຍຜາ່ນການໜວດ, ປີບ, ຄັ້ນ, ທຶບ, ຕີດິນໃຫ້ລະອຽດ ແລ້ວນໍາມາລໍ, ກິ້ງ, ປັ້ນໄປຕາມຮູບຮ່າງວັດຖຸທີ່ເຮົາຕ້ອງການ ຕາມຈິນຕະນາການ ເພື່ອໃຫ້ເປັນຜະລິດຕະພັນ ຫຼື ຜົນງານທາງດ້ານສິລະປະຮັບໃຊ້ໃນຊີວິດປະຈໍາວັນ ແລະ ສັງຄົມ.

❖ **ຄວາມສໍາຄັນຂອງການສອນປັ້ນ**

ການປັ້ນມີຄວາມສໍາຄັນທີ່ສຸດສໍາລັບເດັກໃນຊັ້ນອະນຸບານ, ເພື່ອໃຫ້ເດັກໄດ້ມີການເຝິກແອບກ້າມຊີ້ນມືຂອງເດັກໃຫ້ໄດ້ສໍາພັດກັບດິນອ່ອນ, ແຂງ, ແຫຼວ ແລະ ເພື່ອເຝິກໃຫ້ກ້າມຊີ້ນມືຂອງເດັກໃຫ້ແຂງແຮງ ເດັກໄດ້ຫຼິ້ນຕາມໃຈຕົນເອງ ແລະ ມີຄວາມພູມໃຈຕໍ່ຜົນງານຂອງຕົນເອງ, ມີຫົວຄິດປະດິດສ້າງ ແລະ ຍັງໄດ້ເຝິກແອບລະບົບສາຍຕາຂອງເດັກ.

## 2. ຈຸດປະສົງຂອງການປັ້ນ

ຈຸດປະສົງຫຼັກຂອງການສອນປັ້ນໃຫ້ເດັກອະນຸບານເພື່ອ

- ໃຫ້ເດັກໄດ້ເຝິກແອບໃຊ້ອຸປະກອນການປັ້ນເຊັ່ນ: ດິນນໍ້າມັນປັ້ນໃຫ້ເປັນຮູບເລຂາຄະນິດ,ຮູບສັດ ຮູບຄົນ ແລະ ໝາກໄມ້ຕ່າງໆ.
- ເຝິກປະສາດສໍາຜັດລະຫວ່າງກ້າມຊີ້ນມືກັບສາຍຕາ ແລະ ຍັງເປັນການຜ່ອນຄາຍອາລົມໃຫ້ເດັກເກີດມີຈິນຕະນາການ ແລະ ການສະແດງອອກຂອງເດັກ.
- ພັດທະນາແນວຄິດສ້າງສັນຂອງເດັກ ເຮັດໃຫ້ເດັກເກີດມີຈິດໃຈສະຫງວນມັກຄວາມງາມທາງດ້ານສີມື ໃນການປັ້ນ.
- ເສີມສ້າງພັດທະນາການ 5 ດ້ານຂອງເດັກຄື ດ້ານສະຕິປັນຍາ, ພາສາ, ອາລົມ, ສັງຄົມຮ່າງກາຍ ໂດຍສະເພາກ້າມຊີ້ນມືໃຫ້ມີການຂະຫຍາຍຕົວ.

## 3. ຄຸນປະໂຫຍດຂອງການປັ້ນ

ການປັ້ນແມ່ນການເຝິກແອບກ້າມຊີ້ນມືຂອງເດັກໃຫ້ໄດ້ສໍາຜັດກັບດິນແຂງ, ດິນອ່ອນ, ດິນແຫຼວເພື່ອເຝິກໃຫ້ກ້າມຊີ້ນມືຂອງເດັກໃຫ້ແຂງແຮງ, ເດັກໄດ້ຫຼິ້ນຕາມໃຈຕົນເອງ ແລະ ມີຄວາມພູມໃຈຕໍ່ຜົນງານຂອງຕົນ, ມີຫົວຄິດປະດິດສ້າງ ແລະ ຍັງໄດ້ເຝິກແອບລະບົບສາຍຕາຂອງເດັກ.

## 4. ອຸປະກອນຂອງການປັ້ນ

ດິນໜຽວ, ດິນດາກ, ດິນນໍ້າມັນ, ໄມ້ຮອງ, ຫຼື ກະດາດແຂງ, ຊາມໃສ່ນໍ້າ, ໄມ້ຄ້ວດເວລາປັ້ນ ແພເຊັດມື.



1. ດິນໜຽວ



2. ດິນດາກ



3. ດິນນ້ຳມັນ



4. ໄມ້ຮອງ



5. ກະດາດແຂງ



6. ໄມ້ຄ້ອດເອລາປັ້ນ



7. ຊາມໃສ່ນໍ້າ



8. ແພເຊັດມື

## 5. ການປັ້ນຮູບຕ່າງໆ

ແມ່ນອີງໃສ່ປະເພດຂອງຮູບທີ່ຈະເອົາມາປັ້ນ ເຊັ່ນວ່າ: ການປັ້ນຕາມແບບ, ປັ້ນຕາມໜ່ວຍການສອນ, ປັ້ນຕາມຈິນຕະນາການ ຫຼື ປັ້ນຕາມໃຈ.

### 1. ການປັ້ນຕາມແບບ

ການປັ້ນຕາມແບບໝາຍເຖິງການປັ້ນໂດຍມີແບບມາໃຫ້ເບິ່ງແລ້ວປັ້ນໃຫ້ຄືຮູບແບບນັ້ນ.

**ຕົວຢ່າງ 1** ແບບປັ້ນຮູບຫອຍ ດ້ວຍດິນນໍ້າມັນ



ແບບຢ່າງປັ້ນຮູບຫອຍ



ຮູບທີ 1



ຮູບທີ 2



ຮູບທີ 3



ຮູບທີ 4

## 2. ການປັ້ນຕາມໜ່ວຍການສອນ

ການປັ້ນຕາມໜ່ວຍການສອນ ນັກຮຽນຈະໄດ້ປັ້ນຕາມ 8 ໜ່ວຍການສອນທີ່ມີຢູ່ໃນຊັ້ນຮຽນອະນຸບານ, ເມື່ອເວລາສອນເດັກຕ້ອງໃຫ້ເດັກປັ້ນຕາມ.

ຕົວຢ່າງ 1 ປັ້ນຕາມໜ່ວຍຄົມມະນາຄົມ (ທາງບົກ, ທາງນໍ້າ, ທາງອາກາດ)




ຮູບທີ 1 ປັ້ນລົດ






ຮູບທີ 2 ປັ້ນເຮືອ ຮູບທີ 3 ປັ້ນຍົນ

**ກິດຈະກຳ** ການປັ້ນຕາມໜ່ວຍການສອນ

**ອຸປະກອນ** ດິນນ້ຳມັນ, ດິນດາກ, ດິນໜຽວ, ໄມ້ຄ້ອດລາຍ, ກະດາດແຂງ, ຊາມ, ນ້ຳ ແລະ ແພເຊັດ

**ວິທີດຳເນີນກິດຈະກຳ**

**ກິດຈະກຳທີ 1** ການປະຕິບັດຕົວຈິງກ່ຽວກັບການປັ້ນຮູບຕາມໜ່ວຍການສອນ.

ຄູແບ່ງນັກຮຽນອອກເປັນກຸ່ມແລ້ວປັ້ນຕາມຄູທີ່ກຳນົດໃຫ້

- ປັ້ນຕາມໜ່ວຍການສອນ.
  - ຄູອະທິບາຍ ແລະ ສາທິດການປັ້ນໃຫ້ນັກຮຽນເບິ່ງກ່ອນ
  - ຄູໃຫ້ນັກຮຽນແຕ່ລະກຸ່ມລົງມືປັ້ນ.
  - ຄູຕິດຕາມພ້ອມທັງແນະນຳການປັ້ນຂອງນັກຮຽນແຕ່ລະກຸ່ມ.
  - ຄູໃຫ້ນັກຮຽນຕາງໜ້າແຕ່ລະກຸ່ມຂຶ້ນລາຍງານຜົນຂອງການປັ້ນ.
  - ຄູແນະນຳຄືນຈຸດທີ່ນັກຮຽນເຮັດບໍ່ທັນໄດ້ດີ.

**ກິດຈະກຳທີ 2** ລົງສັງເກດການສອນຢູ່ໂຮງຮຽນລ້ຽງເດັກ-ອະນຸບານ.

- ສັງເກດການສອນກິດຈະກຳສ້າງສັນ.
- ຫຼັງຈາກສັງເກດຕົວຈິງແລ້ວກັບມາສົນທະນາກັນຢູ່ໃນຫ້ອງຮຽນ.
- ໃຫ້ນັກຮຽນແຕ່ລະກຸ່ມຂຽນບົດລາຍງານຂອງກຸ່ມກ່ຽວກັບການສັງເກດການສອນ.
- ໃຫ້ຕາງໜ້າກຸ່ມອ່ານບົດລາຍງານແລ້ວກຸ່ມອື່ນປະກອບໃຫ້ໝູ່ດ້ວຍກັນ.
- ຄູສະຫຼຸບຄືນກ່ຽວກັບສິ່ງທີ່ນັກຮຽນເວົ້າບໍ່ຄົບຖ້ວນ ແລະ ແນະນຳວິທີນຳໃຊ້ຢູ່ໃນໂຮງຮຽນອະນຸບານ.

**3. ການປັ້ນຕາມໃຈ**

- ການປັ້ນຕາມໃຈນີ້ຄູບໍ່ໄດ້ກຳນົດຮູບໃຫ້ເດັກປັ້ນ ແລະ ບໍ່ໄດ້ປັ້ນເປັນແບບຢ່າງໃຫ້ເດັກເບິ່ງ. ປ່ອຍໃຫ້ເດັກປັ້ນດ້ວຍຕົນເອງເລີຍທີ່ເຂົ້າຕ້ອງການປັ້ນໃຫ້ເປັນຮູບເປັນຮ່າງ.
- ໃຫ້ເດັກປັ້ນຕາມຄວາມຄິດຂອງເຂົາເຈົ້າເອງຄິດຢາກຈະປັ້ນອັນໃດກໍ່ປັ້ນໄດ້ ແລະ ກໍ່ບໍ່ໝາຍຄວາມວ່າຕ້ອງໃຫ້ຄືຂອງຈິງ100% .
- ເວລາເດັກກຳລັງປັ້ນ ຄູຕ້ອງຕິດຕາມ ແລະ ຖາມເດັກວ່າ ≪ຫຼານປັ້ນຮູບຫຍັງ≫ ເພື່ອພັດທະນາທາງດ້ານພາສາຂອງເດັກ ແລະ ເຮັດໃຫ້ເດັກກ້າສະແດງຄວາມສາມາດ.

- ຫຼັງຈາກເດັກປັ້ນແລ້ວຄູຕ້ອງເກັບຜົນງານມາກວດເບິ່ງ ແລະ ແນະນຳເດັກຕື່ມ.

**ຕົວຢ່າງ ຮູບປັ້ນ**



ຮູບປັ້ນຕາມໃຈ

**ກິດຈະກຳ** ສົນທະນາກ່ຽວກັບການປັ້ນຕາມໃຈ

**ອຸປະກອນ** ດິນນ້ຳມັນ, ດິນດາກ, ດິນໜຽວ, ໄມ້ຄ້ອດລາຍ, ກະດາດແຂງ, ຊາມ, ນ້ຳ ແລະ ແພເຊັດ

**ວິທີດຳເນີນກິດຈະກຳ**

- ຄູແນະນຳກ່ຽວກັບການປັ້ນຕາມໃຈ ໂດຍຄູບໍ່ໄດ້ກຳນົດຫົວຂໍ້
- ຄູໃຫ້ນັກຮຽນປັ້ນຕາມຄວາມຄິດຂອງໃຜລາວວ່າຈະປັ້ນຫຍັງກໍ່ປັ້ນໄດ້ເລີຍ.
- ຈາກນັ້ນຄູກໍ່ເກັບຜົນງານຂອງນັກຮຽນແຕ່ລະຄົນມາຈັດວາງ ເພື່ອປະເມີນ ແລະ ສະຫຼຸບ.

**6. ການຮ້ອຍ**

❖ ***ປະເພດການຮ້ອຍ***

**1. ການຮ້ອຍຝາເບຍ ຫຼື ຝາກວດນ້ຳຕ່າງໆ**

**ອຸປະກອນ :** ເຂັມ, ດ້າຍ ຫຼື ເຊືອກຮ້ອຍ, ຝາເບຍ ຫຼື ວັດຖຸທີ່ກຽມມາເພື່ອຮ້ອຍ.

**ວິທີຮ້ອຍ**

- ເອົາຝາເບຍ ຫຼື ຝາກວດນ້ຳຕ່າງໆ ມາເຈາະໃຫ້ເປັນຮູ ,ໃຊ້ເຊືອກສອດໃສ່ ຕາມຮູບແບບຄວາມຕ້ອງການ ເຊັ່ນ: ຮ້ອຍເປັນຂ້ອງ, ຮ້ອຍເປັນພວງ, ຮ້ອຍແຂນໄວ້ເປັນເຄື່ອງປະດັບປະດາ.
- ສຳລັບເດັກແມ່ນໃຫ້ເຂົ້າຮ້ອຍຕາມຄວາມຄິດສ້າງສັນ ຕາມຈິນຕະນາການຕາມຄວາມມັກຂອງເຂົາເອງ.






ຮູບທີ 1ຮ້ອຍຝາເບຍ　　　　ຮູບທີ 2 ຮ້ອຍຝາກວດນໍ້າຕ່າງໆ

**1. ການຮ້ອຍເປືອກຫອຍ**



ຮູບທີ 3 ການຮ້ອຍເປືອກຫອຍ

**2. ການຮ້ອຍວັດສະດຸທີ່ມີໃນທຳມະຊາດ**

ອຸປະກອນ　ດອກໄມ້ຊະນິດຕ່າງໆ ເຊັ່ນ: ດອກຈຳປາ, ດອກດາວເຮືອງ, ດອກພຸດ ແລະ ໃບໄມ້ທີ່ຫາໄດ້ງ່າຍໃນທຳມະຊາດເຊັ່ນ: ໃບໝາກສີດາ, ໃບມ່ວງ, ໃບໝາກກະທັນ ແລະ ໃບໄມ້ອື່ນໆ.

- ເຂັມຫຍິບ, ດ້າຍສຳລັບຮ້ອຍ ຫຼື ໄມ້ສຳລັບຮ້ອຍ.

- ການກະກຽມ ຄວນຄັດເລືອກເອົາໃບໄມ້ ແລະ ດອກໄມ້ທີ່ງາມ.

**+ ວິທີຮ້ອຍດອກໄມ້**

ແບ່ດ້າຍໃສ່ກົ້ນເຂັມແລ້ວຂອດດ້າຍໃຫ້ຮຽບຮ້ອຍ ຫຼັງຈາກນັ້ນ ຈິ່ງແທກປາຍເຂັມເຂົ້າໃນດອກໄມ້ ( ແຕ່ກົ້ນຂຶ້ນໄປ ) ແລະ ດອກຕໍ່ໄມ້ກໍ່ເຮັດຄືກັນຮ້ອຍເປັນພວງມະໄລຄ້ອງຄໍ ຫຼື ຫ້ອຍໃສ່ໜ້າແວ່ນລົດໃຫ່ຍ, ຖ້າແມ່ນດອກຊ້ອນຄວນຮ້ອຍເປັນພວງໃຫ່ຍເພາະດອກນັ້ນນ້ອຍ.

**+ ວິທີຮ້ອຍພວງມະໄລດ້ວຍດອກພຸດ :** ແບ່ດ້າຍໃສ່ກົ້ນເຂັມ, ຂອດສົ້ນດ້າຍແທກເຂັມເຂົ້າໄປໃສ່ກ້ານດອກພຸດເວລາຮ້ອຍໃຫ້ຈັດລຽງດອກໃຫ້ສະຫຼຽງກັນ, ຮ້ອຍໄປຈົນພໍກັບຄວາມຕ້ອງການທີ່ຢາກໄດ້ໃຫ່ຍນ້ອຍຕາມຄວາມມັກ ແລະ ຄວາມເໝາະສົມ.

**ວິທີຮ້ອຍດອກໄມ້**

ຄູຄວນໃຫ້ເດັກໃຊ້ໄມ້ ຫຼື ເຂັມປາຍປູ້ໃຫ້ເດັກຮ້ອຍ ແລະ ຮ້ອຍຕາມຄວາມຄິດສ້າງສັນ ຫຼື ຄວາມເໝາະສົມ.

**ຕົວຢ່າງ 1**



ຮູບການຮ້ອຍພວງມະໄລ

**+ ວິທີຮ້ອຍຫົ່ ແລະ ໝາກປັດ** ໃຊ້ເຈ້ຍ, ໝາກເດືອຍ,ໝາກຕຸ້ມ ເຮົາກະກຽມວັດຖຸທີ່ຈະນຳມາຮ້ອຍໃຊ້ເຂັມປາຍປູ້ ຫຼື ໄມ້ຜູກດ້າຍໃສ່ເຂັມ, ຂອດສົ້ນດ້າຍສອດເຂົ້າຕາມຮູຂອງຫົ່ ຫຼື ໝາກປັດແລ້ວ ຮ້ອຍໄປຈົນສຳເລັດຕາມຄວາມຕ້ອງການ.

**ຕົວຢ່າງ 2  ການຮ້ອຍທໍ່**



ຮູບການຮ້ອຍທໍ່

**ຕົວຢ່າງ 3 ການຮ້ອຍໝາກປັດ**



ຮູບການຮ້ອຍໝາກປັດ

**ກິດຈະກຳ**

- ໃຫ້ນັກຮຽນຄູຮ້ອຍແບບຕ່າງໆເຊັ່ນ ພວງມະໄລດ້ວຍດອກໄມ້ຕົວຈິງ, ຮ້ອຍດ້ວຍທໍ່, ໝາກປັດ ຫຼື ຮ້ອຍຈາກສິ່ງເສດເຫຼືອຕ່າງໆ

- ເຮັດເປັນບຸກຄົນຜູ້ລະ1-2 ຢ່າງ
- ຕາງໜ້າລາຍງານສິ່ງທີ່ຕົນເອງຮ້ອຍໄດ້.

## ໃຈຄວາມ

ໃນບົດນີ້ໄດ້ກ່າວເຖິງຄວາມໝາຍຂອງການປັ້ນ, ຈຸດປະສົງຂອງການປັ້ນ, ຄຸນປະໂຫຍດຂອງການປັ້ນ ອຸປະກອນຂອງການປັ້ນ, ການປັ້ນຮູບຕ່າງໆ ແລະ ການຮ້ອຍ. ແຕ່ກິດຈະກຳດັ່ງກ່າວນັ້ນບໍ່ໄດ້ເນັ້ນຄວາມງາມ ແຕ່ເນັ້ນຄວາມຄິດສ້າງສັນ ແລະ ຈິນຕະນາການຂອງເດັກເປັນຕົ້ນຕໍ. ເພື່ອນຳໃຊ້ເຂົ້າໃນກິດຈະກຳການຮຽນ-ການສອນ ແລະ ເຂົ້າໃນຊີວິດປະຈຳວັນອີກດ້ວຍ.

## ວຽກມອບໝາຍ

- ໃຫ້ນັກຮຽນປັ້ນຮູບຕ່າງໆ ຜູ້ລະ 1 ຜົນງານ?
- ໃຫ້ນັກຮຽນຮ້ອຍເປັນຮູບຕ່າງໆ ຜູ້ລະ 1 ຜົນງານ?

## ຄຳຖາມ

1. ຈົ່ງບອກຄວາມໝາຍຂອງການປັ້ນ?
2. ການປັ້ນມີຈຸດປະສົງເພື່ອຫຍັງ ?
3. ການປັ້ນມີຄຸນປະໂຫຍດແນວໃດ?
4. ອຸປະກອນການປັ້ນມີຫຍັງແດ່ ?
5. ບອກປະເພດຂອງການຮ້ອຍ ?

# ບົດທີ 7

# ການພັບແບບຕ່າງໆ

ເວລາ 4 ຊົ່ວໂມງ

ຈຸດປະສົງ ໃຫ້ນັກຮຽນສາມາດ:

- ບອກຄວາມໝາຍຄວາມສຳຄັນຂອງການພັບໄດ້
- ອະທິບາຍວິທີພັບເຈ້ຍແບບຕ່າງໆໄດ້
- ອະທິບາຍວິທີຕັດຕາມແບບຕ່າງໆໄດ້
- ອະທິບາຍວິທີຕິດຕາມແບບຕ່າງໆໄດ້

## 1. ຄວາມໝາຍຄວາມສຳຄັນຂອງການພັບ

**+ ຄວາມໝາຍຂອງການພັບເຈ້ຍ**

ການພັບກະດາດຄືການນຳກະດາດເຈ້ຍມາພັບເປັນຮູບຮ່າງຕ່າງໆ ຕາມຄວາມຕ້ອງຂອງຜູ້ພັບທີ່ຈະຕ້ອງອາໄສສາມາທິໃນການໃຊ້ປະສາດສຳຜັດຫຼາຍໆ ດ້ານ ເຊິ່ງສິ່ງຜົນໃຫ້ສະຕິປັນຍາຂອງເດັກພັດທະນາໄດ້ເປັນຢ່າງດີ ເພາະໃນກິດຈະກຳການພັບກະດາດເຈ້ຍຕ້ອງອາໄສຂະບວນການການຈົດຈຳກ່ຽວກັບວິທີການລຽງລຳດັບຂັ້ນຕອນຕໍ່ເນື່ອງໃນການພັບ.

ນອກຈາກນີ້ຍັງເປັນກິດຈະກຳທີ່ສົ່ງເສີມຄວາມສາມາດໃນການຄວບຄຸມກ້າມຊີ້ນນິ້ວມື, ຂໍ່ມື, ຫົວໃຈສຳລັບຄືການການໃຊ້ສາຍຕາໃຫ້ສຳພັດກັບມືທີ່ສົ່ງຜົນໄປຍັງພັດທະນາການດ້ານການຂຽນຂອງເດັກໄດ້ຕໍ່ໄປ ເດັກຍັງໄດ້ຮຽນຮູ້ເລື່ອງຮູບຊົງເລຂາຄະນິດ ແລະ ການຄິດເລກສ່ວນຢ່າງງ່າຍດາຍລວມທັງການຄິດແກ້ບັນຫາໄປໃນຕົວ ຄວາມສາມາດຂອງເດັກໃນໄວອະນຸບານກັບການພັດທະນາການຈະມີຄວາມແຕກຕ່າງກັນຕາມເກນອາຍຸຂອງເດັກ.

**+ ຄວາມສຳຄັນຂອງການສອນພັບເຈ້ຍແບບຕ່າງໆ**

ການພັບກະດາດເຈ້ຍມີຄວາມສຳຄັນສຳລັບເດັກ ເພື່ອເປັນການເຝິກແອບກ້າມຊີ້ນມືອັນອ່ອນນ້ອຍທີ່ບໍ່ທັນໄດ້ສຳພັດຈັກເທື່ອເພື່ອເຮັດໃຫ້ມືຂອງເດັກຄ່ອງແຄ້ວ ແລະ ມີຄວາມຊຳນິຊຳນານຂຶ້ນເທື່ອລະກ້າວ ເພາະວ່າເດັກໄວນີ້ມີຄວາມສົນໃຈຫຼາຍຕໍ່ການຈັບບາຍເຈ້ຍ. ເມື່ອເດັກໄດ້ຈັບເຈ້ຍບໍ່ວ່າເຈ້ຍນ້ອຍ, ເຈ້ຍໃຫ່ຍ ຫຼື ເຈ້ຍມຸ່ນເດັກຈະພັບຕາມຈິນຕະນາການຂອງເຂົາ. ນອກຈາກນີ້ການພັບແມ່ນການດຶງດູດຄວາມສົນໃຈຂອງເດັກເຂົ້າສູ່ການປະຕິບັດກິດຈະກຳໃນການຮຽນ-ການສອນຢ່າງມີຄວາມເບີກບານມ່ວນຊື່ນເຮັດໃຫ້ເດັກສາມາດໃຊ້ເຈ້ຍຊະນິດຕ່າງໆໃຫ້ເປັນປະໂຫຍດ, ການພັບຍັງຊ່ວຍພັດທະນາການທັງ 5 ດ້ານຂອງເດັກເຊັ່ນ: ດ້ານຮ່າງກາຍ, ອາລົມ, ສັງຄົມ, ສະຕິປັນຍາ ແລະ ພາສາ.

ສະນັ້ນ ຄູຄວນສົ່ງເສີມໃຫ້ເດັກມີຫົວຄິດປະດິດສ້າງຢ່າງກ້ວາງຂວາງຂຶ້ນເທື່ອລະກ້າວຈາກພື້ນຖານທີ່ງ່າຍຫາ ຍາກ.

## 2. ວິທີພັບເຈ້ຍແບບຕ່າງໆ

**ແບບພັບພື້ນຖານທີ່ 1**

ແບບພັບພື້ນຖານທີ່ 1 ລວມທັງໝົດມີ 11 ແບບພັບຄື:

1. ພັບ ຈອກນໍ້າເມັກ
2. ພັບ ໂສ້ງຂາສັ້ນ
3. ພັບ ກາແພດ
4. ພັບ ເສື້ອແຂນສັ້ນ
5. ພັບ ກະເປົາ 2 ຖົງ
6. ພັບ ລູກສອນໄຟ
7. ພັບ ໝາກກະໂພກ
8. ພັບ ເຮືອບິນ
9. ພັບ ເຮືອກາບ
10. ພັບ ຖົງສະກົດ
11. ພັບ ປືນ

❖ **ວິທີພັບແບບພື້ນຖານທີ 1**

**1. ວິທີພັບຈອກນໍ້າເມັກ, ໂສ້ງຂາສັ້ນ, ກາແພດ, ເສື້ອແຂນສັ້ນ.**

ຈາກເບື້ອງຫຼັງຂອງຮູບສີ່ຫຼ່ຽມມົນທົນນ້ອຍ (ຮູບທີ1) ສອດມືເຂົ້າໃນຖົງໜຶ່ງດຶງຂຶ້ນໄດ້ (ຮູບທີ 2) ແລ້ວເຮົາຈະໄດ້ຈອກນໍ້າເມັກ. ຖ້າຢາກພັບເປັນໂສ້ງຂາສັ້ນ ເຮົາດຶງຖົງທີ່ຢູ່ຄຽງຂ້າງນັ້ນຕື່ມໄດ້ (ຮູບທີ3) ນັ້ນແມ່ນຮູບໂສ້ງຂາສັ້ນ. ຖ້າຍາກພັບ ກາແພດ ເຮົາດຶງສອງຖົງທີ່ຍັງເຫຼືອອອກໄດ້(ຮູບທີ4) ນັ້ນແມ່ນກາແພດ. ຖ້າພັບເສື້ອແຂນສັ້ນເຮົາຈະຕ້ອງພັບເຄິ່ງຮູບກາແພດ (ຮູບທີ4) ແລ້ວເຮົາໄດ້ເສື້ອແຂນສັ້ນ (ຮູບທີ5). ຮູບພາບ




**2. ວິທີພັບກະເປົາ 2 ຖົງ**

ຖ້າຢາກພັບກະເປົາ 2 ຖົງ ກ່ອນອື່ນໝົດເຮົາຕ້ອງນໍາໃຊ້ເຈ້ຍສີ່ຫຼ່ຽມຍາວພັບເຄິ່ງທາງຍາວ, ພັບຂ້າງກ້ວາງເຂົ້າຫາເສັ້ນເຄິ່ງກາງທັງສອງຂ້າງຕາມຮ້ອຍຈໍ້າຂອງຮູບ (ຮູບທີ1) ຈາກນັ້ນ ເຮົາຈະໄດ້(ຮູບທີ2) ແລ້ວພັບ 2 ຂ້າງຕາມຮອຍຈໍ້າ

(ຮູບທີ2) ພັບໄປເບື້ອງຫຼັງໄດ້ (ຮູບທີ3) ຈາກນັ້ນພັບເຄິ່ງກາງທາງຍາວໄປເບື້ອງຫຼັງໄດ້ (ຮູບທີ4) ຫຼັງຈາກນັ້ນເຮົາກໍ່ຕັດເຈ້ຍເຜັນເສັ້ນຍາວ ຫຼື ເອົາເຊືອກຟາງກໍ່ໄດ້ເພື່ອມາຕິດໃສ່ແຈຂ້າງຂອງຮູບ (ຮູບທີ4) ເຮົາກໍ່ໄດ້ກະເປົາ 2 ຖົງ.

ຖ້າກະເປົາທີ່ເຮົາພັບແລ້ວໃຊ້ເຈ້ຍຂາວແມ່ນໃຫ້ທາສີ ຫຼື ແຕ້ມຮູບໃສ່ດ້ວຍສໍສີ




**3. ການພັບລູກສອນໄຟ**

ການພັບລູກສອນໄຟແມ່ນເຮົານຳໃຊ້ເຈ້ຍສີ່ຫຼ່ຽມຍາວແລ້ວພັບເຄິ່ງຈາກນັ້ນເປີດອອກພັບຂອງແຈຕາມຮອຍຈໍ້າເຂົ້າເຄິ່ງກາງໄດ້ (ຮູບທີ2) ປີ້ນພັບສອງຂ້າງ (ຮູບທີ2) ເຂົ້າເສັ້ນເຄິ່ງກາງຕາມຮອຍຈ້ຳພັບສອງເທື່ອໄດ້ (ຮູບທີ3, ຮູບທີ 4) ພັບປີ້ນໄປຕາມເບື້ອງຫຼັງຕາມຮອຍຈໍ້າ (ຮູບທີ4) ໄດ້ (ຮູບທີ5) ຈາກນັ້ນເຮົາແປງ (ຮູບທີ5) ໃຫ້ສວຍງາມແລ້ວເອົານອນຂວາງໄວ້ຈະໄດ້ລູກສອນໄຟ (ຮູບທີ6) ດັ່ງຢ່າງຮູບ




**4. ວິທີພັບໝາກກະໂພກ**

ການພັບໝາກກະໂພກຕ້ອງໃຊ້ເຈ້ຍສີ່ຫຼ່ຽມຍາວແລ້ວພັບເຄິ່ງທາງຍາວຈາກນັ້ນກໍ່ເປີດອອກພັບຈອຍແຫຼມເຂົ້າຫາເສັ້ນເຄິ່ງກາງທັງສອງສົ້ນ ເຮົາຈະໄດ້ (ຮູບທີ1) ເອົາສົ້ນແຫຼມທັງສອງເບື້ອງແປະໃສ່ກັນໄດ້ (ຮູບທີ2) ພັບຈອຍແຫຼມທັງສອງເບື້ອງເຂົ້າຫາເສັ້ນໃຈກາງແລ້ວເປີດອອກພັບສົ້ນທົບຍັດ ເຂົ້າໃນຕາມຮອຍພັບ, ພັບທັງສອງເບື້ອງໄດ້ (ຮູບທີ7) ຈາກນັ້ນພັບເຄິ່ງ (ຮູບທີ7) ເຮົາຈະໄດ້ (ຮູບທີ8) ນັ້ນແມ່ນຮູບໝາກກະໂພກ.




### 5. ວິທີພັບເຮືອກາບ

ຂັ້ນຕອນທຳອິດແມ່ນນຳໃຊ້ເຈ້ຍສີ່ຫຼ່ຽມຍາວຕາມລວງຂວາງແລ້ວເປີດອອກ, ຫຼັງຈາກນັ້ນພັບສອງຂ້າງເຂົ້າຫາເສັ້ນໃຈກາງເຮົາຈະໄດ້ (ຮູບທີ2) ພັບຈອຍແຫຼມ ທັງ 4 ຂ້າງເບື້ອງທາງໄດ້ (ຮູບທີ3) ພັບອີກເທື່ອໜຶ່ງໄດ້ (ຮູບທີ4) ແລ້ວພັບສອງຂ້າງສອງເບື້ອງເຂົ້າຫາເສັ້ນໃຈກາງໄດ້ (ຮູບທີ5) ພັບ (ຮູບທີ5) ກັບຄືນເບື້ອງຫຼັງໄດ້ (ຮູບທີ6) ໃຊ້ມືສອດເຂົ້າຕາມລູກສອນ (ຮູບທີ6) ດຶງເຈ້ຍ 2 ຂ້າງອອກ 2 ເບື້ອງໄດ້ (ຮູບທີ7) ປີ້ນຄືນໄດ້ (ຮູບ8) ຈາກນັ້ນໄດ້ເຮືອກາບ.

**ຕົວຢ່າງຮູບ**



**6. ວິທີພັບຖົງສະກົດ**

ການພັບຖົງສະກົດ ແມ່ນໃຊ້ເຈ້ຍສີ່ຫຼ່ຽມມົນທົນ 2 ແຜ່ນ, ຂະໜາດ 6X4 ຊ.ມ ນຳມາພັບເຄິ່ງທາງກວ້າງເພື່ອໃຫ້ມັນເປັນຄອງແລ້ວເປີດອອກພັບສອງຂ້າງເຂົ້າຫາເສັ້ນເຄິ່ງກາງ (ຮູບທີ1) ໄດ້ (ຮູບທີ2) ພັບເຄິ່ງ (ຮູບທີ2) ໄດ້ (ຮູບທີ3) ຈາກນັ້ນພັບເຄິ່ງ (ຮູບທີ3) ເພື່ອເອົາຄອງໃຊ້ເຈ້ຍ 2 ແຜ່ນ ທີ່ພັບຄື (ຮູບທີ3) ນຳມາຕັ້ງສາກຄື (ຮູບທີ4) ພັບເຄິ່ງແຜ່ນເຈ້ຍຂວາງໄດ້ (ຮູບທີ5) ພັບເຄິ່ງແຜ່ນເຈ້ຍຕັ້ງລົງໄດ້ (ຮູບທີ6) ເອົາແຜ່ນເຈ້ຍຂວາງພັບອ້ອມເຈ້ຍຕັ້ງແລ້ວສຸບເຂົ້າຫຼືບຈະໄດ້ (ຮູບທີ7) ໃຊ້ແຜ່ນເຈເຍຕັ້ງສຸບເຂົ້າຫຼືບຕາມລູກສອນຈະໄດ້ (ຮູບທີ8) ສ່ວນເບື້ອງຫຼັງກໍ່ພັບແບບດຽວກັນ, ຈາກນັ້ນເຮົາຈະໄດ້ (ຮູບທີ9) ນັ້ນແມ່ນຖົງສະກົດ ເອົາເຊືອກມາຕິດໃສ່ ຫຼື ສອດເຂົ້າໃນແລ້ວກໍ່ມັດເພື່ອເຮັດສາຍຂອງຖົງສະກົດ.

**ຕົວຢ່າງຮູບ**




ຮູບທີ 8 ຮູບຂັ້ນຕອນການພັບ ຖົງສະກົດ

**7. ວິທີພັບປືນສັ້ນ**

ໃຊ້ເຈ້ຍສີ່ຫຼ່ຽມຍາວຂະໜາດ 6 x 4 ຊ.ມ ນຳມາພັບດັ່ງລຸ່ມນີ້:ພັບເປັນຖົງສະກົດ 3 ອັນເທົ່າກັນ ພັບເປັນຖົງສະກົດນ້ອຍອີກ ອັນ 1 ໃຊ້ເຈ້ຍ 1/2ໃບຕາມຂະໜາດເທິງ(ຮູບທີ2)ໃຊ້ເຈ້ຍ 2 ໃບມາພັບເປັນ 2 ແຜ່ນ(ເບິ່ງຮູບທີ 3 ຂອງວິທີພັບຖົງສະກົດ).ໃຊ້ເຈ້ຍ 1 ໃບ ມາພັບເປັນທໍ່ພັບໃຫ້ສົ້ນໜຶ່ງໃຫ່ຍ ສົ້ນໜຶ່ງເຮັດເປັນທໍ່ນ້ອຍຈາກນັ້ນໃຊ້ມີດຕັດຕັດສົ້ນໃຫ້ພຽງ(ຮູບທີ3) ເພື່ອເຮັດເປັນເລົາປືນ.

**ວິທີປະກອບປືນ** ສຸບ 2 ຖົງສະກົກໃສ່ເລົາປືນແລ້ວຫຍັບລົງໄປທາງສົ້ນໃຫ່ຍລຽນກັນ, ສ່ວນຖົງທີ 3 (ຖົງໃຫ່ຍ) ໃຫ້ສຸບເຂົ້າຫຼືບເຈ້ຍຂອງຖົງທີ່ຢູ່ສົ້ນໃຫ່ຍ, ສ່ວນຖົງນ້ອຍແມ່ນສຸບໃສ່ເລົາປືນທາງສົ້ນນ້ອຍແລ້ວປີ້ນຖົງຂຶ້ນເພື່ອເປັນບ່ອນແນ(ຮູບທີ4)ໃຊ້ເຈ້ຍສອງແຜ່ນ(ຮູບທີ2) ແຜ່ນໜຶ່ງພັບຕາມລວງຂວາງ, ແຜ່ນ1 ພັບຕາມລວງຕັ້ງໃນການພັບນັ້ນ

ຕ້ອງໃຊ້ສົ້ນເຈ້ຍສຸບເຂົ້າຫຼືບຂອງຖົງພັນ ເພື່ອບໍ່ໃຫ້ແຕ່ລະຖົງຕົກເຮ່ຍ(ຮູບທີ5,6) ແລ້ວເຮົາຈະໄດ້(ຮູບທີ7) ນັ້ນແມ່ນຮູບ

**ຮູບພາບ**




❖ **ແບບພັບພື້ນຖານທີ 2**

ແບບພັບພື້ນຖານທີ 2 ລວມມີຢູ່ 7 ປະເພດຄື:

1. ການພັບ ສີບກາ
2. ການພັບ ຕັກແຕນ
3. ການພັບ ໂຕຈັກຈັ່ນ
4. ການພັບ ນົກກາງແກ
5. ການພັບ ກັບມີຫູ
6. ການພັບ ໂຕໝູ
7. ການພັບ ນົກຍາງ

**ວິທີພັບພື້ນຖານທີ 2**

ໃຊ້ເຈ້ຍສີ່ຫຼ່ຽມມົນທົນພັບເຄິ່ງຕາມຮອຍຈ້ຳ (ຮູບທີ 2) ພັບຈອຍແຫຼມທັງສອງເບື້ອງຕາມຮອຍຈ້ຳ (ຮູບທີ 2) ແຈໜຶ່ງພັບໄປທາງໜ້າແຈໜຶ່ງພັບໄປທາງເບື້ອງຫຼັງໄດ້ (ຮູບທີ 3) ສອດມືເຂົ້າໃນຖົງອອກສອງຂ້າງໃຫ້ແຈແປະກັນໄດ້ (ຮູບທີ 4) ພັບຈອຍແຫຼມທັງສີ່ຂຶ້ນສູ່ຈອມເທິງຕາມຮອຍຈ້ຳແລ້ວເປີດອອກເຮົາຈະໄດ້ຮອຍພັບ (ຮູບທີ 4) ຈາກນັ້ນ

ເປີດເຈ້ຍຊັ້ນລຸ່ມຂຶ້ນຕາມຮອຍພັບ, ພັບສອງຮິມເຈ້ຍເຂົ້າເຄິ່ງກາງ (ຮູບທີ 4,5) ປີ້ນຫຼັງພັບແບບດຽວກັນເຮົາຈະໄດ້ (ຮູບທີ 6).




**1. ວິທີພັບສິບກາ**

ເລີ່ມຈາກ(ຮູບທີ 1) ຈາກແບບພັບທີ 2 ພັບເຈ້ຍທາງເບື້ອງລຸ່ມຂຶ້ນສູ່ຈອມເທິງທັງສອງເບື້ອງເຮົາຈະໄດ້ (ຮູບທີ 2) ພັບຈອຍແຫຼມເຂົ້າຫາເສັ້ນໃຈກາງທັງສອງຂ້າງ ປີ້ນເຈ້ຍຢູ່ຈອມເທິງລົງໄດ້ (ຮູບທີ 2, ຮູບທີ 3) ປີ້ນດ້ານຫຼັງພັບແບບດຽວກັນໄດ້ (ຮູບທີ 4) ຈາກນັ້ນສອດມືເຂົ້າຕາມລູກສອນແລ້ວດຶງອອກທັງສອງຂ້າງເຮົາໄດ້ (ຮູບທີ 5) ນັ້ນແມ່ນຮູບສິບກາ. ຕົວຢ່າງຮູບ ຮູບພາບ



## 2. ວິທີພັບຕັກແຕນ

ເອົາເຈ້ຍສີ່ຫຼ່ຽມມົນມົນພັບແຈກົງກັນຂ້າມແປະກັນໄດ້ (ຮູບທີ 2) ຈາກນັ້ນພັບສັນທົບເຂົ້າໜ້ອຍໜຶ່ງຕາມຮອຍຈ້ຳປິ້ນດ້ານຫຼັງເຮົາໄດ້ (ຮູບທີ 3) ພັບຈອຍແຫຼມທັງສອງເບື້ອງເຂົ້າຫາເສັ້ນເຄິ່ງກາງຕາມຮອຍຈ້ຳໄດ້ (ຮູບທີ 4) ຈາກນັ້ນພັບເຄິ່ງປິ້ນໄປເບື້ອງຫຼັງໄດ້ (ຮູບທີ 5) ພັບສອງແຈແຫຼມຢູ່ເທິງໄປທາງໜ້າ ແລະ ເບື້ອງຫຼັງຕາມຮອຍຈ້ຳເຮົາຈະໄດ້ (ຮູບທີ 6) ແລະ (ຮູບທີ 7) ຫຼັງຈາກນັ້ນເຮົາແຕ້ມຕາໃສ່ເຮົາກໍ່ໄດ້ຮູບຕັກແຕນ.

**ຕົວຢ່າງ**

**ຮູບພາບ**




## 3. ວິທີພັບໂຕຈັກຈັ່ນ

ວິທີພັບ ແລະ ຈີກເຈ້ຍເປັນຮູບຈະຕຸລັດນັ້ນແມ່ນປະຕິບັດຕາມຂັ້ນຕອນທຳອິດຂອງການພັບໝາກປຸມເປົ້າ.ຫຼັງຈາກນັ້ນເອົາເຈ້ຍເປັນຮູບຈະຕຸລັດມາພັບເປັນຮູບສາມແຈຕາມເສັ້ນ (ກ)  ຈະໄດ້ເປັນ ຮູບທີ 2, ພັບຕາມເສັ້ນ (ຂ) ແລະ (ຄ) ໄປຕາມລວງລູກສອນ ຈະໄດ້ຮູບ (4). ຫຼັງຈາກນັ້ນພັບຕາມເສັ້ນ (ສ) ລົງຕາມລູກສອນ (ໃບທີ 1) ໄດ້ຮູບ (5) ແລະ ພັບໃບທີ 2 ລົງຕາມເສັ້ນແຕ່ພັບ ໜ້ອຍກ່ວາ ໃບທີ 1 ໄດ້ (ຮູບ 6). ສຸດທ້າຍພັບຕາມສອງຂ້າງໄປຕາມດ້ານຫຼັງເສັ້ນ (ດ ດ) ແລ້ວພວກເຮົາຈະໄດ້ໂຕຈັກຈັ່ນ (ຮູບ7) ຄູຄວນແນະນຳໃຫ້ນັກຮຽນແຕ້ມຕາໃສ່.




ການພັບຈັກຈັ່ນ

**4. ວິທີພັບນົກກາງແກ**

ຮູບທີ 1 ເລີ່ມຈາກ (ຮູບທີ 6) ຂອງພື້ນຖານທີ 2 ຫັກແຈແຫຼມອອກທັງສອງຂ້າງຢູ່ລຸ່ມຂຶ້ນເທິງເພື່ອເຮັດຕີນນົກ.ປີ້ນເຈ້ຍຊັ້ນເທິງລົງລຸ່ມເຮັດປີກນົກ (ຮູບທີ 3) ພັບເຄິ່ງໄປທາງເບື້ອງຫຼັງຕາມລວງຕັ້ງໄດ້ (ຮູບທີ 4) ຈາກນັ້ນຫັກສົ້ນແຫຼມລົງໜ້ອຍໜຶ່ງເຮັດຫົວ ແລະ ສົບນົກເຮົາໄດ້ (ຮູບທີ 5) ນັ້ນແມ່ນໂຕນົກ.

**ຮູບພາບ**




ຮູບທີ 5 ຂັ້ນຕອນການພັບນົກ

**5. ວິທີພັບກົບມິຫູ**

ຮູບທີ 1 ຈາກຮູບທີ 4 ຂອງແບບພັບພື້ນຖານທີ 2 ພັບເຈ້ຍບາງຂຶ້ນຕາມຮອຍຈໍ້າຮູບທີ 1 ໄດ້ (ຮູບທີ 2) ຈາກນັ້ນພັບຂຶ້ນອີກໜຶ່ງເທື່ອຕາມຮອຍຈໍ້າ(ຮູບທີ 2) ປີ້ນດ້ານຫຼັງພັບແບບດຽວກັນເຮົາໄດ້(ຮູບທີ 3) ແລະ (ຮູບທີ 4)

ພັບເຄິ່ງແປະໃສ່ກັນຕາມຮອຍຈ້ຳປີ້ນດ້ານຫຼັງພັບແບບດຽວກັນເຮົາໄດ້(ຮູບທີ 5) ພັບແຈແຫຼມທັງສອງຂ້າງເຂົ້າຫາເສັ້ນໃຈກາງເຮົາຈະໄດ້(ຮູບທີ 6) ປີ້ນດ້ານຫຼັງພັບແບບດຽວກັນພັບແຈບາງຢູ່ລຸ່ມຂຶ້ນຫາຈອມຕາມຮອຍຈ້ຳທັງສອງເບື້ອງໜ້າ ແລະ ເບື້ອງຫຼັງໄດ້(ຮູບທີ 7) ແລະ (ຮູບທີ 8) ນັ້ນແມ່ນກັບມີຫູ.

ຕົວຢ່າງຮູບ




## 6. ວິທີພັບໂຕໜູ

ຮູບທີ 1 ຈາກແບບພື້ນຖານທີ 2 ພັບຈອມແຫຼມທັງສອງຂ້າງຕາມຮອຍຈ້ຳ (ຮູບທີ 1) ໄດ້ (ຮູບທີ 2) ແລ້ວຫັກສອງແຈແຫຼມຈອມເທິງອອກທັງສອງເບື້ອງໄດ້ (ຮູບທີ 3) ຈາກນັ້ນພັບເຄິ່ງ (ຮູບທີ 3) ແປະກັນເຮົາໄດ້ (ຮູບທີ 4) ພັບຕາມຮອຍຈ້ຳ (ຮູບທີ 4) ເຮົາໄດ້ (ຮູບທີ 5) ປີ້ນຕາມຫຼັງຕາມຮອຍຈ້ຳ (ຮູບທີ 5) ແລ້ວໄດ້ (ຮູບທີ 6) ຈາກນັ້ນແຕ້ມຕາ, ຕັດໜວດໃສ່ເຮົາຈະໄດ້ (ຮູບທີ 7) ນັ້ນແມ່ນໂຕໜູ.

ຕົວຢ່າງຮູບ




## 7. ວິທີພັບນົກຍາງ

ຮູບທີ 1 ຈາກແບບພື້ນຖານທີ 2 (ຮູບທີ 6) ພັບຈອຍແຫຼມທັງສອງຂ້າງເຂົ້າສູ່ເສັ້ນໃຈກາງທັງດ້ານໜ້າ ແລະ ດ້ານຫຼັງໄດ້ (ຮູບທີ 2) ພັບສອງຂ້າງແປະກັນທາງດ້ານໜ້າ ແລະ ດ້ານຫຼັງໄດ້ (ຮູບທີ 3) ພັບແຈແຫຼມທັງສອງເບື້ອງໜ້າ ແລະ ເບື້ອງຫຼັງຕາມຮອຍຈໍ້າໄດ້ (ຮູບທີ 4) ຈາກນັ້ນສອດນິ້ວມືເຂົ້າໃນ (ຮູບທີ 4) ທັງສອງແຈແປະກັນໄດ້ (ຮູບທີ 5) ດຶງສອງປີກອອກສອງຂ້າງຫັກແຕແຫຼມເບື້ອງໜຶ່ງເຮັດສົບໄດ້ (ຮູບທີ 5) ແລະ (ຮູບທີ 6) ແມ່ນຮູບນົກຍາງ.

ຕົວຢ່າງຮູບ




## 8. ການພັບໝາກປຸ້ມເປົ້າ

ພັບເຈ້ຍເປັນຮູບຈະຕຸລັດ (ຮູບ 2) ເອົາແຈ (ຄ) ຂຶ້ນແປະໃສ່ແຈ (ກ) ເຮົາຈະໄດ້ (ຮູບ 3) ຍົກແຈ (ງ) ຂຶ້ນໃສ່ແຈ (ກ ຄ) (ຮູບ 4) ແລ້ວປີ້ນເບື້ອງຫຼັງຂຶ້ນມາແລ້ວເຮັດແບບວິທີຍົກແຈ (ງ) ໃສ່ (ຮູບ5) ສອດນິ້ວມືຂຶ້ນສອງສົ້ນແລ້ວຊຸກແຈ (ສ ຊ) ເຂົ້າແປະກັນເຮົາຈະໄດ້ຮູບສາມແຈ (ຮູບ 6-7) ພັບແຈ (ກ) ແລະ (ງ) ລົງໃສ່ (ສ) ຕາມລູກສອນປີ້ນເບື້ອງຫຼັງແລ້ວເຮັດຄືແບບວິທີພັບແຈ (ກ ງ)ນັ້ນ, ເຮົາຈະໄດ້ຮູບ (8). ຫຼັງຈາກນັ້ນພັບຂ້າງທັງສອງເຂົ້າໃສ່ທາງກາງ (ຮູບ 9), ປີ້ນເບື້ອງຫຼັງກໍ່ເຮັດຄືກັນ (ຮູບ 10) ຫຼັງຈາກນັ້ນເປົ່າລົມໃສ່ຮູເຮົາຈະໄດ້ ໝາກປູມເປົ້າ (ຮູບ 12).



ການພັບໝາກປູມເປົ້າ

❖ **ວິທີພັບແບບພື້ນຖານທີ 3**

ໃຊ້ເຈ້ຍສີ່ຫຼ່ຽມມົນທົບພັບແຈກົງກັນຂ້າມແປະກັນໄດ້ (ຮູບທີ 2) ຈາກນັ້ນພັບຈອຍແຫຼມເຂົ້າຫາເສັ້ນເຄິ່ງກາງໄປເບື້ອງໜ້າ ແລະ ເບື້ອງຫຼັງຕາມຮອຍຈໍ້າໄດ້ (ຮູບທີ 2,3,4) ສອດມືເຂົ້າ (ຮູບທີ 4) ແລ້ວດຶງແຈແຫຼມອອກພັບສອງຂ້າງແປະໃສ່ກັນໄດ້ (ຮູບທີ 5) ເຮົາໄດ້ແບບພັບພື້ນຖານທີ 3 ຕົວຢ່າງຮູບ




1. **ວິທີພັບໝາກບານ**

ນໍາໃຊ້ແບບພັບພື້ນຖານທີ 3ແລ້ວພັບຈອຍແຫຼມຂຶ້ນສູ່ຈອມເທິງທັງສອງຂ້າງ, ປີ້ນດ້ານຫຼັງພັບແບບດຽວກັນເຮົາໄດ້ (ຮູບທີ 2) ພັບສອງແຈເຂົ້າຫາເສັ້ນເຄິ່ງກາງທັງສອງຂ້າງຕາມຮອຍຈໍ້າປີ້ນດ້ານຫຼັງພັບແບບດຽວກັນໄດ້ (ຮູບທີ 3) ແລ້ວພັບເຈ້ຍບາງຢູ່ດ້ານຫຼັງຢັດເຂົ້າຫຼືບຕາມຮອຍຈໍ້າທັງສອງຂ້າງ, ພັບດ້ານຫຼັງແບບດຽວກັນເຮົາໄດ້ (ຮູບທີ 4) ແລ້ວເປົ່າລົມໃສ່ໄດ້ໝາກບານ (ຮູບທີ 5).




2. **ວິທີພັບໂຕກະຕ່າຍ**

**ອຸປະກອນ** ເຈ້ຍ, ມີດຕັດ, ກາວ, ສໍສີ, ເຝີດ,ເຈ້ຍສີ ແລະ ເຈ້ຍເສດ.

ວິທີພັບໂຕກະຕ່າຍ ແບບທີ 1

(ຮູບທີ 1) ເຮົາໄດ້ (ຮູບທີ 4) ແບບພັບໝາກບານປີ້ນດ້ານຫຼັງຄືນໄດ້ (ຮູບທີ 2) ພັບສອງຂ້າງເຂົ້າກາງໄດ້ (ຮູບທີ 3) ຈາກນັ້ນພັບສະຫຼຽງສອງແຈໄປຕາມແຖວຈໍ້າໄດ້ (ຮູບທີ 4) ຫັກສອງແຈແຫຼມເຂົ້າກາງໄດ້ (ຮູບທີ 5) ຫຼັງຈາກນັ້ນເຮົາສອດມືເຂົ້າຫຼີບພັບສອງແຈແປະໃສ່ກັນໄດ້ (ຮູບທີ 6) ເປົ່າລົມໃສ່ເຮົາຂະໄດ້ (ຮູບທີ 7) ນັ້ນແມ່ນໂຕກະຕ່າຍ **ຕົວຢ່າງ**




ຮູບທີ1



ຮູບທີ 2

**ກິດຈະກຳ** ການພາບໂຕກະຕ່າຍ

**ອຸປະກອນ** ເຈ້ຍຂາວ, ເຈ້ຍສີ, ສໍສີ, ເຝີດ, ກາວ, ມີດຕັດ, ເຈ້ຍເສດ ແລະ ເຈ້ຍໜັງສືພິມ.

**ວິທີດຳເນີນກິດຈະກຳ**

**ກິດຈະກຳທີ 1** ຄູລະດົມສະໝອງນັກຮຽນໃນຫ້ອງດ້ວຍການຕັ້ງຄຳຖາມລຸ່ມນີ້:

- ການພັບແບບພື້ນຖານທີ 3 ເຮົາຈະນຳໃຊ້ເຈ້ຍຂະໜາດໃດ?.
- ການພັບໂຕກະຕ່າຍ, ໜ້າກະຕ່າຍ ມີຄຸນປະໂຫຍດແນວໃດ? ຕໍ່ການພັດທະນາກ້າມຊີ້ນຂອງເດັກ.
- ນັກຮຽນຕອບ.

- ໃຫ້ນັກຮຽນເອົາເຈ້ຍຂຶ້ນມາແລ້ວຄູນຳພານັກຮຽນພັບແຕ່ລະຂັ້ນຕອນຂອງແຕ່ລະຮູບ.

**ກິດຈະກຳທີ 2**

ຄູແບ່ງນັກຮຽນອອກເປັນກຸ່ມໃຫ້ແຕ່ລະກຸ່ມປະຕິບັດຕາມຫົວຂໍ້ລຸ່ມນີ້:

- ພັບໂຕກະຕ່າຍ
- ພັບໜ້າກະຕ່າຍ
- ໃຫ້ແຕ່ລະກຸ່ມຂຶ້ນອະທິບາຍວິທີພັບພ້ອມທັງແນະນຳວິທີສອນເດັກພັບແຕ່ລະຂັ້ນຕອນ.

**3. ການພັບເຮືອບິນ**

**ອຸປະກອນ** ເຈ້ຍຂາວ, ເຈ້ຍສີ, ເຈ້ຍເສດ, ເຈ້ຍໜັງສືພິມ, ມີດຕັດ, ກາວ, ສະກ໊ອດ.

**+ ວິທີພັບເຮືອບິນ**

ໃນເວລາເວລາພັບເຮືອບິນ ເຮົາເອົາເຈ້ຍສີ່ຫຼ່ຽມຍາວມາພັບເຄິ່ງກາງທາງກ້ວາງ, ແລ້ວເປີດອອກພັບຈອຍແຫຼມເຂົ້າເສັ້ນເຄິ່ງກາງ ເນົາຈະໄດ້ **(ຮູບທີ 2)** ຈາກນັ້ນເຮົາພັບຮູບສາມແຈລົງຕາມລູກສອນເຮົາຈະໄດ້ **(ຮູບທີ 3)** ພັບສະແຫຼງສອງແຈເຂົ້າຫາເສັ້ນໃຈກາງເຮົາຈະໄດ້ **(ຮູບທີ 4)** ຫຼັງຈາກນັ້ນປີ້ນສາມແຈນ້ອຍຢູ່ເບື້ອງລຸ່ມຂຶ້ນມາເບື້ອງເທິງເຮົາຈະໄດ້ **(ຮູບທີ 5)** ພັບເຄິ່ງຮູບ **(ຮູບທີ 5)** ໄປເບື້ອງຫຼັງໄດ້ **(ຮູບທີ 6)** ພັບສະຫຼຽງສອງຂ້າງເຂົ້າຫາສິ້ນທົບເພື່ອເຮັດປີກ, ແທກແຕ່ລະສິ້ນທົບເບື້ອງຫາງໄປຫາຫົວເຮືອບິນປະມານ 2-3 ຊມ, ຈາກນັ້ນຕັດສະຫຼຽງໄປທາງຫາງໃຫ້ຮອດຮອຍພັບຂອງປີກເພື່ອເຮັດຫາງ, ຫຼັງຈາກນັ້ນຕັດສິ້ນແລ້ວພັບສິ້ນທົບໄປເບື້ອງຫຼັງຂອງປີກເຮົາຈະໄດ້ **(ຮູບທີ 7)** ນັ້ນແມ່ນຮູບເຮືອບິນ.




**ກິດຈະກຳ** ວິທີພັບເຮືອບິນ.

**ອຸປະກອນ** ເຈ້ຍຂາວ, ເຈ້ຍສີ, ເຈ້ຍເສດ, ເຈ້ຍໜັງສືພິມ, ມີດຕັດ, ກາວ, ສະກ໊ອດ.

**ວິທີດຳເນີນກິດຈະກຳ**

ປະຕິບັດຄືກັບກິດຈະກຳຂອງການພັບກະເປົາ 2 ຖົງ ແຕ່ວ່າຄຳຖາມລະດົມສະໝອງນັກຮຽນຕ້ອງໃຫ້ເປັນຄຳຖາມທີ່ກ່ຽວກັບການພັບເຮືອບິນ.

4. **ພັບຄັນຮົ່ມ**






## 3. ການຕັດຕາມແບບຕ່າງໆ

ການຕັດຕາມແບບແມ່ນມີແບບແລ້ວ ເຮົາຈະຕັດຕາມແມ່ແບບຈະຕັດຕາມຄອງຂີດ ຫຼື ຮອຍຈໍ້າຂອງຮູບພາບນັ້ນ. ຕົວຢ່າງຮູບແຕ້ມຕາມຮອຍຈໍ້າ.



ຮູບແຕ້ມຕາມຮອຍຈໍ້າ

## 4. ການຕິດຕາມແບບຕ່າງ

### 1. ການຕິດດ້ວຍເຈ້ຍ

ການຕັດ ແລະ ຕິດຕາມໃຈ, ການຕັດ ແລະ ຕິດເຈ້ຍຕາມແບບກຳນົດໄວ້ ແມ່ນເອົາມີດຕັດມາຕັດເຈ້ຍເປັນແຜ່ນນ້ອຍໃຫ່ຍຂຶ້ນກັບເຮົາກຳນົດເອົາເອງໃຊ້ກາວທາເຈ້ຍທີ່ຕັດອອກມາແລ້ວຕິດໃສ່ເຈ້ຍຂາວບ່ອນທີ່ເຮົາກະກຽມໄວ້ ເອົາໃຈໃສ່ເວລາຕັດໃຫ້ເຈ້ຍເປັນຮູບຮ່າງຄືກັນ ແລະ ເວລາຕິດກໍ່ໃຫ້ໄປຕາມລວງດຽວກັນຍົກເວັ້ນບ່ອນທີ່ເປັນມູມແຈ ຫຼື ບ່ອນທີ່ບໍ່ສາມາດຕິດຕາມລວງດຽວໄດ້.

ຕົວຢ່າງ**:** ການຕິດດ້ວຍເຈ້ຍເສດ ຫຼື ເຈ້ຍໜັງສືພິມ



### 2. ການຕິດດ້ວຍແກ່ນພືດ ແລະ ໃບໄມ້

ການຕິດແກ່ນໝາກໄມ້, ກ້ອນຫີນເປືອກຫອຍ ແລະ ອື່ນໆ. ການຕິດຕາມໃຈ, ຕິດຕາມແບບທີ່ກຳນົດໄວ້ໃຊ້ກາວທາໃສ່ເຈ້ຍ,  ແຜ ຫຼື ຕິດເປັນໂຕກະຕຸ່ນສາມາດຕັ້ງໄດ້

- ເອົາໃຈໃສ່ເວລາຕິດ, ການໃຊ້ກາວແມ່ນຂຶ້ນກັບວັດຖຸທີ່ເອົາມາຕິດ, (ກາວຮ້ອນ, ກາວລາເທັກ, ກາວກາຊ້າງ ຫຼື ກາວຈູດ).



ຮູບທີ 1 ຕິດດ້ວຍແກ່ນງາ



ຮູບທີ 2 ຕິດດ້ວຍເມັດເຂົ້າເປືອກ ແລະ ເມັດເຂົ້າສານ





ຮູບທີ 3 ຕິດດ້ວຍໃບໄມ້

## 5. ການຈີກຕາມແບບຕ່າງໆ

ແມ່ນມີແບບໃຫ້ເບິ່ງແລ້ວຄ່ອຍໆຈີກຕາມຄອງແຕ້ມ ຫຼື ຕາມຮອຍຈ້ຳຂອງຮູບພາບ.

**+ ວິທີຈີກເຈ້ຍ**

- **ການຈີກໃຫ້ມຸ່ນ**

ສຳແກ່ນໝາກເຜັດແກ່ນໝາກເຂືອ ຫຼື ໃຫ້ມຸ່ນກ່ອນນັ້ນໃຊ້ມືນີ້ວໂປກັບນີ້ວຊີທັງສອງເບື້ອງຈັບເຈ້ຍ ແລະ ຈີກຕາມຄວາມຕ້ອງການ.

- **ຈີກຕາມຮ້ອຍຈຳເຂັມ**

ເອົາເຂັມ ຫຼື ວັດຖຸທີ່ມີປາຍແລມມາຈ້ຳໃຫ້ເປັນປ່ອງ ຫຼື ຈ້ຳໃຫ້ເປັນຮູບຕາມທີເຮົາມັກໃຊ້ມືນີ້ວໂປກັບນີ້ວຊີທັງສອງເບື້ອງຈັບເຈ້ຍ ແລະ ຈີກຕາມຮອ້ຍຈ້ຳພະຍາຍາມຈີກບໍ່ໃຫ້ນອກເສັ້ນ.



ຮູບແຕ້ມຕາມຮອຍຈ້ຳ

- **ຈິກຕາມຮູບແຕ້ມ**

ແຕ້ມຮູບໃສ່ເຈ້ຍຕາມ ຄວາມມັກໃຊ້ມືນິ້ວໂປ້ກັບນິ້ວຊີ້ທັງສອງເບື້ອງຈັບເຈ້ຍ ແລະ ຈິກຕາມຮອຍແຕ້ມ ພະຍາຍາມຈິກບໍ່ໃຫ້ນອກເສັ້ນແຕ້ມ.



**ຮູບແຕ້ມສີ່ແຈ**

## ໃຈຄວາມ

ໃນບົດນີ້ໄດ້ກ່າວເຖິງຄວາມໝາຍຄວາມສຳຄັນຂອງການພັບ, ວິທີພັບເຈ້ຍແບບຕ່າງໆ, ການຕັດຕາມແບບ, ການຕິດຕາມແບບຕ່າງໆ ແລະ ການຈິກຕາມແບບຕ່າງໆ ຊ່ວຍໃຫ້ຜູ້ຮຽນມີຄວາມສະຫງວນມັກຄວາມງາມ, ຮູ້ຄຸນຄ່າຂອງສິລະປະ, ຮູ້ຮັກສາສິ່ງແວດລ້ອມ ແລະ ສາມາດນຳເອົາຄວາມຮູ້ທີ່ໄດ້ຮຽນມາໄປນຳໃຊ້ເຂົ້າໃນຊີວິດປະຈຳວັນ.

## ວຽກມອບໝາຍ

- ໃຫ້ນັກຮຽນພັບເຈ້ຍແບບຕ່າງໆ ຜູ້ລະ 1-5 ຜົນງານ?
- ໃຫ້ນັກຮຽນຈິກ, ຕັດ ແລະ ຕິດຕາມແບບຕ່າງໆ ຜູ້ລະ 1 ຜົນງານ?

## ຄຳຖາມ

1. ຈົ່ງບອກຄວາມໝາຍຄວາມສຳຄັນຂອງການພັບ?
2. ໃຫ້ນັກຮຽນອະທິບາຍວິທີພັບເຈ້ຍແບບຕ່າງໆ ?

# ບົດທີ 8

# ການຜະລິດ, ການນຳໃຊ້ເກມ ແລະ ການປົກປັກຮັກສາ

**ເວລາ 4 ຊົ່ວໂມງ**

**ຈຸດປະສົງ ໃຫ້ນັກຮຽນສາມາດ:**

- ອະທິບາຍຄວາມໝາຍຄວາມສຳຄັນຂອງເກມການສຶກສາໄດ້
- ຜະລິດເກມການສຶກສາແບບຕ່າງໆໄດ້
- ຜະລິດເກມການສຶກສາຕາມໜ່ວຍການສອນຂອງແຕ່ລະຂັ້ນອະນຸບານ 1, 2, 3 ໄດ້
- ໃຊ້ເກມປະເພດຕ່າງໆ ເຂົ້າໃນການຮຽນ-ການສອນຢູ່ໃນຊັ້ນອະນຸບານໄດ້

## 1. ຄວາມໝາຍຄວາມສຳຄັນຂອງເກມການສຶກສາ

**+ ຄວາມໝາຍຂອງເກມການສຶກສາ**

ເກມການສຶກສາໝາຍເຖິງການຫຼິ້ນ ຫຼື ແບບຫຼິ້ນທີ່ມີກະຕິກາມີລະບຽບໃນການຫຼິ້ນ ເຊິ່ງເດັກສາມາດຫຼິ້ນຜູ້ດຽວ ຫຼື ຫຼິ້ນເປັນກຸ່ມ, ເປັນຄູ່ໄດ້.

**+ ຄວາມສຳຄັນຂອງການສອນເກມສຶກສາ**

ເກມການສຶກສາແມ່ນກິດຈະກຳໜຶ່ງທີ່ເປັນການສົ່ງເສີມການຮຽນຮູ້ ໂດຍຜ່ານການຫຼິ້ນທີ່ມີແບບແຜນເປັນການຊ່ວຍກະຕຸກຊຸກຍູ້ໃຫ້ເດັກເກີດມີການຄົ້ນຄິດ ແລະ ຊອກຫາເຫດຜົນ, ຮູ້ຄ່າຂອງຕົວເລກ, ເປັນການຊ່ວຍໃຫ້ເດັກເຂົ້າໃຈເລື່ອງຕ່າງໆ ທີ່ໄດ້ຮຽນຮູ້ມາ, ຊ່ວຍໃຫ້ເດັກເຝິກປະສາດສຳພັດລະຫວ່າງມື ກັບ ຕາ, ເຝິກໃຫ້ເດັກມີຄຸນນະທຳຕ່າງໆເຊັ່ນ: ມີຄວາມຮັບຜິດຊອບ, ມີຄວາມອົດທົນພະຍາຍາມ, ມີລະບຽບວິໄນ ເຝິກການຈຳແນກດ້ວຍສາຍຕາ, ຮູ້ແຍກປະເພດ ຫຼື ຈັດໝວດໝູ່ ແລະ ຊ່ວຍໃຫ້ເດັກເກີດການຮຽນຮູ້ທີ່ເປັນພື້ນຖານການສຶກສາ. ເກມທີ່ນຳມາໃຊ້ເຂົ້າໃນການສອນຕົວຈິງໃນຊັ້ນອະນຸບານມີຫຼາຍປະເພດເຊິ່ງເປັນການສົ່ງເສີມພັດທະນາການຂອງເດັກທັງ 5 ດ້ານເຊັ່ນ: ຮ່າງກາຍ, ອາລົມ, ສັງຄົມ, ສະຕິປັນຍາ ແລະ ພາສາ.

## 2. ຜະລິດເກມແບບຕ່າງໆ

### 1. ວິທີຜະລິດເກມຕັດຕໍ່

ການຜະລິດເກມຕັດຕໍ່ມີຫຼາຍຊະນິດແຕກຕ່າງກັນເຊັ່ນ: ເກມຕັດຕໍ່ 2 ປ່ຽນ, ຕັດຕໍ່ 4 ປ່ຽນ, ຕັດຕໍ່ 6 ປ່ຽນຕັດຕໍ່ 8 ປ່ຽນ ຕາມແຕ່ລະສໍ່າອາຍຸຂອງເດັກ.

**ອຸປະກອນ**

ເຈ້ຍແຂງ ຫຼື ກະດາດ, ເຈ້ຍຂາວແຜ່ນໃຫຍ່ ຫຼື ເຈ້ຍລາມຂາວ, ກາວ, ມີດຕັດ, ສໍສີ, ສີທຽນ ຫຼື ສີນໍ້າ, ສະກອັດໃສ, ກາລັບ ເຟີ, ຜ້າຢາງໃສ ຫຼື ຖົງຢາງຂາວ

**ວິທີຜະລິດ**

ຕັດໃຫ້ໄດ້ຂະໜາດ 30 ຊມ x 24 ຊມ ຫຼື 30 ຊມ x 30 ຊມ ຈໍານວນ 2 ແຜ່ນ. ແຕ້ມຮູບຕົວເລກ, ຕົວສັດໝາກໄມ້, ພືດ, ຄົນ ແລະ ອື່ນໆ ໃສ່ເຈ້ຍທັງສອງແຜ່ນນັ້ນ (ຮູບທີ່ແຕ້ມຕ້ອງໃຫ້ຄືກັນ) ທາສີໃສ່ຮູບແຕ້ມ 2 ແຜ່ນນັ້ນໃຫ້ງາມຄືກັນທັງສອງແຜ່ນ (ທາສີນັ້ນຕ້ອງແມ່ນ 3 ສີພື້ນຖານ). ຕັດເຈ້ຍແຂງຂະໜາດເທົ່າກັນກັບເຈ້ຍທີ່ແຕ້ມຮູບນັ້ນຈໍານວນ 2 ແຜ່ນ. ໃຊ້ກາວທາເຈ້ຍແຂງໃຫ້ທົ່ວເບື້ອງໜຶ່ງແລ້ວນໍາເອົາເຈ້ຍທີ່ແຕ້ມຮູບໃສ່ນັ້ນມາຕິດໃສ່ເຈ້ຍແຂງເຮັດຄືກັນໝົດທັງ 2 ແຜ່ນຈາກນັ້ນ ຈຶ່ງນໍາແຜ່ນໜຶ່ງມາຕັດເປັນ 2 ສ່ວນເທົ່າກັນແລ້ວໃຊ້ຜ້າຢາງໃສຫໍ່(ແຜ່ນເກມແຕ່ລະແຜ່ນ) ການຫໍ່ຜ້າຢາງໃສແມ່ນເພື່ອຮັກສາສີທີ່ທາໃສ່ຮູບນັ້ນໃຫ້ງົດງາມ, ບໍ່ໃຫ້ສີຈາງ, ເຮັດໃຫ້ສີ ຫຼື ຮູບແຕ້ມຈະແຈ້ງ, ສົດໃສງົດງາມຄືເກົ່າ ແລະ ບໍ່ໃຫ້ແຜ່ນຮູບເກມນັ້ນເປິະເປື້ອນອີກ.

**ວິທີຫຼິ້ນ**

ກ່ອນຈະຫຼິ້ນຄູຕ້ອງສະເໜີຮູບພາບແຕ່ລະຄູ່, ຈາກນັ້ນຈຶ່ງເອົາແຜ່ນຮູບເກມປົນໃສ່ກັນແລ້ວແບ່ງໃຫ້ແຕ່ລະຄົນເທົ່າກັນຫຼິ້ນ.

- **ວິທີໃຊ້ (ການນໍາໃຊ້)**

ສໍາລັບເກມຫຼິ້ນຊະນິດນີ້ ແມ່ນໃຫ້ເລືອກໃຊ້ຕາມຄວາມເໝາະສົມຂອງເດັກແຕ່ລະສົ່ງອາຍຸຄື: ລ້ຽງເດັກ ແລະ ອະນຸບານ ແຕ່ວ່າການຕັດຄວນຄໍານຶງເຖິງຄວາມຮັບຮູ້ຂອງເດັກດັ່ງນີ້:

- ອະນຸບານນ້ອຍ ຕັດເປັນ 4-6 ປ່ຽງ.
- ອະນຸບານກາງ ຕັດເປັນ 7-8 ປ່ຽງ.
- ອະນຸບານໃຫ່ຍ ຕັດເປັນ 9-10 ປ່ຽງ.
- ຫ້ອງກຽມ ຕັດເປັນ 12 ປ່ຽງ ຫຼື ຕັດເປັນເສັ້ນໂຄ້ງ.
- ຫ້ອງລ້ຽງເດັກໃຫ່ຍ ຕັດເປັນ 2 ປ່ຽງ.

**2. ວິທີຜະລິດເກມໂດມິໂນ**

- ອຸປະກອນ: ເຈ້ຍແຂງ, ເຈ້ຍລ່າມຂາວ, ໄມ້ອັດ, ໄມ້ແປ້ນ, ສີນໍ້າມັນ, ສໍສີ, ເລື່ອຍມື(ເລື່ອຍຫາງປາ), ມີດຕັດ ແລະ ກາວຂາວຂຸ້ນ.
- **ວິທີຜະລິດ**
  - ຕັດເຈ້ຍໃຫ້ໄດ້ຂະໜາດສີ່ຫຼ່ຽມບາວ
  - ລວງກວ້າງ 5-8 ຊມ
  - ລວງຍາວ 10-12 ຊມ
  - ຖ້າມັກຂະໜາດໃດແມ່ນຜະລິດຕາມຄວາມຕ້ອງການແຕ່ບໍ່ໃຫ້ໃຫ່ຍ ແລະ ນ້ອຍເກີນໄປ.
  - ຄວາມໜາຂອງເຈ້ຍ ຫຼື ໄມ້ 3 ມິນລີແມັດ.
  - ຫຼັງຈາກຕັດໄມ້ ຫຼື ເຈ້ຍໄດ້ຂະໜາດແລ້ວມາແບ່ງເປັນ 2 ສ່ວນໃຫ້ເທົ່າກັນ ( ເບິ່ງຮູບທີ1 )
  - ແຜ່ນເກມໂດມິໂນທັງໝົດມີ 28 ແຜ່ນ ( 1ຊຸດ )
  - ທາງເບື້ອງໜ້າແຜ່ນເກມແຕ້ມຮູບ ຫຼື ຕິດຮູບຫຍັງໃສ່ກໍ່ໄດ້ ເຊັ່ນ: ຕົວເລກ, ໝາຍຈໍ້າ, ຮູບເລຂາຄະນິດຮູບໝາກໄມ້, ວັດຖຸອື່ນ ແລ້ວໃສ່ສີໃຫ້ງາມເປັນຕົ້ນແມ່ນ 3 ສີພື້ນຖານເຊັ່ນ:ແດງເຫຼືອງ, ຟ້າ.

- ໃນເວລາຜະລິດນັ້ນ (ກໍ່ຕ້ອງແຕ້ມຮູບໃສ່ແຜ່ນເກມ) ຜູ້ຜະລິດຈະຕ້ອງກໍານົດສິ່ງທີ່ຈະແຕ້ມເຊັ່ນແຕ້ມເລກ

1-5 ຫຼື ຮູບພາບ 5 ຊະນິດ ຫຼື ອາດຈະຫຼາຍກວ່າ 5 ຮູບຕາມຄວາມຕ້ອງການຂອງຜູ້ຈະນໍາໃຊ້ ຮູບທີ່ຈະແຕ້ມໃສ່ແຜ່ນເກມແບ່ງແຜ່ນເກມໂດມິໂນໃຫ້ແຕ່ລະຄົນເທົ່າກັນ(ຖ້າຫຼິ້ນ 4 ຄົນຈະໄດ້ຜູ້ລະ 7 ແຜ່ນຖ້າຫຼິ້ນ 2 ຄົນ )



**ວິທີຫຼິ້ນ**

- ຈະໄດ້ຜູ້ລະ 14 ແຜ່ນໃຜມີຕົວເລກຕໍາກວ່າໝູ່ແມ່ນໃຫ້ຜູ້ນັ້ນໄປກ່ອນ ຫຼື ອາດຈະແບ່ງກໍ່ໄດ້
- ຜູ້ໃດໄປກ່ອນແມ່ນໃຫ້ເອົາແຜ່ນເກມໂດມິໂນວາງລົງແລ້ວໃຫ້ໝູ່ຜູ້ທີ່ຖືກຜຽນໄປນັ້ນເອົາວາງລົງຕໍ່ໃສ່ເອົາສົ້ນເບື້ອງຊ້າຍຂອງແຜ່ນທີຈະວາງລົງໃໝ່ຕໍ່ໃສ່ສົ້ນເບື້ອງຂວາຂອງແຜ່ນທີວາງໄວ້ກອນນັ້ນແຕ່ຮູບນັ້ນຕ້ອງໃຫ້ຄືກັນເຮັດຄືແນວນັ້ນຈົນໝົດແຜ່ນເກມ ຫຼື ອາດຈະບໍ່ໝົດກໍ່ມີບາງຄັ້ງຖ້າຖືກຜຽນຂອງໃຜໄປແຕ່ບໍ່ມີຮູບຕໍ່(ໝາຍຄວາມວ່າບໍ່ມີຮູບທີ່ຄືກັນມາຕໍ່) ແມ່ນໃຫ້ຜູ້ຕໍ່ໄປເອົາຮູບມາຕໍ່ຖ້າບໍ່ມີຜູ້ໃດມີຮູບອີກແລ້ວ ຫຼື ອາດຈະໝົດແຜ່ນເກມໂດມິໂນໃນມືແມ່ນຄິດໄລ່ໄດ້ ຫຼື ເສຍດັ່ງນີ້:
- ຖ້າເກມໂດມິໂນແທນຕົວເລກໃຫ້ສະເລ່ຍຕົວເລກທີ່ຢູ່ໃນແຜ່ນເກມໂດມິໂນຂອງແຕ່ລະຄົນໃຫ້ຜູ້ມີແຜ່ນໂດມິໂນໜ້ອຍກວ່າແມ່ນຜູ້ຊະນະ(ສໍາລັບຜູ້ໃຫຍ່ທີ່ບວກເລກໄດ້)



ຮູບທີ 2 ຫຼິ້ນເກມໂດມິໂນແທນຮູບເລຂາຄະນິດ



ຮູບທີ 2 ຫຼິ້ນເກມໂດມິໂນຮູບເລຂາຄະນິດ

**3. ວິທີຜະລິດເກມຈຳແນກສີ**

- ອຸປະກອນ:  ໄມ້ແປ້ນ( ໄມ້ອັດ ) ກະດາດຊາຍ,ກາກຕິ່ງຢາງ,ເຈ້ຍແຂງ ເຈ້ຍສີປະເພດຕ່າງໆ ນ້ຳສີ,ມີດຕັດ.
- ຮູບປະກອບເກມຈຳແນກສີ ມີ4 ຮູບ (ຮູບທີ1 ຫາ ຮູບທີ4).
- ພື້ນ(ສີກະດານ)ຂະໜາດຂ້າງ 18 x 20 ຊ.ມ,16 x 18 ຊ.ມ ເປັນຮູບສີ່ຫຼ່ຽມມົນທົນ ຫຼື ອາດຈະສ້າງຕາມຄວາມເໝາະສົມທີ່ຕ້ອງການ.
- ຢູ່ທາງໜ້າຂອງພື້ນແຕ້ມ ຫຼື ຕັດຕິດຮູບວົງມົນ 40 ຮູບ,ລັດສະໝີຂອງຮູບວົງມົນ 1ຊ.ມ.
- ບັນດາຮູບວົງມົນຢູ່ພື້ນທາດ້ວຍສີພື້ນຖານເຊັ່ນ: ສີແດງ,ສີເຫຼືອງ,ສີຟ້າ.ຕົວຢ່າງ ພື້ນເປັນຮູບສີ່ຫຼ່ຽມມົນທົນ.

**4. ວິທີຜະລິດເກມຈັບຄູ່**

ເກມຈັບຄູ່ທີ່ນຳໃຊ້ໃນໂຮງຮຽນອະນຸບານມີ 8 ຊະນິດຄື:

1. ເກມຈັບຄູ່ຮູບທີ່ຄືກັນ
2. ເກມຈັບຄູ່ສິ່ງຂອງທີ່ໃຊ້ຄູ່ກັນ
3. ເກມຈັບຄູ່ຮູບທີ່ມີຄວາມສຳພັນກັນ
4. ເກມຈັບຄູ່ຮູບທີ່ມີຈຳນວນ ເທົ່າກັນ
5. ເກມຈັບຄູ່ຈຳນວນ ແລະ ຕົວເລກ
6. ເກມຈັບຄູ່ຮູບທີ່ກົງກັນຂ້າມກັນ
7. ເກມຈັບຄູ່ຮູບສິ່ງຂອງທີ່ກົງກັນຂ້າມກັນ
8. ເກມຈັບຄູ່ຕົວອັກສອນກັບຮູບພາບ

- **ອຸປະກອນຜະລິດເກມຈັບຄູ່ແຕ່ລະຊະນິດ:**ເຈ້ຍແຂງ, ເຈ້ຍສີທຸກຊະນິດ, ກາວ, ສີນ້ຳມັນ, ມີດຕັດ, ສໍສີ ຖົງຢາງສຳລັບຫໍ່, ສະກັອດ ແຕ່ລະເກມໃຊ້ອຸປະກອນຊະນິດດຽວກັນ.
- **ວິທີຜະລິດເກມຈັບຄູ່ແຕ່ລະຊະນິດ**

- ຮູບປະກອບການຜະລິດເກມຈັບຄູ່ມີ 11 ຮູບ ( ຮູບທີ 1 ຫາ ຮູບທີ 11 ).

ຕັດເຈັ້ຍໃຫ້ໄດ້ຂະໜາດ 7X10,8X12 ຊ.ມ ຕາມຄວາມຕ້ອງການ ແລ້ວແທກພື້ນທີ ຈະແຕ້ມພື້ນທີ່ຈະແຕ້ມຮູບໃສ່ໃຫ້ໄດ້ 7 ຊ.ມ ມົນທົນ (7x7) ຫຼື (8x8) ສ່ວນທີ່ເຫຼືອແມ່ນໃຫ້ຂີດລັດໄວ້ (ເບິ່ງຕາມຮູບ).



- ຫຼັງຈາກນັ້ນຕັດເຈ້ຍໄດ້ຂະໜາດແລ້ວແຕ້ມຮູບໃສ່ຕາມຄວາມຕ້ອງການ.ສວນ 3 ຊ.ມ ທີຂີດລັດໄວ້ນັ້ນແມ່ນບໍ່ແມ່ນແຕ້ມຮູບຫຍັງໃສ່ເພາະເວລາສອນ ຖ້າຫາກໃຊ້ຖົງບັດຄຳຈະຕ້ອງໃຊ້ເບື້ອງທີ່ຂີດລັດໄວ້ 3 ຊ.ມ ນັ້ນແມ່ນໃຊ້ຖົງບັດຄຳ ສະນັ້ນເວລາເກມຈັບ ຄູ່ຊະນິດຕາງ ຈະຕ້ອງຈິ່ງໄວ້ 3 ຊ.ມ (ຂີດລັດ ໄວ້ຄືຕົວຢ່າງຂ້າງເທິງ ).
- ການຜະລິດເກມຈັບຄູ່ແຕ່ລະຊະນິດຕ້ອງໃຫ້ເໝາະສົມກັບສຳອາຍຸຂອງເດັກເຊັ່ນ ອະນຸບານນ້ອຍຜະລິດ3-4 ຄູ່, ອະນຸບານກາງ ຜະລິດ 4-6 ຄູ່, ອະນຸບານໃຫຍ່ ຜະລິດ 6-8 ຄູ່ ແລະ ຫ້ອງກຽມ ຜະລິດ 8-10 ຄູ່. ການຜະລິດເກມການສຶກສາຕ້ອງໃຫ້ເໝາະສົມກັບ ໜ່ວຍການສອນໃນ ຊັ້ນອະນຸບານ.

## 1. ການຜະລິດເກມຈັບຄູ່ຮູບທີ່ຄືກັນ

- **ວິທີຜະລິດ**

- ຕັດເຈ້ຍໃຫ້ໄດ້ຂະໜາດຕາມຄວາມຕ້ອງ ແລະ ແນະນຳຂ້າງເທິງນັ້ນ
- ການຜະລິດເກມຊະນິດນີ້ແຕ່ລະຄູ່ ຕ້ອງໃຫ້ມີຂະໜາດໃຫຍ່ນ້ອຍເທົ່າກັນ, ສີສັນຄືກັນ ຮູບທີແຕ້ມຕ້ອງແມ່ນຊະນິດດຽວກັນເຊັ່ນ ຮູບຕັກແຕນ 1 ໂຕ ແຕ້ມໃສແຜ່ນເກມ 1 ແຜ່ນ ແລະ ອີກແຜ່ນໜຶ່ງກໍ່ແຕ້ມເຊັ່ນດຽວກັນ ແລະ ຮູບອື່ນ ຕາມຄວາມຕ້ອງການແຕ່ຮູບລະຊະນິດຕ້ອງແຕ້ມໃສ່ແຜ່ນເກມ 2 ແຜ່ນ ໃຫ້ເປັນຄູ່ກັນຈາກນັ້ນທາສີໃສ່ແລ້ວໃຊ້ຜ້າຢາງຂ່າວຫໍ່.

**ຕົວຢ່າງຮູບ**









- **ວິທີຫຼິ້ນ(ວິທີນຳໃຊ້)**
- ຄູ່ວາງແຜ່ນເກມຮູບໃດໜຶ່ງລົງກ່ອນຈາກນັ້ນຈຶ່ງວ່າງແຜ່ນທີສອງລົງຮຽງກັນແຕ່ຮູບສອງແຜ່ນທີ່ວ່າງລົງຮຽງກັນນັ້ນຕ້ອງແມ່ນຊະນິດດຽວກັນ ແລະ ຄືກັນທຸກຢ່າງ (ເບິ່ງຕາມຮູບຂ້າງເທິງ).
- ຄູຕ້ອໃຫ້ເດັກຫຼິ້ນເປັນບຸກຄົນ, ເປັນຄູ່ ຫຼື ເປັນກຸ່ມກໍ່ໄດ້ ແຕ່ຕ້ອງເຮັດໃຫ້ເດັກເບິ່ງກ່ອນ ຈາກນັ້ນຈຶ່ງໃຫ້ເດັກຫຼິ້ນຕາມແບບ ສ່ວນເກມຈັບຄູ່ ຊະນິດອື່ນ ກໍ່ຫຼິ້ນເຊັ່ນດຽວກັນ ຫຼິ້ນແບບດຽວກັນລາຍລະອຽດໃຫ້ເບິ່ງຕາມຮູບ.

**2. ເກມຈັບຄູ່ສິ່ງຂອງທີ່ໃຊ້ຄູ່ກັນ**

- **ວິທີຜະລິດ**

ແທກເຈ້ຍໃຫ້ໄດ້ຂະໜາດແລ້ວກໍ່ແຕ້ມຮູບ ໃສ່ແຜ່ນເກມເວລາແຕ້ມໃສ່ແຜ່ນເກມແຕ່ລະຄູ່ຮູບທີ່ແຕ້ມຕ້ອງໃສ່ຄຽງຄູ່ກັນໄດ້ເຊັ່ນ: ເຫຼັກຕະປູ ຄູ່ກັບ ເຕົາໄຟ ຄູ່ກັບ ໝໍ້, ຖ້ວຍ ຄູ່ກັບ ບ່ວງ, ຂຽງ ຄູ່ກັບ ພ້າ ແລະ ອື່ນ ຫຼັງຈາກນັ້ນກໍ່ທາສີໃສ່ຮູບແຕ້ມແລ້ວໃຊ້ຜ້າຢາງໃສທັບອີກ

- **ວິທີຫຼິ້ນ** ປະຕິບັດຄືກັນກັບເກມຈັບຄູ່ຊະນິດອື່ນ

1. **ເຫຼັກຕາປູ ຄູ່ກັບ ຄ້ອນຕີ**



ເຫຼັກຕາປູ



ຄ້ອນຕີ

**2. ເຕົາໄຟ ຄູ່ກັບ ໝໍ້**



ເຕົາໄຟ



ໝໍ້

**3. ຖ້ວຍ ຄູ່ກັບ ບ່ວງ**



ຖ້ວຍ



ບ່ວງ

**4. ຂຽງ ຄູ່ກັບ ພ້າ**



ຂຽງ



ພ້າ

**3. ເກມຈັບຄູ່ຮູບທີ່ມີຄວາມສຳພັນກັນ**

**ວິທີຜະລິດ**

ແທກ ແລະ ຕັດເຈ້ຍໃຫ້ໄດ້ຕາມຂະໜາດແລ້ວແຕ້ມຮູບໃສ່ແຜ່ນເກມ ແຕ່ລະແຜ່ນຕາມຄວາມຕ້ອງການແຕ່ວ່າຮູບແຕ້ມໃສ່ແຜ່ນເກມແຕ່ລະຄູ່ຕ້ອງແມ່ນສິ່ງທີ່ມີຄວາມສຳພັນກັນທາງດ້ານການນຳໃຊ້ ແລະ ກຳມະພັນ (ສາຍເລືອດ)ເຊັ່ນ: ສາຍຝົນຄູ່ກັບຄັນຮົ່ມ, ໄກ່ແມ່ຄູ່ກັບໄກ່ນ້ອຍ ແລະ ອື່ນ ຫຼັງຈາກນັ້ນກໍ່ທາສີໃສ່ຮູບແຕ້ມແຕ່ລະຮູບໃຫ້ງາມແລ້ວໃຊ້ຜ້າຢາງໃສຫຸ້ມແຜ່ນເກມແຕ່ລະແຜ່ນໄວ້ເພື່ອຮັກສາສີສັນ ໃຫ້ງາມ ແລະ ໃຊ້ໄດ້ຍາວນານ.

**ວິທີຫຼິ້ນ** ( ເປັນລາຍບຸກຄົນ )

ຄູຈັບແຜ່ນເກມ 1 ແຜ່ນສຽບໃສບັດຄຳແລ້ວກໍ່ຊອກເອົາແຜ່ນທີ່ມີຄວາມສຳພັນກັບແຜ່ນທີ່ວາງໄວ້ກ່ອນນັ້ນສຽບໃສ່ທາງຂ້າງເຮັດແນວນັ້ນໄປຈົນໝົດແຜ່ນເກມແຕ່ວາຮູບແຕ່ລະຄູ່ທີຈັບມາຄູ່ກັນນັ້ນຕ້ອງໃຫ້ມີຄວາມສຳພັນກັນ ຫຼັງຈາກຄູ່ຫຼິ້ນໃຫ້ເດັກເບິ່ງແລ້ວຄູຢາຍແຜ່ນເກມໃຫ້ເດັກຜູ້ລະ 1 ແຜ່ນແລ້ວໃຫ້ເດັກເອົາແຜ່ນເກມທີມີຢູ່ໃນມືສຽບໃສບັດຄຳ ຫຼັງຈາກນັ້ນ ເດັກຜູ້ໃດມີແຜ່ນເກມທີມີຮູບກຽວພັນກັບແຜ່ນທີ່ວາງໄວ້ແລ້ວນັ້ນໃຫ້ເດັກເອົາແຜ່ນເກມ ມາສຽບໃສ່ຂ້າງແຜ່ນນັ້ນເຮັດແນວນັ້ນໄປຈົນໝົດແຜ່ນເກມໃນມືເດັກ ຫຼື ຈະຫຼິ້ນເປັນກຸມແຂ່ງຂັນກັນກໍ່ໄດ້ຕາມເງື່ອນໄຂຕົວຈິ່ງຜູ້ສອນ ແລະ ຈຳນວນເດັກຢູ່ໃນຫ້ອງ

**ຕົວຢ່າງ: ໄກ່ແມ່ ຄູ່ກັບ ໄກ່ນ້ອຍ**



ໄກ່ແມ່



ໄກ່ນ້ອຍ



ແມ່



ລູກ

**4. ເກມຈັບຄູ່ຮູບທີ່ມີຈຳນວນເທົ່າກັນ**

- **ວິທີຜະລິດ**

ແທກ ແລະ ຕັດເຈ້ຍໃຫ້ໄດ້ຕາມຂະໜາດທີຕ້ອງການແລ້ວແຕ້ມຮູບໃສ່ແຜ່ນເກມແຕ່ລະແຜ່ນຕາມຄວາມຕ້ອງການແຕ່ວ່າຮູບແຕ້ມຈະຕ້ອງໃຫ້ຕ່າງກັນ ແຕ່ໃຫ້ມີຈຳນວນເທົ່າກັນ ເຊັ່ນ: ໝາກອຶສອງໜ່ວຍ ຄູ່ກັບ ໝາກເຜັດສອງໜວຍ, ດອກບົວໜຶ່ງດອກຄູ່ກັບດອກຈຳປາໜຶ່ງດອກ ຫຼື ຮູບອື່ນ ຕາມຄວາມຕ້ອງການ ແລະ ເໝາະສົມຂອງໜ່ວຍການສອນ.

- **ວິທີຫຼິ້ນ:** ຫຼິ້ນຄືກັນກັບເກມຈັບຄູ່ທີ່ກ່າວມາຂ້າງເທິ່ງນັ້ນ

**ຕົວຢ່າງ** ຮູບພາບ ເກມຈັບຄູ່ຈຳນວນທີ່ເທົ່າກັນ









**5. ເກມຈັບຄູ່ຮູບຈຳນວນ ແລະ ຕົວເລກ**

**ວິທີຜະລິດ**

ຫຼັງຈາກຕັດເຈ້ຍໄດ້ຕາມຂະໜາດແລ້ວກໍ່ແຕ້ມຮູບ ໃສ່ແຜ່ນເກມແຕ່ລະແຜ່ນ ແຕ່ວາເວລາແຕ້ມຮູບໃສ່ແຜ່ນເກມແຕ່ລະຄູ່ນັ້ນແຜ່ນໜຶ່ງຈະຕ້ອງແຕ້ມເປັນຕົວເລກ ແລະ ອີກແຜ່ນໜຶ່ງຈະຕ້ອງແຕ້ມຮູບຈຳນວນເທົ່າກັບຕົວເລກທີແຕ້ມນັ້ນເຊັ່ນ: ເລກ 1 ຄູ່ກັບໝາກໃບໜຶ່ງ, ເລກ 3 ຄູ່ກັບມີດຕັດສາມດວງ.

**ວິທີຫຼິ້ນ**

ວາງແຜ່ນເກມທີມີຮູບຕົວເລກລົງ ຫຼື ສຽບໃສ່ຖົງບັດຄຳຕາມເງື່ອນໄຂທີມີຫຼັງຈາກນັ້ນຈິ່ງເອົາແຜ່ນເກມທີມີຮູບພາບວັດຖຸສິ່ງຂອງພຶດຜັກຕ່າງ ທີມີຈຳນວນເທົ່າກັບຕົວເລກທີ່ວາງໄວ້ກ່ອນນັ້ນລົງຂ້າງແຜ່ນເກມທີມີຕົວເລກນັ້ນລາຍລະອຽດໃຫ້ເບິ່ງຮູບແຕ້ມ.



1



2

**6. ເກມຈັບຄູ່ຮູບທີ່ກົງກັນຂ້າມກັນ**

- **ວິທີຜະລິດ:**

- ຕັດເຈັ້ຍໃຫ້ໄດ້ສອງປຽງຂະໜາດເທົ່າກັນ
- ລວງຍາວແຕ່ລະປຽງ 10 ຊມ ລວງກວ້າງ 8 ຊມ
- ແຕ້ມຮູບໃສ່ເຈ້ຍແຕ່ລະແຜ່ນໃຫ້ເປັນຮູບທີ່ກົງກັນຂ້າມກັນ
- ຕົວຢ່າງ ຮູບຕາເວັນກັບຮູບດາວ
- ທາສີໃສ່ຮູບທັງສອງແຜ່ນໃຫ້ງາມ
- ໃຊ້ຖົງຢາງຫໍ່ແຜ່ນການເພື່ອຮັບປະກັນບໍ່ເປື້ອນ ແລະ ໃຊ້ໄດ້ດົນ

- **ວິທີຫຼິ້ນ ( ວິທີນຳໃຊ້ )**

ວິທີຫຼິ້ນຄືກັນກັບເກມຈັບຄູ່ທີ່ກ່າວມາກ່ອນໃນຂ້າງເທິງນັ້ນ.

**ຕົວຢ່າງ  ຮູບຕາເວັນ ກົງກັນຂ້າມກັບ ຮູບດາວ**



ຮູບຕາເວັນ



ຮູບດາວ

## 7. ເກມຈັບຄູ່ສິ່ງຂອງທີ່ກົງກັນຂ້າມກັນ

- **ວິທີຜະລິດ**

ຕັດເຈ້ຍໃຫ້ໄດ້ສອງປ່ຽງຂະໜາດເທົ່າກັນລວງຍາວຂອງແຕ່ລະປ່ຽງ 10 ຊມ ແລະ ກວ້າງ 8 ຊມ ຫຼື ຂະໜາດໃຫຍ່ນ້ອຍນັ້ນກໍ່ໄດ້ຕາມຄວາມເໝາະສົມ.

ແຕ້ມຮູບໃສ່ເຈ້ຍແຕ່ລະແຜ່ນທີ່ມີຂະໜາດຕ່າງກັນ ຕົວຢ່າງຮູບ ໝາກມ່ວງ, ໜ່ວຍໜຶ່ງໃຫຍ່, ໜ່ວຍໜຶ່ງນ້ອຍ.

- ທາສີຮູບທັງສອງແຜ່ນໃສ່ໃຫ້ງາມ
- ໃຊ້ຖົງຢາງຫໍ່ແຜ່ນເກມເພື່ອຮັບປະກັນບໍ່ໃຫ້ເປື້ອນ ແລະ ໃຊ້ໄດ້ດົນ.

**ວິທີຫຼິ້ນ ( ວິທີນຳໃຊ້ )**

ວິທີຫຼິ້ນຄືກັນກັບເກມຈັບຄູ່ທີ່ກ່າວມາກ່ອນໃນຂ້າງເທິງນັ້ນ



ໝາກແຕງໃຫ່ຍ



ໝາກແຕງນ້ອຍ



ໝາກຮຸ່ງໃຫຍ່



ໝາກຮຸ່ງນ້ອຍ

**8. ເກມຈັບຄູ່ຕົວອັກສອນກັບຮູບ**

**ວິທີຜະລິດ**

- ຕັດເຈ້ຍໃຫ້ໄດ້ສອງປ່ຽງຂະໜາດເທົ່າກັນລວງຍາວຂອງແຕ່ລະປ່ຽງ 10 ຊມ ແລະ ລວງກ້ວາງ 8 ຊມ ຫຼື ຂະໜາດໃຫຍ່ນ້ອຍກວ່ານັ້ນກໍ່ໄດ້ຕາມຄວາມເໝາະສົມ.
- ແຕ້ມຮູບໃສ່ເຈ້ຍແຕ່ລະແຜ່ນທີ່ມີຄວາມແຕກຕ່າງກັນ

**ຕົວຢ່າງ:** ແຜ່ນໜຶ່ງຕົວອັກສອນ ດ ແຜ່ນໜຶ່ງຮູບພາບເດັກນ້ອຍ

- ແຜ່ນໜຶ່ງຕົວອັກສອນ ຮ ແຜ່ນໜຶ່ງແຕ້ມຮູບພາບເຮືອນ
- ທາສີໃສ່ຮູບທັງສອງແຜ່ນໃຫ້ງາມແລ້ວທາສີໃສ່ຂອບຂອງແຜ່ນເກມ
- ໃຊ້ຜ້າຢາງຫໍ່ແຜ່ນເກມເພື່ອຮັບປະກັນບໍ່ໃຫ້ເປື້ອນ ແລະ ໃຊ້ໄດ້ດົນ

- **ວິທີຫລິ້ນ (ວິທີນຳໃຊ້)**

  ວິທີຫລິ້ນຄືກັນກັບເກມຈັບຄູ່ທີ່ກ່າວມາກ່ອນນັ້ນ.

**ຕົວຢ່າງ:** **ຮູບເກມ**






ຂ



ນ



ດ



ຮ



**5. ເກມລຽງລຳດັບ:** ກ່ຽວກັບຂະໜາດ, ປະລິມານໃຫຍ່ນ້ອຍ, ການຈະເລີນເຕີບໂຕຂອງພືດ, ສັດ, ແມງໄມ້ຕ່າງໆ.

- ລຽງລຳດັບແຕ່ນ້ອຍ ຫາ ໃຫ່ຍ ຫຼື ແຕ່ໃຫ່ຍ ຫາ ນ້ອຍ
- ລຽງລຳດັບແຕ່ຕໍ່າ ຫາ ສູງ ຫຼື ແຕ່ສູງ ຫາ ຕໍ່າ
- ລຽງລຳດັບແຕ່ສັ້ນ ຫາ ຍາວ ຫຼື ແຕ່ຍາວ ຫາ ສັ້ນ.

**ວິທີຜະລິດ**

ຕັດເຈ້ຍໃຫ້ໄດ້ສີ່ປ່ຽງຂະໜາດເທົ່າກັນ ເຊິ່ງມີລວງຍາວຂອງແຕ່ລະປ່ຽງເທົ່າກັບ 10 ຊມ ແລະ ລ່ວງກ້ວາງຂອງແຕ່ລະປ່ຽງເທົ່າ 8 ຊມ ຫຼື ຂະໜາກໃຫ່ຍກ່ວານັ້ນກໍ່ໄດ້.

ແຕ້ມຮູບໃສ່ແຕ່ລະແຜ່ນໂດຍແມ່ນຮູບຊະນິດດຽວກັນ ແຕ່ລະຂະໜາດຂອງຮູບແຕກຕ່າງກັນ.

ຕົວຢ່າງ ແຕ້ມຮູບແມງກະເບື້ອ ທຳອິດຈະແຕ້ມໂຕໃຫ່ຍ ໂຕຕໍ່ມາໃຫ້ຫຼຸດລື່ນກັນຕາມລຳດັບ.

- ທາສີໃສ່ຮູບຂອງແຜ່ນເກມໃຫ້ງາມແລ້ວແຕ້ມຂອບໃສ່ພ້ອມ
- ໃຊ້ຖົງຢາງຫໍ່ແຜ່ນເກມເພື່ອຮັບປະກັນບໍ່ໃຫ້ເປື້ອນ ແລະ ໃຊ້ໄດ້ດົນ.

ວິທີຫຼິ້ນ

- ໃຫ້ເດັກຫຼິ້ນເທື່ອລະຄົນ ຫຼື ຫຼິ້ນເປັນກຸ່ມກໍ່ໄດ້ຕາມຄວາມເໝາະສົມ
- ກ່ອນຈະຫຼິ້ນຄູຕ້ອງສາທິດໃຫ້ເດັກເບິ່ງກ່ອນ ຄູສະເໜີຮູບເກມແຕ່ລະໃບໃຫ້ເດັກສັງເກດ ຈາກນັ້ນຈິ່ງປົນໃສ່ກັນແລ້ວຢາຍໃຫ້ເດັກແຕ່ລະຄົນໃຫ້ເທົ່າກັນ ເດັກຄົນໃດໄດ້ຮູບແມງກະເບື້ອໃຫ່ຍກ່ວາໝູ່ຕ້ອງອອກມາວາງກ່ອນໝູ່ ຫຼັງຈາກນັ້ນຈິ່ງໃຫ້ເດັກອອກມາລຽນຮູບພາບຕາມລຳດັບໃຫ່ຍນ້ອຍທີ່ຫຼຸດລື່ນກັນ.

ຕົວຢ່າງຮູບ ລຽງລຳດັບແຕ່ນ້ອຍ ຫາ ໃຫ່ຍ ແລະ ແຕ່ໃຫ່ຍ ຫາ ນ້ອຍ




ຮູບແຕ່ນ້ອຍ ຫາ ໃຫ່ຍ




ຮູບແຕ່ໃຫ່ຍ ຫາ ນ້ອຍ

- ລຽງລຳດັບແຕ່ຕ່ຳ ຫາ ສູງ ຫຼື ແຕ່ສູງ ຫາ ຕ່ຳ



- ລຽງລຳດັບແຕ່ສັ້ນ ຫາ ຍາວ ຫຼື ແຕ່ຍາວ ຫາ ສັ້ນ.



## 6. ວິທີຜະລິດເກມຈັດໝວດໝູ່

- **ວິທີຜະລິດ**

- ຕັດເຈ້ຍໃຫ້ໄດ້ຂະໜາດຕາມຄວາມຕ້ອງ

- ຕ້ອງໃຫ້ມີຂະໜາດໃຫຍ່ນ້ອຍເທົ່າກັບ 10 x 8 cm ຮູບຕາມໜ່ວຍການສອນໃສ່ແຜ່ນເກມຮູບລະ 2-3 ແຜ່ນຂຶ້ນໄປຈຳນວນນ້ອຍຫຼາຍແມ່ນຂຶ້ນກັບເກນອາຍຸຂອງເດັກ.

- **ວິທີຫຼິ້ນ (ວິທີນຳໃຊ້)**

- ຄູ່ວາງແຜ່ນເກມຮູບໃດໜຶ່ງລົງກັບພື້ນໄວ້ເປັນກຸ່ມເລືອກເອົາແຜນຮູບທີ່ມີຮູບໃນໝວດດຽວກັນມາລຽງຕໍ່ກັນເປັນກຸ່ມໃຫ້ເລືອກຕໍ່ໄປຈົນຄົບຈຳນວນຕ້ອງການ











## 7. ເກມຈຳແນກສີ

**ອຸປະກອນ** ເຈ້ຍແຂງ, ເຈ້ຍສີປະເພດຕ່າງໆ ນ້ຳສີ, ມີດຕັດ

ວິທີຜະລິດມີຢູ່ 2 ຮູບແບບ

- ຮູບເກມປະກອບເກມຈຳແນກສີມີ 3 ສີ ຄື: ສີເຫຼືອງ, ສີຟ້າ, ສີແດງ

ຮູບແບບທີ 1

- ພື້ນ ຫຼື ກະດານ ຂະໜາດຂ້າງ 18x20 ຊມ, 16x18 ຊມ ເປັນຮູບສີ່ຫຼ່ຽມມົນທົນ ຫຼື ອາດຈະສ້າງຕາມຄວາມເໝາະສົມທີ່ຕ້ອງການ.
- ຢູ່ທາງໜ້າຂອງພື້ນແຕ້ມ ຫຼື ຕັດຕິດຮູບວົງມົນ 40 ຮູບ, ລັດສະໝີຂອງຮູບວົງມົນ 1 ຊມ
- ບັນດາຮູບວົງມົນຢູ່ພື້ນທາດ້ວຍສີພື້ນຖານ ເຊັ່ນ: ສີແດງ, ສີເຫຼືອງ, ສີຟ້າ.
- ຕົວຢ່າງ



## 3. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 1

ວິທີການສອນຫຼິ້ນເກມຄູຕ້ອງສາທິດໃຫ້ເດັກເບິ່ງກ່ອນ ເພາະເດັກຈະຈື່ ແລະ ເຂົ້າໃຈວິທີຫຼິ້ນຂອງເກມແຕ່ລະປະເພດ, ເກມທີ່ເອົາມາຫຼິ້ນຕ້ອງເປັນເກມທີ່ງ່າຍ ແລະ ບໍ່ສັບສົນໂດຍອີງໃສ່ໜ່ວຍການສອນຕົວຢ່າງ: **ໜ່ວຍຕົວຂອງຂ້ອຍ** ເກມທີ່ໃຫ້ເດັກຫຼິ້ນມີຄື:

**1.** ເກມຕັດຕໍ່ຮູບພາບຕາມແບບອາດຈະຕັດເປັນ 4 ປ່ຽງ ຕັດເປັນເສັ້ນຊື່, ຮູບພາບທີ່ເອົາມາຕໍ່ນັ້ນຄື

- ຮູບພາບເດັກຍິງ ແລະ ເດັກຊາຍ, ຮູບໃບໜ້າ, ຫູ, ຕາ, ດັງ, ປາກ ແລະ ຮູບມື.
- ຮູບພາບເດັກຍິງ ແລະ ຊາຍຫຼິ້ນຮ່ວມກັນ.
- ຮູບເດັກນ້ອຍອະນາໄມມື ມີດຕັດເລັບ, ຜ້າເຊັດມື, ຕັດເລັບມື, ຮູບພາບເດັກນັ່ງ.
- ຮູບພາບເດັກນ້ອຍອະນາໄມຫູ, ຕາ, ດັງ ແລະ ຮູບພາບເດັກນ້ອຍຍິງ - ຊາຍຖູແຂ້ວ.
- ຮູບພາບເດັກນ້ອຍແຕ່ງຕົວ, ເດັກນ້ອຍກິນອາຫານ, ເດັກນ້ອຍມ້ຽນເຄື່ອງນອນ ແລະ ເດັກນ້ອຍມ້ຽນປຶ້ມ.



ເດັກແຕ່ງກາຍ ເດັກນ້ອຍກິນອາຫານ ເດັກນ້ອຍມ້ຽນເຄື່ອງ

**2.** ເກມຈັບຄູ່ຮູບພາບທີ່ຄືກັນໄດ້ແກ່

- ຮູບ ຫູ, ຕາ, ດັງ ແລະ ແຂ້ວ.



- ຮູບຜັກກາດ, ຊີ້ນໄກ່, ໄຂ່, ນົມ, ໝາກກ້ຽງ ແລະ ຈອກນ້ຳ.







- ຮູບພາບເດັກນ້ອຍສະຜົມ, ຫວີຜົມ ແລະ ມັດຜົມ.







- ຮູບພາບໂສ້ງ, ເສື້ອ, ສິ້ນ









## 3. ເກມລຽງລຳດັບ

- ຮູບພາບຄົນຕຸ້ຍ ຫາ ຄົນຈ່ອຍ ຫຼື ຄົນຈ່ອຍ ຫາ ຄົນຕຸ້ຍ



ຄົນຕຸ້ຍ ຄົນຈ່ອຍ



ຕາມລຳດັບຈ່ອຍ ຫາ ຕຸ້ຍ

**4. ເກມຈັບຄູ່ຮູບພາບທີ່ມີຄວາມສຳພັນກັນໄດ້ແກ່**

- ຮູບພາບ ຕີນ ກັບ ເກີບ, ຖົງມື ກັບ ມື, ໝວກ ກັບ ຫົວ…

**ຕົວຢ່າງ 1:** ຮູບພາບ ຕີນ ກັບ ເກີບ



ຕີນ




ເກີບ



ຕີນ



ຖົງຕີນ

**ຕົວຢ່າງ 2:** ຖົງມື ກັບ ມື




ຖົງມື



ມື

**ຕົວຢ່າງ 3:** ໝວກ ກັບ ຫົວ






## 4. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 2

ວິທີ ແລະ ຂັ້ນຕອນຂອງການສອນຫຼິ້ນເກມໃນຊັ້ນອະນຸບານກາງ ກໍ່ຄ້າຍຄືກັນກັບອະນຸບານນ້ອຍ ເກມທີ່ເອົາມາຫຼິ້ນຕ້ອງເປັນເກມທີ່ງ່າຍ ແລະ ເໝາະສົມກັບໜ່ວຍການສອນເດັກເຊັ່ນ: ຕົວຢ່າງ: **ໜ່ວຍຕົວຂອງຂ້ອຍ** ເກມທີ່ໃຫ້ເດັກຫຼິ້ນມີຄື:

1. ເກມການສຶກສາລາຍລະອຽດຂອງຮູບພາບ ອາຫານ ແລະ ເຄື່ອງດື່ມ.
2. ເກມຕັດຕໍ່ຮູບພາບ ຄູອາດຈະຕັດເປັນ 6 ປ່ຽງ ຕັດເປັນເສັ້ນຊື່ ຫຼື ໂຄ້ງ, ຮູບພາບເກມທີ່ເອົາມາຫຼິ້ນຈະເປັນ
   - ຮູບພາບເດັກຍິງ-ຊາຍ



   - ຮູບພາບເດັກນ້ອຍຈັບມືແມ່ຫິ້ວກະຕ່າຍ່າງໄປຕະຫຼາດ.
   - ຮູບພາບເດັກນ້ອຍຖູແຂ້ວ



   - ຮູບພາບເດັກນ້ອຍນອນໃນມຸ້ງ




- ຮູບພາບເດັກນ້ອຍອາບນ້ຳ




3. **ເກມຈັບຄູ່ຮູບພາບທີ່ຄືກັນ ໄດ້ແກ່**
   - ຮູບວົງມົນນ້ອຍໃຫ່ຍ (ສຳລັບຄູ ແລະ ນັກຮຽນ), ຮູບພາບໜ້າທີ່ຂອງຫູ, ຕາ ແລະ ປາກ, ເດັກນ້ອຍຟັງວິທະຍຸເບິ່ງໂທລະພາບ, ຮູບກິນອາຫານ, ຮູບໜ່ອຍມົນສີເຫຼືອງ ແລະ ສີແດງ(ສຳລັບຄູ ແລະ ນັກຮຽນ).
   - ຮູບພາບການສະຜົມ, ຫວີຜົມລ້າງໜ້າ, ຮູບໂສ້ງ, ເສື້ອຊຸດສີແດງ ແລະ ຊຸດສີຟ້າ.
   - ຮູບເຂົ້າ, ຜັກ, ນ້ຳດື່ມ, ໝາກກ້ວຍ, ປາ, ນົມ
   - ຮູບໜ່ອຍມົນ1-3, ຮູບການປ້ອງກັນພະຍາດໃນຍາມໜາວ.
   - ຮູບເດັກນ້ອຍທາເຂົ້າແປ້ງ, ເປຍຜົມ, ນຸ່ງສິ້ນ. ຮູບເກີບ, ໂສ້ງຂາສັ້ນ, ໂສ້ງຂາຍາວ, ໝວກ, ຖົງພາຍ ແລະ ເສື້ອ.
4. ເກມຈັດໝວດໝູ່
   - ຮູບວົງມົນ ແລະ ຮູບໜ່ອຍມົນ
   - ຮູບ ການປະຕິບັດຕົນໃນການກິນອາຫານ ແລະ ດື່ມນ້ຳ.
5. ເກມລຽງລຳດັບ
   - ຮູບພາບຂັ້ນຕອນການລ້າງມື: ເອົາຝາມືຖູຝາມື, ຝາມືຖູຫຼັງມື, ນິ້ວມືຖູຫວ່າງນິ້ວມື, ປາຍນິ້ວມືຖູຂວາງຝາມື ແລະ ຮອບຄໍ່ມື.
6. ເກມຈັບຄູ່ຕົວເລກກັບຕົວເລກແຕ່ 1- 3.

| 1 | 1 |
|---|---|

| | |
|---|---|
| 2 | 2 |
| 3 | 3 |

## 5. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 3

ການຫຼິ້ນເກມການສຶກສາສໍາລັບເດັກອະນຸບານ 3 ແມ່ນຕໍ່ເນື່ອງຈາກອະນຸບານກາງ ແລະ ຈະເພີ່ມຄວາມຍາກຂຶ້ນ, ການຈັດກິດຈະກໍາການຫຼິ້ນເກມຈະຊ່ວຍພັດທະນາດ້ານຕ່າງໆຂອງເດັກ ແຕ່ເນັ້ນທາງດ້ານສະຕິປັນຍາ, ມີກະຕິກາງ່າຍໆ ເໝາະສໍາລັບເດັກ ແລະ ມີຄວາມສະໜຸກສະໜານຈາກການຫຼິ້ນ, ເກມທີ່ເໝາະສົມສໍາລັບເດັກ 5 - 6 ປີ

ຕົວຢ່າງ: **ໜ່ວຍຕົວຂອງຂ້ອຍ** ເກມທີ່ໃຫ້ເດັກຫຼິ້ນມີຄື:

1. **ເກມຕໍ່ຮູບພາບ** ທີ່ໃຊ້ກັບອະນຸບານໃຫ່ຍເຊິ່ງຕັດເປັນ 8-10 ປ່ຽງ ຕັດຊື່, ອາຍຸຍິ່ງສູງເທົ່າໃດການຕັດກໍ່ໃຫ້ເພີ່ມຫຼາຍປ່ຽງຂຶ້ນເທົ່ານັ້ນ, ຮູບທີ່ເອົາມາຕໍ່ຄື
   - ຮູບເດັກນ້ອຍຍິງ-ຊາຍຫຼິ້ນມ່ວນຊື່ນ
   - ຮູບເດັກນ້ອຍເຕະບານ




2. ເກມລຽນລໍາດັບ

- ຮູບພາບເດັກນ້ອຍຍິງ-ຊາຍສູງ-ຕ່ຳ, ຮູບພາບເດັກນ້ອຍສະຜົມ



ເດັກນ້ອຍຍິງ-ຊາຍສູງ-ຕ່ຳ



ເດັກນ້ອຍສະຜົມ

- ຮູບວົງມົນຕາມແບບ, ຮູບສາມແຈຕາມແບບ, ຮູບສີ່ແຈຕາມແບບ



- ຮູບເດັກນ້ອຍຖູແຂ້ວ, ຮູບການບົວລະບັດຮັກສາຕີນ

3. ເກມຈັບຄູ່ຮູບພາບທີ່ຄືກັນ
   - ຮູບພາບໃບໜ້າ, ຮູບພາບເຄື່ອງໃຊ້ໃນການລ້າງໜ້າ ແລະ ເຊັດໜ້າ.
   - ຮູບຄຸນປະໂຫຍດຂອງຫູ
   - ຮູບອາຫານຕາມປະເພດ, ອາຫານປະເພດໝາກໄມ້, ຜັກ ແລະ ຮູບພາບການປະຕິບັດກິດຈະກຳຂອງເດັກນ້ອຍ.



4. ເກມຈັດໝວດໝູ່
    - ຮູບວົງມົນ, ຮູບສາມແຈ, ສີ່ແຈ, ຈະຕຸລັດຕາມຂະໜາດ.



6. ຂຽນບົດລາຍງານກ່ຽວກັບການຮຽນໃນລາຍວິຊາ

## ໃຈຄວາມ

ໃນບົດນີ້ໃຫ້ນັກຮຽນຮຽນຮູ້ເຖິງຄວາມໝາຍຄວາມສຳຄັນຂອງເກມການສຶກສາ ແລະ ຜະລິດເກມແບບຕ່າງໆ ຕາມໜ່ວຍການສອນແຕ່ລະຂັ້ນອະນຸບານ. ການຈັດໃຫ້ເດັກໄດ້ຫຼິ້ນເກມການສຶກສາແມ່ນຊ່ວຍໃຫ້ເດັກໄດ້ທວນຄືນບົດຮຽນຕ່າງໆທີ່ຄູໄດ້ສອນຜ່ານມາຕາມໜ່ວຍການສອນ, ພາຍຫຼັງທີ່ເດັກໄດ້ຫຼິ້ນເກມການສຶກສາແລ້ວເດັກຍັງໄດ້ເຂົ້າຫຼິ້ນຕາມມູມຕ່າງໆ ທີ່ຄູຈັດໄວ້ໃນຫ້ອງຮຽນ ເດັກຈະໄດ້ຮຽນຮູ້ກ່ຽວກັບການຫຼິ້ນຮ່ວມກັນ ແລະ ຮູ້ຈັກເກັບເຄື່ອງຫຼິ້ນມ້ຽນໄວ້ບ່ອນເກົ່າພາຍຫຼັງຫຼິ້ນແລ້ວ ເຊິ່ງຈະຊ່ວຍສ້າງໃຫ້ເດັກເປັນຄົນມີລະບຽບວິໄນ  ພ້ອມດຽວກັນນັ້ນກໍ່ຍັງຊ່ວຍໃຫ້ຫ້ອງຮຽນບໍ່ວິນແຊວ ແລະ ມີຄວາມຮຽບຮ້ອຍ.

ຜ່ານການຫຼິ້ນເກມເດັກແຕ່ລະຄົນໄດ້ມີຄວາມຄິດສ້າງສັນ ແລະ ຈື່ຈຳບົດຮຽນຕ່າງໆ ທີ່ໄດ້ຮຽນມາ, ການຫຼິ້ນເກມຄວນຈັດລຳດັບເກມໃຫ້ເໝາະສົມຕາມຄວາມຮັບຮູ້ຂອງເດັກແຕ່ລະສົ່ງອາຍຸຈາກງ່າຍຫາຍາກ ຂໍ້ສຳຄັນໃນເວລາຫຼິ້ນເກມຄູບໍ່ຄວນເຄັ່ງຄັດໃນການຫຼິ້ນເກີນໄປຈົນເຮັດໃຫ້ເດັກຂາດຄວາມສົນໃຈ ແລະ ຂາດຄວາມມ່ວນຊື່ນໃນການຫຼິ້ນ.

### ວຽກມອບໝາຍ

- ໃຫ້ນັກຮຽນຜະລິດເກມໃນຫ້ອງຮຽນຕາມກິດຈະກຳທີ່ຖືກມອບໝາຍໃຫ້.
- ໃຫ້ນັກຮຽນຜະລິດເກມຢ່າງມີຫົວຄິດປະດິດສ້າງ ນອກຈາກເກມທີ່ຮຽນມາ ແລະ ແນະນຳໃຫ້ນັກຮຽນອ່ານປຶ້ມແບບຮຽນເພີ່ມ.

### ຄຳຖາມ

1. ເກມການສຶກສາມີຄວາມໝາຍຄວາມສຳຄັນແນວໃດ?
2. ເກມການສຶກສາມີແບບໃດແດ່?
3. ເກມການສຶກສາຊະນິດໃດແດ່ທີ່ເໝາະສົມກັບແຕ່ລະຂັ້ນອະນຸບານ 1, 2, 3 ?

# ເຝິກປະຕິບັດຕົວຈິງ

## ແຕ່ງບົດສອນແຕ່ລະສົ່ງອາຍຸ ແລະ ສອນທົດລອງ

**ເວລາ 9 ຊົ່ວໂມງ**

**ຈຸດປະສົງ** ໃຫ້ນັກຮຽນສາມາດ:

- ແຕ່ງບົດສອນແຕ່ລະສົ່ງອາຍຸ ແລະ ສອນທົດລອງໄດ້.

## 1. ການແຕ່ງບົດສອນ ຂັ້ນອະນຸບານ 1

# ບົດສອນ

ໜ່ວຍ: ຕົວຂອງຂ້ອຍ ອາທິດທີ 1 ມື້ທີ 1
ກິດຈະກຳສ້າງສັນ
ຫົວຂໍ້: ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ
ຊັ້ນອະນຸບານ 1 ເວລາ 15-20 ນາທີ
ຊື່ຜູ້ສອນ ..............................ວັນ ເດືອນ ປີ ......................

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ວັດແລະປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>1. ບອກຊື່ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ<br>2. ສຳຜັດອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ | 1. ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນ<br>- ສໍດຳ ໃຊ້ໄວ້ແຕ້ມ, ຂີດຂຽນເສັ້ນ, ຂີດຕາມຮອຍຈ້ຳຮູບພາບ ຂີດຕາມຮອຍຈ້ຳຕົວພະຍັນຊະນະ ແລະ ຂີດຕົວເລກ.<br>- ສໍສີ ໃຊ້ສຳລັບທາສີຮູບ ແລະ ພິມຮູບພາບຕ່າງໆ<br>- ຝ້າຍເສັ້ນໃຫຍ່ ຫຼື ເຊືອກນິລົງ, ເຊືອກຟາງ ໃຊ້ສຳລັບຮ້ອຍທໍ່ດູດຮ້ອຍໄມ້ປ່ອງ, ໝາກປັດ ແລະ ດອກໄມ້ | **1. ຂັ້ນນາເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າລະບຽບ ຢືນເປັນຮູບວົງມົນ ພາເດັກສັ່ນຂໍ່ມື 3 ເທື່ອ ແລະ ດີດນິ້ວມື 3 ເທື່ອ ແລ້ວໃຫ້ເດັກນັ່ງລົງ<br>**2. ຂັ້ນດາເນີນການສອນ**<br>- ຄູສະເໜີບົດຮຽນໃຫ້ເດັກຮູ້ກ່ອນ:<br>1. ຄູເອົາສໍດຳ, ສໍສີ, ຝ້າຍເສັ້ນໃຫຍ່ ເຊືອກນິລົງ,ເຊືອກຟາງ, ທໍ່ດູດ ຫຼື ໄມ້ປ່ອງ ໝາກປັດ, ດອກໄມ້ ແລະ ດິນປັ້ນໃຫ້ເດັກເບິ່ງກ່ອນ.<br>2. ຄູໃຫ້ເດັກສຳຜັດປ່ຽນກັນອອກມາຈັບອຸປະກອນແຕ່ລະຢ່າງທີ່ຄູວາງໄວ້ຢູ່ຕໍ່ໜ້າຄູ.<br>3. ຄູຖາມເດັກວ່າ ອຸປະກອນແຕ່ລະຢ່າງທີ່ພວກຫຼານອອກມາຈັບເອົານັ້ນແມ່ນຫຍັງ ແລະ ໃຊ້ໄວ້ເຮັດຫຍັງ?<br>4. ໃຫ້ເດັກຕອບເທື່ອລະຄົນ. ຄູຍ້ອງຍໍຊົມເຊີຍ<br>5. ຄູແນະນຳອຸປະກອນແຕ່ລະຢ່າງເຊັ່ນ:<br>- ສໍດຳ ໃຊ້ໄວ້ແຕ້ມ, ຂີດຂຽນເສັ້ນ, ຂີດຕາມຮອຍຈ້ຳຮູບພາບ, ຂີດຕາມຮອຍຈ້ຳຕົວພະຍັນຊະນະ ແລະ ຂີດຕົວເລກ.<br>- ສໍສີ ໃຊ້ສຳລັບທາສີຮູບ ແລະ ພິມຮູບພາບຕ່າງໆ<br>- ຝ້າຍເສັ້ນໃຫຍ່ ຫຼື ເຊືອກນິລົງ, ເຊືອກ | 1. ສໍດຳ, ສໍສີ<br>2. ຝ້າຍເສັ້ນໃຫຍ່ ເຊືອກ,ນິລົງເຊືອກຟາງ.<br>3. ທໍ່ດູດ, ໄມ້, ປ່ອງ ໝາກປັດ, ດອກໄມ້ ແລະ ດິນປັ້ນ | ສັງເກດ:<br>1. ການບອກຊື່ອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນຂອງເດັກ.<br>2. ການສຳຜັດອຸປະກອນທີ່ໃຊ້ໃນກິດຈະກຳສິລະປະສ້າງສັນຂອງເດັກ. |

| | | | | |
|---|---|---|---|---|
| | - ດິນປັ້ນໃຊ້ສຳລັບໃຫ້ເດັກປັ້ນເປັນຮູບຕ່າງໆ ຕາມຈິນຕະນາການ ແລະ ຕາມແບບທີ່ຄູກຳນົດໃຫ້. | ຟາງ ໃຊ້ສຳລັບຮ້ອຍທໍ່ດູດຮ້ອຍໄມ້ປ່ອງ, ໝາກປັດ ແລະ ດອກໄມ້<br>- ດິນປັ້ນໃຊ້ສຳລັບໃຫ້ເດັກປັ້ນເປັນຮູບຕ່າງໆ ຕາມ ຈິນຕະນາການ ແລະ ຕາມແບບທີ່ຄູກຳນົດໃຫ້.<br>**3. ຂັ້ນສະຫຼຸບບົດຮຽນ**<br>1. ຄູຖາມເດັກຄືນ<br>- ອຸປະກອນທີ່ຫຼານໄດ້ເຫັນມີຫຍັງແດ່? ເດັກຕອບ<br>- ອຸປະກອນເລົ່ານັ້ນໃຊ້ໄວ້ເຮັດຫຍັງ? ເດັກຕອບ<br>- ຫຼານໄດ້ເຮັດຫັຍງກັບອຸປະກອນ? ເດັກຕອບ<br>+ ສຶກສາອົບຮົມເດັກກ່ຽວກັບການແບ່ງປັນ, ການເກັບມ້ຽນອຸປະກອນໃຫ້ຖືກບ່ອນທີ່ກຳນົດ ແລະ ອະນາໄມພື້ນຫ້ອງຊ່ວຍຄູ. | | |

ທີ່………………… ວັນທີ……….ເດືອນ………ປີ………

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

………………………… …………………………

## 2. ການແຕ່ງບົດສອນຂັ້ນອະນຸບານ 2

### ບົດສອນ

ໜ່ວຍ: ບ້ານຂອງຂ້ອຍ ອາທິດທີ 1 ມື້ທີ 1

ກິດຈະກຳສ້າງສັນ

ຫົວຂໍ້: ການການຂີດຂຽນພະຍັນຊະນະຕົວ ຫ ຕາມຮອຍຈໍ້າ

ຊັ້ນອະນຸບານ 2 ເວລາ 20-25 ນາທີ

ຊື່ຜູ້ສອນ ……………………………ວັນ ເດືອນ ປີ ……………………

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ວັດແລະປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>1.ບອກພະຍັນຊະນະຕົວ ບ.<br>2.ຂຽນພະຍັນຊະນະຕົວບຕາມຮອຍຈໍ້າໃຫ້ຖືກຕ້ອງ.<br>3. ເຝິກຄວາມສາມັກຄີໃນການປະຕິບັດກິດຈະກຳ. | ການຂຽນພະຍັນຊະນະຕົວ ບ ຕາມຮອຍຈໍ້າ. | **1. ຂັ້ນນາເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າລະບຽບ<br>- ຄູພາເດັກສ້າງບັນຍາກາດດ້ວຍການຮ້ອງເພງປະອບທ່າທາງ ເພງ ບ້ານຂອງເຮົາ<br>**2. ຂັ້ນດາເນີນການສອນ**<br>1. ຄູໃຫ້ເດັກສັງເກດແຜ່ນພະຍັນຊະນະຕົວບ ແລ້ວຖາມເດັກວ່າ: ນີ້ແມ່ນຮູບຫຍັງ? ເດັກຕອບພ້ອມກັນໝົດຫ້ອງ.<br>- ນາຍຄູພາອອກສຽງຕົວ ບ 1-2 ຄັ້ງ.<br>- ເດັກອອກສຽງພ້ອມກັນໝົດຫ້ອງ<br>2. ຄູສະເໜີຫົວຂໍ້ກິດຈະກຳ: ການຂຽນຕົວ ກ ຕາມຮອຍຈໍ້າ<br>3. ຄູແນະນຳການຂຽນໃສ່ເຈ້ຍແບບຂຽນ<br>- ວາງເຈ້ຍໄວ້ໃຫ້ຢູ່ຕໍ່ໜ້າ<br>- ໃຊ້ມືເບື້ອງຂວາຈັບສໍແລ້ວຄ່ອຍໆຂີດຕາມຮອຍຈໍ້າຂອງພະຍັນຊະນະຕົວ ບ.<br>4. ນາຍຄູສາທິດການຂຽນຕົວ ບ ຕາມທິດທາງການຂຽນໂດຍເລີ່ມຕົ້ນແຕ່ຫົວຕົວ ບ ໄປເຖິງຫາງ.<br>- ໃຫ້ເດັກໃຊ້ນິ້ວມືຂຽນຕົວ ຫ (ກາງຫາວ) ພ້ອມກັນໝົດທຸກຄົນ<br>- ໃຫ້ເດັກອາສາສະໝັກອອກມາຂຽນຕົວ ບ ໃຫ້ໝູ່ເບິ່ງ 1 ຄົນ ຫຼື ໃຫ້ ສອງຄົນແຂ່ງຂັນ.<br>- ຄູ ແລະ ໝູ່ເພື່ອນຕິດຕາມສັງເກດເບິ່ງຄວາມຖືກຕ້ອງທິດທາງ ແລະ ແບບການຂຽນ ຖ້າບໍ່ຖືກໃຫ້ຊ່ວຍກັນຂຽນໃຫ້ຖືກ.<br>5. ຄູແບ່ງເດັກອອກເປັນກຸ່ມຕາມຄວາມ | 1. ສໍດໍາ, ສໍສີ<br>2. ແບບຂຽນພະຍັນຊະນະຕົວ ບຕາມຮອຍຈໍ້າ<br>3. ປື້ມບົດເຝິກຫັດພາສາລາວເຫຼັ້ມທີ1 ຫຼື ເຈ້ຍພະຍັນຊະນະຕົວ ບ ຕາມຮອຍຈໍ້າ.<br>4. ບົດເພງບ້ານຂອງເຮົາ | ສັງເກດ:<br>1. ການບອກພະຍັນຊະນະຕົວ ຫ<br>2. ຄວາມສະອາດຈົບງາມການຂຽນພະຍັນຊະນະຕົວ ບ ຕາມຮອຍຈໍ້າ<br>3. ຄວາມສາມັກຄີໃນການປະຕິບັດກິດຈະກຳ |

| | | | | |
|---|---|---|---|---|
| | | ເໝາະສົມ ແລະ ຍາຍເຈ້ຍແບບ, ສຳດຳໃຫ້ເດັກແຕ່ລະຄົນ.<br>- ໃຫ້ເດັກຂຽນຕົວ ບ ຕາມຮອຍຈ້ຳດ້ວຍຕົນເອງນັ້ນແມ່ນຫຍັງ ແລະ<br>ໃຊ້ໄວ້ເຮັດຫຍັງ?<br>- ຄູຕິດຕາມຊ່ວຍເຫຼືອເດັກແຕ່ລະກຸ່ມທີ່ຂຽນບໍ່ຖືກຕ້ອງດ້ວຍການຈັບມືເດັກ. | | |
| | | **3. ຂັ້ນສະຫຼຸບບົດຮຽນ**<br>**-** ຄູເກັບຜົນງານການຂຽນຕົວ ບ ຕາມຮອຍຈ້ຳຂອງເດັກມາກວດໃຫ້ຄະແນນໄປພ້ອມກັບເດັກ<br>- ຄູຍ້ອງຍໍຊົມເຊີຍເດັກ ແລະ ແນະນຳເດັກຜູ້ທີ່ຂຽນບໍ່ທັນໄດ້ດີ.<br>1. ຄູໃຫ້ເດັກອອກມາຂຽນຕົວ ບ ຄົນ 1-2 ຄົນ<br>- ຍ້ອງຍໍຊົມເຊີຍເດັກ<br>+ ສຶກສາອົບຮົມເດັກກ່ຽວກັບການແບ່ງປັນ, ການເກັບມ້ຽນອຸປະກອນໃຫ້ຖືກບ່ອນທີ່ກຳນົດ ແລະ ອະນາໄມພື້ນຫ້ອງຊ່ວຍຄູ.<br>- ໃຫ້ເດັກອະນຸຍາດພັກຜ່ອນ. | | |

ທີ່………………… ວັນທີ……….ເດືອນ………ປີ……….

ຄຳເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

………………………… …………………………

## 3. ການແຕ່ງບົດສອນ ຂັ້ນອະນຸບານ 3

## ບົດສອນ

ໜ່ວຍ: ຕົວຂອງຂ້ອຍ ອາທິດທີ 1 ມື້ທີ 1

ກິດຈະກຳສ້າງສັນ

ຫົວຂໍ້: ການແຕ້ມ ແລະ ທາສີຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ

ຊັ້ນອະນຸບານ 3 ເວລາ 25-30 ນາທີ

ຊື່ຜູ້ສອນ ................................ວັນ ເດືອນ ປີ ........................

| ຈຸດປະສົງ | ເນື້ອໃນຕົ້ນຕໍ | ກິດຈະກຳການຮຽນ-ການສອນ | ສື່ການສອນ | ວັດ ແລະ ປະເມີນຜົນ |
|---|---|---|---|---|
| ເພື່ອໃຫ້ເດັກສາມາດ:<br>1. ບອກຂັ້ນຕອນການແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ-ຊາຍໄດ້ຖືກຕ້ອງ.<br>2.ແຕ້ມຕາມຮອຍຈ້ຳ ແລະ ທາສີຮູບພາບເດັກນ້ອຍຍິງ-ຊຊາຍໄດ້ໄດ້ສະອາດຈົບງາມ.<br>3.ແບ່ງປັນສໍສີໃຫ້ໝູ່ເພື່ອນ. | - ການແຕ້ມ ແລະ ທາສີຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ | **1. ຂັ້ນນາເຂົ້າສູ່ບົດຮຽນ**<br>- ຈັດເດັກເຂົ້າລະບຽບ ນັ່ງເປັນຮູບເຄິ່ງວົງມົນ<br>- ໃຫ້ເດັກນ້ອຍບໍລິຫານມືໂດຍການດີດນິ້ວມື, ກຳມື, ແບມື ແລະ ສັ່ນຂໍ່ມື 1-2 ເທື່ອ.<br>**2. ຂັ້ນດາເນີນການສອນ**<br>- ຄູສະເໜີບົດຮຽນໃຫ້ເດັກຮູ້ກ່ອນ:ມື້ນີ້ສາວຄູຈະພາຮຽນແຕ້ມ ແລະ ທາສີຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ.<br>- ໃຫ້ເດັກສັງເກດຮູບພາບ ແລະ ສົນທະນາກ່ຽວກັບຮູບພາບເດັກນ້ອຍຍິງ ແລະ ເດັກນ້ອຍຊາຍ<br>- ນາຍຄູແນະນາ,ສາທິດວິທີ ແລະ ຂັ້ນຕອນການແຕ້ມ ແລະ ທາສີຮູບພາບາດເດັກນ້ອຍຍິງ ແລະ ເດັກນ້ອຍຊາຍໃຫ້ເດັກເບິ່ງກ່ອນ 1-2 ເທື່ອ.<br>- ຄູຢາຍອຸປະກອນໃຫ້ເດັກປະຕິບັດຕົວຈິງ,ຄູຕິດຕາມ ແລະ ຊ່ອຍເຫຼືອເດັກທີ່ປະຕິບັດບໍ່ໄດ້.<br>**3. ຂັ້ນສະຫຼຸບບົດຮຽນ**<br>- ໃຫ້ເດັກນຳສະເໜີຜົນງານຂອງຕົນເອງໃຫ້ໝູ່ເບິ່ງ ແລະ ຖາມເດັກຄືນກ່ຽວກັບຂັ້ນຕອນການແຕ້ມ ແລະ ທາສີຮູບພາບ: | 1. ສໍດຳຫຼືສໍສີໄມ້ຢາງລົບ, ເຈ້ຍຂາວ<br>2. ເຈ້ຍຮູບພາເດັກນ້ອຍຍິງ, ຊາຍທີ່ມີຮອຍຈ້ຳ.<br>3. ເຈ້ຍຮູບພາເດັກນ້ອຍຍິງຊາຍທີ່ທາສີແລ້ວ. | ສັງເກດ ແລະ ທົດສອບຄວາມເຂົ້າໃຈ<br>1. ຄວາມຖືກຕ້ອງໃນການບອກຂັ້ນຕອນການແຕ້ມຕາມຮອຍຈ້ຳແລະທາສີຮູບພາບເດັກນ້ອຍຍິງ-ຊາຍ.<br>2. ຄວາມສະອາດຈົບງາມແຕ້ມຕາມຮອຍຈ້ຳແລະທາສີຮູບພາບເດັກນ້ອຍຍິງ-ຊາຍ |

| | | | | |
|---|---|---|---|---|
| | | ຜ່ານມາພວກຫຼານໄດ້ແຕ້ມ ແລະ ທາສີຮູບຫຍັງ? ເດັກຕອບ 3-4ຄົນ.<br>+ ສຶກສາອົບຮົມເດັກ: ພວກຫຼານຕ້ອງຮູ້ຈັກແບ່ງປັນສໍສີໃຫ້ໝູ່,ຮັກສາຮູບແຕ້ມເກັບໄວ້ໃຫ້ດີບໍ່ໃຫ້ຈີກຫຼິ້ນ.<br>- ໃຫ້ເດັກອະນຸຍາດພັກຜ່ອນ. | | 3. ການແບ່ງປັນສໍສີໃຫ້ໝູ່ເພື່ອນ. |

ທີ່………………… ວັນທີ……….ເດືອນ………ປີ……….

ຄໍາເຫັນ ແລະ ລາຍເຊັນວິຊາການໂຮງຮຽນ ລາຍເຊັນຜູ້ແຕ່ງບົດສອນ

…………………………… …………………………

**ກິດຈະກໍາ**

- ໃຫ້ນັກຮຽນຄູແຕ່ງບົດສອນຂັ້ນອະນຸບານ 1, 2 ແລະ ອະນຸບານ 3 ແລ້ວສອນທົດລອງກັນເອງ
- ໃຫ້ນັກຮຽນຄູລົງເຝິກສອນຢູ່ໂຮງຮຽນອະນຸບານສາທິດຕົວຈິງກັບເດັກ.
- ໃນເມື່ອສອນແລ້ວຖອດຖອນແລກປ່ຽນບົດຮຽນນໍາກັນ.

❖ **ສະຫຼຸບ ແລະ ຖອດຖອນບົດຮຽນ**

ການສອນແມ່ນຜູ້ທີ່ມີຄວາມຮູ້ຄວາມສາມາດທີ່ມີ ໂດຍຖ່າຍໂອນໃຫ້ຜູ້ອື່ນເວົ້າລວມ ເວົ້າສະເພາະແມ່ນຖ່າຍໂອນໃຫ້ນັກຮຽນຄູໄປປະຕິບັດກັບເດັກຕົວຈິງຢູ່ໂຮງຮຽນລ້ຽງເດັກ. ໃນເມື່ອສ້າງແຜນການສອນຢ່າງຄົບຖ້ວນແລ້ວ (ມີຄວາມພ້ອມ). ກໍ່ສາມາດສອນໄດ້ເລີຍ, ຄັ້ງທີ 1 ແມ່ນສອນກັນເອງໝູ່ດ້ວຍກັນ, ຈາກນັ້ນກໍ່ຖອດຖອນບົດຮຽນນໍາກັນວ່າມີຂໍ້ຄົງຄ້າງບົກຜ່ອງບ່ອນໃດ? ກໍ່ສາມາດຕໍານິ ຫຼື ປະກອບຄໍາເຫັນເຊິ່ງກັນ ແລະ ກັນ. ຄັ້ງທີ 2 ແມ່ນໃຫ້ນັກຮຽນຄູລົງສອນຢູ່ໂຮງຮຽນລ້ຽງເດັກເພື່ອໃຫ້ສໍາພັດກັບເດັກຕົວຈິງເລີຍ. ຫຼັງຈາກປະຕິບັດການສອນແລ້ວສາມາດຖອດຖອນບົດຮຽນເຊິ່ງກັນ ແລະ ກັນວ່າຈຸດບົກຜ່ອງຂັ້ນຕອນໃດເພື່ອຈະປັບປຸງແກ້ໄຂໃນຄັ້ງຕໍ່ໄປ.

## ໃຈຄວາມ

ການເຝິກປະຕິບັດສອນຕົວຈິງນີ້ ເພື່ອໃຫ້ນັກຮຽນຄູໄດ້ລົງໃກ້ຊິດຕິດແທດກັບເດັກຢູ່ໃນໂຮງຮຽນລ້ຽງເດັກ-ອະນຸບານ. ໃນການແຕ່ງບົດສອນເຮົາຕ້ອງເຂົ້າໃຈກ່ຽວກັບໂຄງຮ່າງ, ບາດກ້າວຂັ້ນຕອນຂອງການແຕ່ງບົດສອນ ແລະ ອີກຢ່າງໜຶ່ງຕ້ອງອີງໃສ່ແຜນຈັດປະສົບການຂອງ 8 ໜ່ວຍການສອນ, ເພື່ອນໍາໄປແຕ່ງບົດສອນ ແລະ ປະຕິບັດການສອນຕົວຈິງກັບເດັກ.

## ວຽກມອບໝາຍ

ຄູແບ່ງນັກຮຽນອອກເປັນ 3 ກຸ່ມ ໃຫ້ແຕ່ລະກຸ່ມແບ່ງໜ້າທີ່ກັນ.

- ກຸ່ມທີ 1 ເຝິກການແຕ່ງບົດສອນ ໃນກິດຈະກໍາສ້າງສັນສໍາລັບອະນຸບານ 1 ?

- ກຸ່ມທີ 2 ເຝິກການແຕ່ງບົດສອນ ໃນກິດຈະກຳສ້າງສັນສຳລັບອະນຸບານ 2 ?
- ກຸ່ມທີ 3 ເຝິກການແຕ່ງບົດສອນ ໃນກິດຈະກຳສ້າງສັນສຳລັບອະນຸບານ 3 ?

**ວຽກບ້ານ**

1. ໃຫ້ນັກຮຽນແຕ່ລະຄົນເຝິກປະຕິບັດສອນຢູ່ໃນຫ້ອງຮຽນ.
2. ແນະນຳນັກຮຽນອ່ານປຶ້ມແຜນຈັດປະສົບການຂອງ 8 ໜ່ວຍການສອນຕາມແຕ່ລະສົກອາຍຸ?

# ເອກະສານອ້າງອີງ


ທ່ານ ກອງສີ ຈັນທະບູລີ (2009) *ວິທີສອນສິລະປະແຕ້ມ* ສາຍສ້າງຄູອະນຸບານ ລະບົບ 2 ປີ ປີທີ 2 ກົມສ້າງຄູກະຊວງສຶກສາທິການ ແລະ ກິລາ.

ທ່ານ ລັດສະໝີ ນາມເມືອງ (2009)*ວິທີສອນສິລະປະຫັດຖະກຳ* ສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ກົມສ້າງຄູກະຊວງສຶກສາທິການ ແລະ ກິລາ.

# ໂຄງຮ່າງລາຍວິຊາ

## ຫຼັກສູດພັກສັ້ນປີຮຽນ ອະນຸປະລິນຍາ ຕໍ່ເນື່ອງ 4 ພາກຮຽນ
## ຊື່ວິຊາ: ວິທີສອນສິລະປະຫັດຖະກຳ-ແຕ້ມສຳລັບເດັກກ່ອນໄວຮຽນ
## ລະຫັດລາຍວິຊາ: 0101126

| | |
|---|---|
| ພາກຮຽນ ແລະ ປີຮຽນ<br>Semester and Year | ລະບົບ 4 ພາກຮຽນ, ຮຽນປີທີ 3 |
| ຈຳນວນຊົ່ວໂມງ<br>Timing | 64ຊົ່ວໂມງ |
| ຈຳນວນໜ່ວຍກິດ<br>Credits | 2(0-4-2) |
| ອະທິບາຍຄ່າໜ່ວຍກິດ<br>Credit Explanation | ວິຊານີ້ມີ 2 ໜ່ວຍກິດ, ຮຽນ 4 ຊົ່ວໂມງຕໍ່ອາທິດ, ໃນນັ້ນ 40 ຊົ່ວໂມງແມ່ນພາກປະຕິບັດຕົວຈິງ ແລະ 24 ຊົ່ວໂມງແມ່ນວຽກມອບໝາຍ. |
| ຈຸດປະສົງ<br>Objectives | **ເພື່ອໃຫ້ນັກສຶກສາຄູສາມາດ:**<br>1. ອະທິບາຍຄວາມຮູ້ພື້ນຖານກ່ຽວກັບການສອນແຕ້ມ ແລະ ທິດສະດີກ່ຽວກັບສີໄດ້<br>2. ອະທິບາຍຄວາມໝາຍຄວາມສຳຄັນຂອງສິລະປະຫັດຖະກຳ-ແຕ້ມໄດ້<br>3. ຈຳແນກສາຍພົວພັນລະຫວ່າງວິຊາຫັດຖະກຳ-ແຕ້ມກັບວິຊາອື່ນໆ ແລະກິດຈະກຳສຳລັບເດັກໄດ້.<br>4. ວິເຄາະກ່ຽວກັບການປັ້ນ, ການຮ້ອຍ, ການແຕ້ມ, ຜະລິດເກມຊະນິດຕ່າງໆ, ການຈີກ, ຕັດ-ຕິດ, ພັບ, ໄດ້.<br>5. ວິເຄາະວັນນະສີຮ້ອນ, ວັນນະສີເຢັນໄດ້ |
| ເນື້ອໃນຫຍໍ້<br>Course Description | ວິຊານີ້ນັກຮຽນຄູໄດ້ຮຽນຮູ້ຄວາມຮູ້ເບື້ອງຕົ້ນກ່ຽວກັບການສອນແຕ້ມ, ທິດສະດີສີ, ແຕ້ມຮູບວັດຖຸຕົວຈິງ, ແຕ້ມຮູບເພື່ອຮັບໃຊ້ການສອນ, ຄວາມຮູ້ເບື້ອງຕົ້ນກ່ຽວກັບສິລະປະຫັດຖະກຳ ການປັ້ນ, ການພັບແບບຕ່າງໆ, ການຜະລິດ, ການນຳໃຊ້ ແລະ ການປົກປັກຮັກສາ |
| ວິທີດຳເນີນການສອນ<br>Methodology | ວິຊານີ້ຮຽນຢູ່ 10 ອາທິດ, ຮຽນ 4 ຊົ່ວໂມງຕໍ່ອາທິດ, ເຊິ່ງປະກອບມີ 8 ບົດ, ແຕ່ລະບົດມີຫຼາຍຫົວຂໍ້, ການຈັດກິດຈະກຳການຮຽນ-ການສອນເຊັ່ນ: ການອະທິບາຍ, ສົນທະນາ, ສາທິດ, ສອນທົດລອງ, ປະຕິບັດຕົວຈິງ, ການຈັດກິດຈະກຳກຸ່ມ, ກິດຈະກຳບຸກຄົນ. |

| | |
|---|---|
| ສື່ການຮຽນ-ການສອນ<br>Teaching Aids | - ປຶ້ມຄູ່ມືການຈັດກິດຈະກຳສິລະປະສ້າງສັນຊັ້ນອະນຸບານ<br>- ປຶ້ມແບບຮຽນວິຊາຫັດຖະກຳ ແລະ ວິທີສອນສິລະປະຫັດຖະກຳແຕ້ມຊັ້ນອະນຸບານ<br>- ວັດສະດຸສິລະປະກຳ, ຫັດຖະກຳ |
| ອາທິດທີ 1<br>Week 1 | **ບົດທີ 1**<br>**ຄວາມຮູ້ເບື້ອງຕົ້ນກ່ຽວກັບການແຕ້ມ**<br>1. ຄວາມໝາຍຂອງແຕ້ມ<br>2. ຈຸດປະສົງຂອງການແຕ້ມ<br>3. ຄວາມຮູ້ກ່ຽວກັບເສັ້ນພື້ນຖານ<br>3.1 ວິເຄາະເສັ້ນພື້ນຖານ<br>3.2 ວິເຄາະຮູບພື້ນຖານ |
| ອາທິດທີ 2<br>Week 2 | **ບົດທີ 2**<br>**ທິດສະດີສີ**<br>1. ຄວາມສຳຄັນຂອງແມ່ສີ<br>2. ແມ່ສີ<br>3. ວິທີປະສົມສີ<br>4. ການຈຳແນກສີ<br>4.1 ວິເຄາະສີວັນນະຮ້ອນ<br>4.2 ວິເຄາະສີວັນນະເຢັນ<br>5. ເຕັກນິກການລະບາຍສີ<br>6. ການຜະລິດສີຈາກທຳມະຊາດ<br>7. ການຫຼິ້ນສີແບບຕ່າງໆ |
| ອາທິດທີ 3<br>Week 3 | **ບົດທີ 3**<br>**ແຕ້ມວັດຖຸຕົວຈິງ**<br>1. ຫຼັກການ ແລະ ວິທີການແຕ້ມ<br>2. ຫຼັກການ ແລະ ວິທີການແຕ້ມຮູບປະກອບການສອນໃນຊັ້ນອະນຸບານ1,2.3<br>3. ຫຼັກການ ແລະ ວິທີການແຕ້ມຮູບເໝືອນ |
| ອາທິດທີ 4<br>Week 4 | **ບົດທີ 3 (ຕໍ່)**<br>**ແຕ້ມວັດຖຸຕົວຈິງ**<br>4. ວິທີແຕ້ມດອກໄມ້ ແລະ ໃບໄມ້<br>5. ການຂຶ້ນໂຄງຮ່າງ<br>6. ການລະບາຍສີ ແລະ ແສງເງົາ<br>7. ສິ່ງທີ່ຄວນເອົາໃຈໃສ່ |
| ອາທິດທີ 5 | **ບົດທີ 4** |

| | |
|---|---|
| Week 5 | **ການແຕ້ມຮູບເພື່ອຮັບໃຊ້ການສອນ**<br>1. ແຕ້ມຮູບຕ່າງໆ<br>2. ແຕ້ມຮູບປະກອບເລື່ອງ<br>3. ການແຕ້ມຕົວອັກສອນລາວ |
| ອາທິດທີ 6<br>Week 6 | **ບົດທີ 4 ( ຕໍ່ )**<br>**ການແຕ້ມຮູບເພື່ອຮັບໃຊ້ການສອນ**<br>4. ແຕ້ມປະດັບປດາ ແລະ ປະດິດຈາກວັດສະດຸເສດເຫຼືອ<br>4.1 ປະດັບປະດາພະນັງກຽດ<br>4.2 ປະດັບປະດາຮູບພື້ນຖານຕ່າງໆ<br>4.3 ປະດັບປະດາວັດສະດຸເສດເຫຼືອຕ່າງໆ |
| ອາທິດທີ 7<br>Week 7 | **ບົດທີ 5**<br>**ຄວາມຮູ້ເບື້ອງຕົ້ນກ່ຽວກັບສິລະປະຫັດຖະກຳ**<br>1. ຄວາມໝາຍຄວາມສຳຄັນຂອງສິລະປະຫັດຖະກຳ<br>2. ຈຸດປະສົງຂອງສິລະປະຫັດຖະກຳ, ອຸປະກອນຮັບໃຊ້ໃນວິຊາຫັດຖະກຳ<br>3. ສາຍພົວພັນລະຫວ່າງວິຊາຫັດຖະກຳກັບວິຊາອື່ນໆ ແລະ ກິດຈະກຳສຳລັບເດັກ. |
| ອາທິດທີ 8<br>Week 8 | **ບົດທີ 6**<br>**ການປັ້ນ**<br>1. ຄວາມໝາຍຂອງການປັ້ນ<br>2. ຈຸດປະສົງຂອງການປັ້ນ<br>3. ຄຸນປະໂຫຍດຂອງການປັ້ນ<br>4. ອຸປະກອນຂອງການປັ້ນ<br>5. ການປັ້ນຮູບຕ່າງໆ<br>6. ການຮ້ອຍ |
| ອາທິດທີ 9<br>Week 9 | **ບົດທີ 7**<br>**ການພັບແບບຕ່າງໆ**<br>1. ຄວາມໝາຍຄວາມສຳຄັນຂອງການພັບ<br>2. ວິທີພັບເຈ້ຍແບບຕ່າງໆ<br>3. ການຕັດຕາມແບບຕ່າງໆ<br>4. ການຕິດຕາມແບບຕ່າງໆ<br>5. ການຈີກຕາມແບບຕ່າງໆ |
| ອາທິດທີ 10<br>Week 10 | **ບົດທີ 8**<br>**ການຜະລິດ. ການນຳໃຊ້ ແລະ ການປົກປັກຮັກສາ**<br>1. ຄວາມໝາຍຄວາມສຳຄັນຂອງເກມການສຶກສາ<br>2. ຜະລິດເກມແບບຕ່າງໆ |

| | |
|---|---|
| | 3. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 1<br>4. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 2<br>5. ການຜະລິດເກມຕາມໜ່ວຍການສອນຂັ້ນອະນຸບານ 3<br>6. ຂຽນບົດລາຍງານກ່ຽວກັບການຮຽນໃນລາຍວິຊາ |
| ການປະເມີນຜົນການຮຽນ<br>Evaluation | 1. ການເຂົ້າຮ່ວມຮຽນ 10%<br>2. ກິດຈະກຳບຸກຄົນ 30%<br>3. ກິດຈະກຳກຸ່ມ 10%<br>4. ສອບເສັງກາງພາກ 20%<br>5. ສອບເສັງທ້າຍກາງ 30%<br>**ລວມ 100%** |
| ເອກະສານອ້າງອີງ<br>References | 1. ກະຊວງສຶກສາທິການ, ກົມສ້າງຄູ ປຶ້ມວິຊາ ແຕ້ມ ໂຮງຮຽນສາຍຄູລ້ຽງເດັກອະນຸບານຊັ້ນກາງ ປີ 1997<br>2. ກະຊວງສຶກສາທິການ ກົມສ້າງຄູ ປຶ້ມວິທີສອນສິລະປະແຕ້ມ ສາຍຄູອະນຸບານ ລະບົບ 11+1 ປີ 2000<br>3. ກະຊວງສຶກສາທິການ ກົມສ້າງຄູ ປຶ້ມແບບຮຽນວິຊາວິທີສອນຫັດຖະກຳແຕ້ມ ສາຍຄູ ອະນຸບານ ລະບົບ 11+3<br>4. ກະຊວງສຶກສາທິການ ກົມສ້າງຄູ ປຶ້ມວິທີສອນສິລະປະແຕ້ມ ສາຍຄູອະນຸບານ ລະບົບ 11+2<br>5. ກະຊວງສຶກສາທິການ ກົມສ້າງຄູ ປຶ້ມທິດສະດີສີໂຮງຮຽນວິຈິດຕະກຳກະຊວງວັດທະນາທຳ. |
| ຜູ້ຮຽບຮຽງ<br>Prepared by | ນາງ ລຳໄຊ ອິນທະວົງສາ<br>ເບີໂທ: 020 96617755 |
| ຜູ້ຮຽບຮຽງຄືນ<br>Revised by | ນາງ ອ່ອນສາ ວິລາວັນ<br>ເບີໂທ: 020 92268878 |
| ຜູ້ກວດແກ້<br>Edited by | |